# ຂໍ້ຕົກລົງ
# ວ່າດ້ວຍການນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ ສັດ ແລະ ຜະລິດຕະພັນສັດ

## ໝວດທີ 1
## ບົດບັນຍັດທົ່ວໄປ


ມາດຕາ 1 ຈຸດປະສົງ
ມາດຕາ 2 ການນຳເຂົ້າ, ການສົ່ງອອກ ແລະ ການສົ່ງຜ່ານ ສັດ ແລະ ຜະລິດຕະພັນສັດ
ມາດຕາ 3 ການອະທິບາຍຄຳສັບ
ມາດຕາ 4 ຫຼັກການ
ມາດຕາ 5 ຂອບເຂດການນຳໃຊ້


## ໝວດທີ 2
## ການນຳເຂົ້າ ສັດ ແລະ ຜະລິດຕະພັນສັດ


ມາດຕາ 6 ປະເພດການນຳເຂົ້າທີ່ຕ້ອງຂໍອະນຸຍາດ
ມາດຕາ 7 ການປະກອບເອກະສານ ແລະ ເງື່ອນໄຂສຳລັບການນຳເຂົ້າ
ມາດຕາ 8 ການກະກຽມກ່ອນການນຳເຂົ້າ
ມາດຕາ 9 ການປະຕິບັດຢູ່ດ່ານໃນເວລານຳເຂົ້າ
ມາດຕາ 10 ການໃຫ້ ສັດ ແລະ ຜະລິດຕະພັນສັດ ຜ່ານດ່ານ
ມາດຕາ 11 ການໂຈະ ຫຼື ຍົກເລີກ ໃບອະນຸຍາດນຳເຂົ້າ
ມາດຕາ 12 ການຕິດຕາມກວດກາຫຼັງການນຳເຂົ້າ


## ໝວດທີ 3
## ການສົ່ງອອກ ສັດ ແລະ ຜະລິດຕະພັນສັດ


ມາດຕາ 13 ການກະກຽມກ່ອນການສົ່ງອອກ
ມາດຕາ 14 ການປະຕິບັດຢູ່ດ່ານໃນເວລາສົ່ງອອກ
ມາດຕາ 15 ການປະຕິເສດການສົ່ງອອກ


## ໝວດທີ 4
## ການຂົນສົ່ງຜ່ານສັດ ແລະ ຜະລິດຕະພັນສັດ


ມາດຕາ 16 ການຂໍອະນຸຍາດສົ່ງຜ່ານ
ມາດຕາ 17 ການປະຕິບັດຢູ່ດ່ານໃນເວລານຳເຂົ້າເພື່ອສົ່ງຜ່ານຢູ່ດ່ານ
ມາດຕາ 18 ມາດຕະການຄວບຄຸມການສົ່ງຜ່ານ
ມາດຕາ 19 ການປະຕິເສດການສົ່ງຜ່ານ


## ໝວດທີ 5
## ຂໍ້ຫ້າມ


ມາດຕາ 20 ຂໍ້ຫ້າມທົ່ວໄປ
ມາດຕາ 21 ຂໍ້ຫ້າມສຳລັບພະນັກງານ ແລະ ເຈົ້າໜ້າທີ່

## ໝວດທີ 6
## ການຄຸ້ມຄອງ ແລະ ກວດກາ ວຽກງານນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ ສັດ ແລະ ຜະລິດຕະພັນສັດ


ມາດຕາ 22 ການຄຸ້ມຄອງ ແລະ ກວດກາ ວຽກງານນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານສັດ ແລະ ຜະລິດຕະພັນສັດ

ມາດຕາ 23 ສິດ ແລະ ໜ້າທີ່ ຂອງ ກົມລ້ຽງສັດ ແລະ ການປະມົງ

ມາດຕາ 24 ສິດ ແລະ ໜ້າທີ່ ຂອງ ຂະແໜງລ້ຽງສັດ ແລະ ການປະມົງແຂວງ ແລະ ນະຄອນຫຼວງ

ມາດຕາ 25 ສິດ ແລະ ໜ້າທີ່ ຂອງ ຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ, ເທດສະບານ, ນະຄອນ

ມາດຕາ 26 ສິດ ແລະ ໜ້າທີ່ຂອງ ດ່ານກວດກາສັດຕະວະແພດ

ມາດຕາ 27 ສິດ ແລະ ໜ້າທີ່ຂອງ ເຈົ້າໜ້າທີ່ສັດຕະວະແພດ

ມາດຕາ 28 ການກວດກາ


## ໝວດທີ 7
## ບົດບັນຍັດສຸດທ້າຍ


ມາດຕາ 29 ການຈັດຕັ້ງປະຕິບັດ

ມາດຕາ 30 ຜົນສັກສິດ

ເອກະສານຊ້ອນທ້າຍ 1: ລາຍການປະເພດ ສັດ ແລະ ຜະລິດຕະພັນສັດທີ່ຕ້ອງຂໍອະນຸຍາດ;

ເອກະສານຊ້ອນທ້າຍ 2: ເງື່ອນໄຂໃນການນຳເຂົ້າ ສັດ ແລະ ຜະລິດຕະພັນສັດ;

ເອກະສານຊ້ອນທ້າຍ 3: ແບບພິມຄຳຮ້ອງຂໍອະນຸຍາດນຳເຂົ້າ, ສົ່ງອອກ, ສົ່ງຜ່ານສັດ ແລະ ຜະລິດຕະພັນສັດ;

ເອກະສານຊ້ອນທ້າຍ 4: ແບບພິມໃບອະນຸຍາດນຳເຂົ້າ, ສົ່ງອອກ, ສົ່ງຜ່ານ ສັດ ແລະ ຜະລິດຕະພັນສັດ;

ເອກະສານຊ້ອນທ້າຍ 5: ແບບພິມໃບຢັ້ງຢືນສຸຂະພາບສັດ ແລະ ສຸຂານາໄມ;

ເອກະສານຊ້ອນທ້າຍ 6: ແບບພິມໃບຢັ້ງຢືນການກວດກາຢູ່ດ່ານ;

ເອກະສານຊ້ອນທ້າຍ 7: ແບບພິມໃບຢັ້ງຢືນການກັກກັນສັດ.

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້ ເລກທີ 0795 /ກປ

ນະຄອນຫຼວງວຽງຈັນ, ວັນທີ 18/04/19

# ຂໍ້ຕົກລົງ
## ວ່າດ້ວຍການນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ ສັດ ແລະ ຜະລິດຕະພັນສັດ

- ອີງຕາມກົດໝາຍ ວ່າດ້ວຍການລ້ຽງສັດ ແລະ ການສັດຕະວະແພດ ເລກທີ 08/ສພຊ, ລົງວັນທີ 11 ພະຈິກ 2016;
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ເລກທີ 99/ນຍ, ລົງວັນທີ 09 ມີນາ 2017 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງກະສິກຳ ແລະ ປ່າໄມ້;
- ອີງຕາມ ໜັງສືສະເໜີຂອງກົມນະໂຍບາຍ ແລະ ນິຕິກຳ ເລກທີ 150/ກຍນ, ລົງວັນທີ 05 ເມສາ 2019.

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບ ການຄວບຄຸມການນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ ສັດມີຊີວິດ ແລະ ຜະລິດຕະພັນສັດ ຢູ່ ສປປ ລາວ ເພື່ອປ້ອງກັນ ແລະ ສະກັດກັ້ນ ການນຳເຂົ້າ, ກໍ່ຕິດ, ແຜ່ກະຈາຍ ແລະ ການລະບາດຂອງພະຍາດສັດ ແນໃສ່ປົກປ້ອງຊີວິດ, ສຸຂະພາບຂອງຄົນ, ສັດ ແລະ ສິ່ງແວດລ້ອມ ໃຫ້ມີຄວາມປອດໄພ ປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດສັນຍາສຸຂານາໄມ ແລະ ສຸຂານາໄມພືດ ແລະ ສັນຍາສາກົນທີ່ກ່ຽວຂ້ອງໃຫ້ສອດຄ່ອງ ແລະ ມີປະສິດທິພາບ.

**ມາດຕາ 2 ການນຳເຂົ້າ, ການສົ່ງອອກ ແລະ ການສົ່ງຜ່ານ ສັດ ແລະ ຜະລິດຕະພັນສັດ**

ການນຳເຂົ້າ ສັດ ແລະ ຜະລິດຕະພັນສັດ ແມ່ນການຈັດຕັ້ງປະຕິບັດ ບັນດາຂັ້ນຕອນການອະນຸຍາດຂອງອົງການຄຸ້ມຄອງວຽກງານລ້ຽງສັດ ແລະ ສັດຕະວະແພດ ໃຫ້ແກ່ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ນຳສັດ ຫຼື ຜະລິດຕະພັນສັດ ຈາກຕ່າງປະເທດ ເຂົ້າມາຍັງ ສປປ ລາວ ໂດຍຜ່ານດ່ານກວດກາສັດຕະວະແພດ.

ການສົ່ງອອກ ສັດ ແລະ ຜະລິດຕະພັນສັດ ແມ່ນການຈັດຕັ້ງປະຕິບັດ ບັນດາຂັ້ນຕອນການອະນຸຍາດຂອງອົງການຄຸ້ມຄອງວຽກງານລ້ຽງສັດ ແລະ ສັດຕະວະແພດ ໃຫ້ແກ່ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ນຳສັດ ຫຼື ຜະລິດຕະພັນສັດ ອອກຈາກ ສປປ ລາວ ໄປຍັງຕ່າງປະເທດ ໂດຍຜ່ານດ່ານກວດກາສັດຕະວະແພດ.

ການສົ່ງຜ່ານສັດ ແລະ ຜະລິດຕະພັນສັດ ແມ່ນການຈັດຕັ້ງປະຕິບັດ ບັນດາຂັ້ນຕອນການອະນຸຍາດຂອງອົງການຄຸ້ມຄອງວຽກງານລ້ຽງສັດ ແລະ ສັດຕະວະແພດ ໃຫ້ແກ່ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ນຳສັດ ຫຼື ຜະລິດຕະພັນສັດ ຜ່ານ ສປປ ລາວ ໄປຍັງປະເທດທີ່ສາມ ໂດຍຜ່ານດ່ານກວດກາສັດຕະວະແພດ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ສິນຄ້າທີ່ຖືກຂົນສົ່ງ** ໝາຍເຖິງ ລາຍການຜະລິດຕະພັນສິນຄ້າກ່ຽວກັບສັດ ທີ່ຖືກເຄື່ອນຍ້າຍຈາກປະເທດໜຶ່ງໄປອີກປະເທດໜຶ່ງ ທີ່ໄດ້ມີການບັນຈຸ, ຫຸ້ມຫໍ່ ແລະ ມີເອກະສານຢັ້ງຢືນດ້ານສຸຂະພາບ ຫຼື ສຸ ຂານາໄມຈາກອົງການຄຸ້ມຄອງຂອງປະເທດຕົ້ນທາງ;
2. **ອົງການຄຸ້ມຄອງ ວຽກງານລ້ຽງສັດ ແລະ ສັດຕະວະແພດ ຂັ້ນແຂວງ ທີ່ໄດ້ຮັບມອບໝາຍ** ໝາຍເຖິງ ພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງ ທີ່ກົມລ້ຽງສັດ ແລະ ການປະມົງ ໄດ້ມອບໝາຍໃຫ້ເປັນຜູ້ມີສິດອອກໃບອະນຸຍາດຕ່າງໆ ພາຍໃຕ້ຂໍ້ຕົກລົງສະບັບນີ້;
3. **ອົງການຄຸ້ມຄອງ ວຽກງານລ້ຽງສັດ ແລະ ສັດຕະວະແພດ ຂັ້ນສູນກາງ** ໝາຍເຖິງ ແມ່ນກົມລ້ຽງສັດ ແລະ ການປະມົງ ຂອງກະຊວງກະສິກຳ ແລະ ປ່າໄມ້ ແລະ ຂັ້ນແຂວງ ແມ່ນພະແນກກະສິກຳ ແລະ ປ່າໄມ້ແຂວງ ທີ່ຖືກກຳນົດໂດຍອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການ ສັດຕະວະແພດ ຂັ້ນສູນກາງ ຫຼື ການຈັດຕັ້ງອື່ນທີ່ໄດ້ຮັບການມອບໝາຍ;
4. **ເງື່ອນໄຂການນຳເຂົ້າ** ໝາຍເຖິງ ຂໍ້ກຳນົດໃດໜຶ່ງ ທີ່ອົງການຄຸ້ມຄອງວຽກງານລ້ຽງສັດ ແລະ ສັດຕະວະແພດ ຂອງ ສປປ ລາວ ສ້າງຂຶ້ນ ເພື່ອຄວບຄຸມການນຳເຂົ້າ ສັດ ແລະ ຜະລິດຕະພັນສັດ;
5. **ການອະນຸຍາດນຳເຂົ້າ** ໝາຍເຖິງ ການອອກໃບແຈ້ງອະນຸມັດການນຳເຂົ້າ ຂອງອົງການຄຸ້ມຄອງວຽກງານລ້ຽງສັດ ແລະ ສັດຕະວະແພດ ໃຫ້ແກ່ຜູ້ສະເໜີຂໍນຳເຂົ້າ ສັດ ແລະ ຜະລິດຕະພັນສັດທີ່ໄດ້ປະຕິບັດຕາມເງື່ອນໄຂການນຳເຂົ້າ ທີ່ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້;
6. **ອົງການສຸຂະພາບສັດສາກົນ (OIE)** ໝາຍເຖິງ ອົງການຈັດຕັ້ງສາກົນ ທີ່ຮັບຜິດຊອບວຽກງານສຸຂະພາບສັດ ແລະ ສັດນ້ຳ;
7. **ເຊື້ອພະຍາດ** ໝາຍເຖິງ ຈຸລິນຊີ, ແມ່ກາຝາກ ແລະ ເຊື້ອລາ ໃດໜຶ່ງ ທີ່ເປັນສາເຫດ ຫຼື ເປັນຕົວປະກອບ ເຮັດໃຫ້ເກີດພະຍາດໃດໜຶ່ງ;
8. **ພະຍາດສັດທີ່ຈຳເປັນຕ້ອງແຈ້ງ** ໝາຍເຖິງ ພະຍາດສັດ ທີ່ສາມາດຕິດຕໍ່ຈາກສັດສູ່ສັດ ຫຼື ຈາກສັດສູ່ຄົນ ຊຶ່ງມີການແຜ່ລາມໄວ, ສ້າງຜົນກະທົບທາງລົບຕໍ່ຊີວິດ, ເສດຖະກິດ ແລະ ສັງຄົມ;
9. **ການປະເມີນຄວາມສ່ຽງ** ໝາຍເຖິງ ການປະເມີນຜົນ ເພື່ອຊອກຫາຄວາມເປັນໄປໄດ້ ກ່ຽວກັບຜົນກະທົບທາງດ້ານຊີວະ, ເສດຖະກິດ ທີ່ເກີດຈາກການນຳເຂົ້າ ຊຶ່ງອາດເປັນອັນຕະລາຍ ຫຼື ແຜ່ກະຈາຍ ຢູ່ດິນແດນຂອງ ສປປ ລາວ;
10. **ມາດຕະການດ້ານສຸຂານາໄມ** ໝາຍເຖິງ ບັນດາມາດຕະການ ທີ່ກຳນົດຂຶ້ນ ເພື່ອປົກປ້ອງສຸຂະພາບຂອງຄົນ, ສັດ ຫຼື ສິ່ງທີ່ມີຊີວິດຢູ່ໃນດິນແດນຂອງ ສປປ ລາວ ຈາກຄວາມສ່ຽງເກີດຂຶ້ນຈາກການນຳເຂົ້າ, ການເກີດຂຶ້ນ ຫຼື ການແຜ່ກະຈາຍ ຂອງສິ່ງອັນຕະລາຍ;
11. **ການຂົນສົ່ງ** ໝາຍເຖິງ ວິທີການຂົນສົ່ງສັດ ແລະ ຜະລິດຕະພັນສັດ ທາງບົກ, ທາງອາກາດ ຫຼື ທາງນ້ຳ;
12. **ເຈົ້າໜ້າທີ່ປະຈຳດ່ານ** ໝາຍເຖິງ ພະນັກງານສັດຕະວະແພດ ຫຼື ພະນັກງານ ທີ່ໄດ້ຮັບການມອບໝາຍຈາກອົງການຄຸ້ມຄອງວຽກງານລ້ຽງສັດ ແລະ ສັດຕະວະແພດ ໃຫ້ປະຕິບັດໜ້າທີ່ປະຈຳຢູ່ດ່ານກວດກາສັດຕະວະແພດ.

**ມາດຕາ 4 ຫຼັກການ**

ຫຼັກການພື້ນຖານ ທີ່ນຳໃຊ້ໃນການວາງມາດຕະການຄວບຄຸມ ການນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ ສັດ ແລະ ຜະລິດຕະພັນສັດ ມີດັ່ງນີ້:

1. ສອດຄ່ອງ ກັບ ກົດໝາຍ, ນະໂຍບາຍ ແລະ ລະບຽບການຂອງ ສປປ ລາວ;
2. ຮັບປະກັນ ຄຸນນະພາບ ແລະ ຄວາມປອດໄພ ຕໍ່ສຸຂະພາບສັດ ແລະ ຜູ້ບໍລິໂພກ;
3. ປະຕິບັດ ຢ່າງເປັນເອກະພາບ, ໂປ່ງໃສ, ຍຸຕິທຳ ແລະ ສາມາດກວດກາໄດ້;
4. ຮັບປະກັນ ບໍ່ສ້າງສິ່ງກີດຂວາງທີ່ບໍ່ຈຳເປັນ ຕໍ່ການຄ້າ ແລະ ບໍ່ເລືອກປະຕິບັດ;
5. ສອດຄ່ອງກັບມາດຕະຖານດ້ານເຕັກນິກ ແລະ ຄຳແນະນຳຂອງອົງການຈັດຕັ້ງສາກົນທີ່ກ່ຽວຂ້ອງກຳນົດ;
6. ສອດຄ່ອງກັບ ສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

**ມາດຕາ 5 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ກ່ຽວຂ້ອງກັບການນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ ສັດ ແລະ ຜະລິດຕະພັນສັດ ໃນ ສປປ ລາວ.

## ໝວດທີ 2
## ການນຳເຂົ້າ ສັດ ແລະ ຜະລິດຕະພັນສັດ

**ມາດຕາ 6 ປະເພດການນຳເຂົ້າທີ່ຕ້ອງຂໍອະນຸຍາດ**

ສັດ ແລະ ຜະລິດຕະພັນສັດ ທີ່ຕ້ອງໄດ້ຂໍອະນຸຍາດນຳເຂົ້າ ແມ່ນປະເພດສັດ ແລະ ຜະລິດຕະພັນສັດ ເພື່ອຈຸດປະສົງເປັນທຸລະກິດ-ການຄ້າ ຕາມທີ່ໄດ້ກຳນົດໄວ້ໃນເອກະສານຊ້ອນທ້າຍ 1 ຂອງຂໍ້ຕົກລົງສະບັບນີ້.

ການນຳເຂົ້າຜະລິດຕະພັນສັດຕິດຕາມຕົວ ເພື່ອບໍລິໂພກພາຍໃນຄອບຄົວ ແມ່ນບໍ່ໄດ້ຂໍໃບອະນຸຍາດນຳເຂົ້າ ແຕ່ຕ້ອງໄດ້ແຈ້ງສິນຄ້າ ຕໍ່ເຈົ້າໜ້າທີ່ກວດກາປະຈຳດ່ານ ເພື່ອດຳເນີນການກວດກາ, ບັນທຶກ ຫຼື ນຳໃຊ້ມາດຕະການທີ່ຈຳເປັນ ຕາມທີ່ກົມລ້ຽງສັດ ແລະ ການປະມົງ ກຳນົດ.

**ມາດຕາ 7 ການປະກອບເອກະສານ ແລະ ເງື່ອນໄຂສຳລັບການນຳເຂົ້າ**

ເອກະສານສຳລັບການຂໍໃບອະນຸຍາດນຳເຂົ້າ ມີດັ່ງນີ້:

1. ໃບຄຳຮ້ອງຂໍອະນຸຍາດນຳເຂົ້າ ຕາມທີ່ໄດ້ກຳນົດໄວ້ໃນເອກະສານຊ້ອນທ້າຍ 3 ຂອງຂໍ້ຕົກລົງສະບັບນີ້;
2. ສຳເນົາ ບັດປະຈຳຕົວ ຫຼື ສຳມະໂນຄົວ;
3. ສຳເນົາ ໜັງສືເດີນທາງ (ຖ້າເປັນຄົນຕ່າງປະເທດ);
4. ໃບມອບສິດ (ຖ້າໃຫ້ຜູ້ອື່ນມາແລ່ນເອກະສານແທນ);
5. ສຳເນົາ ໃບທະບຽນວິສາຫະກິດ.

**ເອກະສານເພີ່ມເຕີມອື່ນ ໃນມື້ນຳສິນຄ້າເຂົ້າຕົວຈິງ ມີ ດັ່ງນີ້:**

1. ໃບຢັ້ງຢືນສຸຂະພາບສັດ ຫຼື ສຸຂານາໄມສັດ ຈາກອົງການຄຸ້ມຄອງວຽກງານສັດຕະວະແພດຂອງປະເທດຕົ້ນທາງ;
2. ສຳເນົາ ໃບຂົນສົ່ງສິນຄ້າ ຫຼື Bill of Lading/Airway Bill ກໍລະນີຂົນສົ່ງທາງທ່າເຮືອ ຫຼື ເຮືອບິນ;

3. ສຳເນົາ ໃບຢັ້ງຢືນກຳມະພັນສັດ ຖ້ານຳສັດມາເປັນແນວພັນ;
4. ສຳເນົາ ໃບຢັ້ງຢືນການສັກຢາກັນພະຍາດສັດ (ໃນກໍລະນີທີ່ ສປປ ລາວ ຮຽກຮ້ອງ).

ນອກຈາກເອກະສານປະກອບໃນການຂໍອະນຸຍາດນຳເຂົ້າທີ່ກຳນົດໃນວັກທີ 1 ແລະ 2 ຂອງມາດຕານີ້ ຜູ້ນຳເຂົ້າ ຕ້ອງປະຕິບັດຕາມເງື່ອນໄຂການນຳເຂົ້າສັດ ແລະ ຜະລິດຕະພັນສັດ ທີ່ໄດ້ກຳນົດໄວ້ໃນເອກະສານຊ້ອນທ້າຍ 2 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 8 ການກະກຽມກ່ອນການນຳເຂົ້າ**

ຜູ້ທີ່ມີຈຸດປະສົງ ນຳເຂົ້າສັດ ແລະ ຜະລິດຕະພັນສັດ ຕ້ອງກະກຽມ ດັ່ງນີ້:

1. ພົວພັນ ເອົາຂໍ້ມູນ, ລະບຽບການ ແລະ ຄຳຮ້ອງຂໍນຳເຂົ້າ ສັດ ແລະ ຜະລິດຕະພັນສັດ ຢູ່ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ, ເທດສະບານ, ນະຄອນ, ພະແນກກະສິກຳ ແລະ ປ່າໄມ້ແຂວງ ແລະ ນະຄອນຫຼວງ, ດ່ານກວດກາສັດຕະວະແພດ, ກົມລ້ຽງສັດ ແລະ ການປະມົງ ຫຼື ເວັບໄຊ www.dlf.maf.gov.la ຫຼື www.laotradeportal.gov.la;
2. ຍື່ນຄຳຮ້ອງ ຕໍ່ກົມລ້ຽງສັດ ແລະ ການປະມົງ ຫຼື ດ່ານກວດກາສັດຕະວະແພດສາກົນ ບ່ອນທີ່ຈະນຳເຂົ້າ ຕາມແບບພິມ ທີ່ໄດ້ກຳນົດໄວ້ໃນເອກະສານຊ້ອນທ້າຍ 3 ຂອງຂໍ້ຕົກລົງສະບັບນີ້;
3. ກົມລ້ຽງສັດ ແລະ ການປະມົງ ປະເມີນຄວາມສ່ຽງ ແລະ ພິຈາລະນາ ອອກໃບອະນຸຍາດ ຕາມແບບພິມ ທີ່ໄດ້ກຳນົດໄວ້ໃນເອກະສານຊ້ອນທ້າຍ 4 ຂອງຂໍ້ຕົກລົງສະບັບນີ້ ພາຍໃນ ຫ້າວັນລັດຖະການ;
4. ສົ່ງໃບອະນຸຍາດນຳເຂົ້າ ແລະ ເງື່ອນໄຂ ເຖິງຜູ້ສົ່ງອອກ ເພື່ອກະກຽມສິນຄ້າ ແລະ ຂໍອະນຸຍາດຈາກອົງການຄຸ້ມຄອງວຽກງານສັດຕະວະແພດຂອງປະເທດຕົ້ນທາງ ໃຫ້ສອດຄ່ອງກັບເງື່ອນໄຂຂອງ ສປປ ລາວ ພາຍໃນ ເກົ້າສິບວັນ;
5. ແຈ້ງເອກະສານ, ວັນ, ເວລາ ທີ່ແນ່ນອນສຳລັບການນຳເຂົ້າ ຕໍ່ດ່ານກວດກາສັດຕະວະແພດສາກົນບ່ອນທີ່ຈະນຳເຂົ້າ ຢ່າງໜ້ອຍ ໜຶ່ງວັນ ກ່ອນມື້ນຳເຂົ້າ ເພື່ອກວດກາ ແລະ ຢັ້ງຢືນຄວາມຖືກຕ້ອງຂອງເອກະສານ ໂດຍການອອກໃບຢັ້ງຢືນການກວດກາເອກະສານຢູ່ດ່ານ. ຖ້າເອກະສານບໍ່ຖືກຕ້ອງ ຫຼື ບໍ່ຄົບຖ້ວນ ໃຫ້ຜູ້ຂໍອະນຸຍາດນຳໄປປະກອບໃຫ້ຖືກຕ້ອງ.

**ມາດຕາ 9 ການປະຕິບັດຢູ່ດ່ານໃນເວລານຳເຂົ້າ**

ໃນເວລານຳເຂົ້າສັດ ແລະ ຜະລິດຕະພັນສັດຢູ່ດ່ານ ໃຫ້ປະຕິບັດ ດັ່ງນີ້:

1. ຜູ້ນຳເຂົ້າ ແຈ້ງໃບຢັ້ງຢືນການກວດກາເອກະສານຢູ່ດ່ານ, ລາຍການ ສັດ ແລະ ຜະລິດຕະພັນສັດ ຕໍ່ເຈົ້າໜ້າທີ່ສັດຕະວະແພດປະຈຳດ່ານ;
2. ເຈົ້າໜ້າທີ່ສັດຕະວະແພດປະຈຳດ່ານ ບັນທຶກຂໍ້ມູນກ່ຽວກັບສັດ ແລະ ຜະລິດຕະພັນສັດ ເຂົ້າໃນຖານຂໍ້ມູນ ພ້ອມທັງດຳເນີນການກວດກາ ແລະ ອອກ ໃບຢັ້ງຢືນການກວດກາຕາມແບບພິມທີ່ກຳນົດໄວ້ໃນເອກະສານຊ້ອນທ້າຍ 6 ຂອງຂໍ້ຕົກລົງສະບັບນີ້, ສຳເນົາໄວ້ ໜຶ່ງສະບັບ ແລະ ແຈ້ງໃຫ້ຜູ້ນຳເຂົ້າຈ່າຍຄ່າທຳນຽມ ແລະ ບໍລິການຕາມລະບຽບການ ແລ້ວຈຶ່ງອະນຸຍາດໃຫ້ເຄື່ອນຍ້າຍສິນຄ້າໄປຫາພາກສ່ວນພາສີ ຫຼື ພາກສ່ວນອື່ນທີ່ກ່ຽວຂ້ອງ. ໃນກໍລະນີພົບ ເອກະສານມີການດັດ ແກ້ເນື້ອໃນ, ປອມລາຍເຊັນ ຫຼື ຕາປະທັບ ເຈົ້າໜ້າທີ່ສັດຕະວະແພດປະຈຳດ່ານ ຕ້ອງປະຕິເສດການນຳເຂົ້າ ພ້ອມທັງກັກສິນຄ້ານັ້ນໄວ້ ເພື່ອດຳເນີນການກວດກາ, ສືບສວນ-ສອບສວນ ແລະ ລາຍງານໃຫ້ ກົມລ້ຽງສັດ ແລະ ການປະມົງ ແລະ ພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະ ຄອນຫຼວງ ຮັບຊາບໂດຍດ່ວນ;

3. ໃນກໍລະນີສິງໄສ ສັດ ຫຼື ຜະລິດຕະພັນສັດ ຫຼື ສ່ວນໃດສ່ວນໜຶ່ງຂອງສິນຄ້າດັ່ງກ່າວ ຕິດ ຫຼື ປົນເປື້ອນດ້ວຍພະຍາດທີ່ຢູ່ໃນບັນຊີລາຍຊື່ພະຍາດສັດທີ່ຈຳເປັນຕ້ອງແຈ້ງ, ໃຫ້ເຈົ້າໜ້າທີ່ສັດຕະວະ ແພດປະຈຳດ່ານ ແຈ້ງໃຫ້ຜູ້ນຳເຂົ້າ ນຳສິນຄ້າໄປກັກກັນຢູ່ສະຖານທີ່ກັກກັນ, ແນະນຳແຜນການຕິດຕາມ, ກັກກັນ ແລະ ນຳໃຊ້ມາດຕະການດ້ານວິຊາການ ໃຫ້ແກ່ຜູ້ນຳເຂົ້າຊາບ ພ້ອມທັງປະຕິບັດມາດຕະການໃດໜຶ່ງ ໂດຍດ່ວນ ດັ່ງນີ້:
   - ເກັບ ແລະ ສິ່ງຕົວຢ່າງ ຂອງສັດ ແລະ ຜະລິດຕະພັນສັດ ນັ້ນ ໄປວິໄຈ;
   - ດຳເນີນການອະນາໄມ ຂ້າເຊື້ອພາຫານະຂົນສົ່ງ, ເຄື່ອງນຸ່ງ ແລະ ເກີບ ຂອງຜູ້ຂົນສົ່ງ ແລະ ກຳມະກອນ;
   - ລາຍງານຜົນການປະຕິບັດມາດຕະການທັງໝົດໃຫ້ ກົມລ້ຽງສັດ ແລະ ການປະມົງ, ພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງ ແລະ ຜູ້ນຳເຂົ້າ ຊາບ ພາຍໃນຊາວສີ່ຊົ່ວໂມງ.
4. ພາຍຫຼັງສຳເລັດການວິໄຈ, ເຈົ້າໜ້າທີ່ສັດຕະວະແພດປະຈຳດ່ານ ແຈ້ງຜົນຂອງການວິໄຈໃຫ້ຜູ້ນາເຂົ້າຊາບ. ກໍລະນີ ພົບພະຍາດສັດທີ່ຈຳເປັນຕ້ອງແຈ້ງ, ຢາ ຫຼື ສານຕົກຄ້າງທີ່ເປັນອັນຕະລາຍ, ເຈົ້າໜ້າທີ່ສັດຕະວະແພດປະຈຳດ່ານ ຕ້ອງນຳໃຊ້ມາດຕະການ ໃດໜຶ່ງ ດັ່ງນີ້:
   - ກັກ ຫຼື ກັກກັນ ສັດ ຫຼື ຜະລິດຕະພັນສັດ;
   - ສົ່ງສິນຄ້າກັບຄືນປະເທດສົ່ງອອກ;
   - ບຳບັດ, ອະນາໄມ ແລະ ຂ້າເຊື້ອພະຍາດທີ່ຕິດ ຫຼື ປົນເປື້ອນມານຳສິນຄ້າ ແລະ ວັດຖຸປະກອນ ທີ່ກ່ຽວຂ້ອງ;
   - ທຳລາຍສິນຄ້າດັ່ງກ່າວຕາມຫຼັກວິຊາການ;
   - ລາຍງານໃຫ້ ພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງ ແລະ ກົມລ້ຽງສັດ ແລະ ການປະມົງ ຮັບຊາບ ເພື່ອແຈ້ງຂໍ້ມູນໄປຍັງ ອົງການສຸຂະພາບສັດສາກົນ, ອົງການຈັດຕັ້ງທີ່ກ່ຽວຂ້ອງ ແລະ ປະເທດທີ່ສົ່ງອອກຊາບ ພາຍໃນ ຊາວສີ່ຊົ່ວໂມງ.

**ມາດຕາ 10 ການໃຫ້ ສັດ ແລະ ຜະລິດຕະພັນສັດ ຜ່ານດ່ານ**

ພາຍຫຼັງ ເຈົ້າໜ້າທີ່ສັດຕະວະແພດປະຈຳດ່ານ ໄດ້ດຳເນີນການກວດກາເອກະສານທີ່ກ່ຽວຂ້ອງ, ສິນຄ້າ ແລະ ອອກໃບຢັ້ງຢືນການກວດກາແລ້ວ, ເຈົ້າໜ້າທີ່ສັດຕະວະແພດປະຈຳດ່ານ ຕ້ອງປ່ອຍສັດ ແລະ ຜະລິດຕະພັນສັດ ພ້ອມທັງ ແນະນຳໃຫ້ຜູ້ນຳເຂົ້າ ໄປແຈ້ງເອກະສານຕໍ່ເຈົ້າໜ້າທີ່ພາສີ ເພື່ອດຳເນີນຕາມລະບຽບການ.

ກໍລະນີ ມີຄວາມຈຳເປັນຕ້ອງໄດ້ກວດກາຫຼັງການນຳເຂົ້າ ເຈົ້າໜ້າທີ່ສັດຕະວະແພດປະຈຳດ່ານ ຕ້ອງແຈ້ງໃຫ້ຜູ້ນຳເຂົ້າ ເຄື່ອນຍ້າຍສັດ ແລະ ຜະລິດຕະພັນສັດ ໄປຫາສະຖານທີ່ກັກກັນ ຫຼື ສະຖານທີ່ອື່ນ ທີ່ອົງການຄຸ້ມຄອງວຽກງານ ລ້ຽງສັດ ແລະ ສັດຕະວະແພດ ຮັບຮອງ ເພື່ອດຳເນີນການຕິດຕາມກວດກາ ຕາມໄລຍະເວລາທີ່ກຳນົດ.

**ມາດຕາ 11 ການໂຈະ ຫຼື ຍົກເລີກ ໃບອະນຸຍາດນຳເຂົ້າ**

ດ່ານກວດກາສັດຕະວະແພດ ສະເໜີ ກົມລ້ຽງສັດ ແລະ ການປະມົງ ເພື່ອພິຈາລະນາ ໂຈະ ຫຼື ຍົກເລີກໃບອະນຸຍາດນຳເຂົ້າ ຖ້າເຫັນວ່າມີການລະເມີດ ກໍລະນີໃດໜຶ່ງ ດັ່ງນີ້:

1. ກວດພົບ ປະເພດ ຫຼື ປະລິມານສິນຄ້າ ບໍ່ຖືກຕ້ອງກັບຂໍ້ມູນທີ່ໄດ້ກຳນົດໄວ້ ໃນໃບອະນຸຍາດນຳເຂົ້າ;
2. ນຳສິນຄ້າເຂົ້າດ່ານ ທີ່ບໍ່ຖືກຕາມການກຳນົດໃນໃບອະນຸຍາດນຳເຂົ້າ;

3. ນຳໃຊ້ໃບອະນຸຍາດນຳເຂົ້າທີ່ໝົດອາຍຸການນຳໃຊ້;
4. ສົງໄສ ຕິດ ຫຼື ປົນເປື້ອນເຊື້ອພະຍາດ ທີ່ກຳນົດຢູ່ໃນບັນຊີລາຍຊື່ພະຍາດສັດທີ່ຈຳເປັນຕ້ອງແຈ້ງ;
5. ກວດພົບພະຍາດຊະນິດໃໝ່ ຫຼື ພະຍາດທີ່ບໍ່ຮູ້ຈັກ ຫຼື ພະຍາດທີ່ນອນຢູ່ໃນບັນຊີລາຍຊື່ພະຍາດສັດທີ່ຈຳເປັນຕ້ອງແຈ້ງ;
6. ມີການຢັ້ງຢືນວ່າສິນຄ້ານຳເຂົ້າ ມີການປົນເປື້ອນດ້ວຍຢາ, ສານກະຕຸ້ນ ຫຼື ສານເຄມີທີ່ເປັນອັນຕະລາຍເກີນລະດັບຄວາມປອດໄພ ຕໍ່ສຸຂະພາບ ຂອງຄົນ, ສັດ ແລະ ສິ່ງແວດລ້ອມ;
7. ມີການລາຍງານການເກີດພະຍາດລະບາດສັດ ຢູ່ປະເທດສົ່ງອອກ.

**ມາດຕາ 12 ການຕິດຕາມກວດກາຫຼັງການນຳເຂົ້າ**

ການຕິດຕາມກວດກາຫຼັງການນຳເຂົ້າ ໃຫ້ດຳເນີນໄດ້ ໃນກໍລະນີ ທີ່ມີຄວາມຈຳເປັນ ດັ່ງນີ້:

1. ມີການກັກກັນສັດ ທີ່ພົບອາການສົງໄສເກີດພະຍາດທີ່ຈຳເປັນຕ້ອງແຈ້ງ ຫຼື ມີການສົງໄສພົບສິ່ງທີ່ເປັນອັນຕະລາຍໃນຜະລິດຕະພັນສັດ ຊຶ່ງຕ້ອງໄດ້ຕິດຕາມກວດກາ ແລະ ເກັບຕົວຢ່າງນຳໄປວິໄຈ;
2. ສັດໄດ້ຮັບບາດເຈັບ ຫຼື ມີອາການຜິດປົກກະຕິ ຈາກການຂົນສົ່ງ ຊຶ່ງຕ້ອງໄດ້ຕິດຕາມ, ພັກຜ່ອນ, ຟື້ນຟູ ແລະ ປິ່ນປົວເປັນການສະເພາະ;
3. ສັດຕ້ອງໄດ້ສັກຢາກັນພະຍາດໃດໜຶ່ງ ເພື່ອເຮັດໃຫ້ມີພູມຄຸ້ມກັນກ່ອນ;
4. ສັດຕ້ອງໄດ້ກັກກັນຢູ່ສະຖານທີ່ກັກກັນ ຫຼື ສະຖານທີ່ໃດໜຶ່ງທີ່ອົງການຄຸ້ມຄອງວຽກງານລ້ຽງສັດ ແລະ ສັດຕະວະແພດ ຮັບຮອງ ກ່ອນນຳເຂົ້າລ້ຽງໃນຟາມ.

ໃນລະຫວ່າງການຕິດຕາມກວດກາ ຢູ່ສະຖານທີ່ກັກກັນ ຫາກບໍ່ພົບພະຍາດສັດທີ່ຈຳເປັນຕ້ອງແຈ້ງ ຫຼື ບໍ່ພົບສິ່ງທີ່ເປັນອັນຕະລາຍ, ເຈົ້າໜ້າທີ່ສັດຕະວະແພດ ຕ້ອງອອກໃບຢັ້ງຢືນການກັກກັນສັດ ຕາມແບບພິມທີ່ໄດ້ກຳນົດໄວ້ໃນເອກະສານຊ້ອນທ້າຍ 7 ຂອງຂໍ້ຕົກລົງສະບັບນີ້ ພ້ອມທັງອະນຸຍາດປ່ອຍສິນຄ້າ ອອກຈາກສະຖານທີ່ກັກກັນ. ກໍລະນີພົບເຊື້ອພະຍາດທີ່ຈຳເປັນຕ້ອງແຈ້ງ ຫຼື ສິ່ງເປັນອັນຕະລາຍ ເຈົ້າໜ້າທີ່ສັດຕະວະແພດ ຕ້ອງລາຍງານໃຫ້ອົງການຄຸ້ມຄອງວຽກງານລ້ຽງສັດ ແລະ ສັດຕະວະແພດ ຊາບໂດຍດ່ວນ ພ້ອມທັງດຳເນີນມາດຕະການຄວບຄຸມ ຕາມດຳລັດວ່າດ້ວຍການກັນ ແລະ ຄວບຄຸມພະຍາດສັດ ເລກທີ 228/ລບ, ລົງວັນທີ 31 ພຶດສະພາ 2012.

## ໝວດທີ 3
## ການສົ່ງອອກ ສັດ ແລະ ຜະລິດຕະພັນສັດ

**ມາດຕາ 13 ການກະກຽມກ່ອນການສົ່ງອອກ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງ ສົ່ງອອກສັດ ແລະ ຜະລິດຕະພັນສັດ ຕ້ອງກະກຽມ ດັ່ງນີ້:

1. ພົວພັນເອົາ ຂໍ້ມູນ, ລະບຽບການ ແລະ ຄຳຮ້ອງຂໍນຳເຂົ້າ ສັດ ແລະ ຜະລິດຕະພັນສັດ ຂອງປະເທດ ທີ່ຈະນຳເຂົ້າ;
2. ຂໍອະນຸຍາດນຳເຂົ້າ ຕາມລະບຽບການທີ່ອົງການຄຸ້ມຄອງຂອງປະເທດນຳເຂົ້າກຳນົດ;
3. ແຈ້ງໃບອະນຸຍາດນຳເຂົ້າ ແລະ ເງື່ອນໄຂການຢັ້ງຢືນສຸຂານາໄມ ຈາກປະເທດນຳເຂົ້າ ໃຫ້ກົມລ້ຽງສັດ ແລະ ການປະມົງ ຊາບ;

4. ຍື່ນຄໍາຮ້ອງ ຂໍໃບອະນຸຍາດສົ່ງອອກ ຕໍ່ກົມລ້ຽງສັດ ແລະ ການປະມົງ ຢ່າງຊ້າ ສິບຫ້າວັນ ກ່ອນການສົ່ງອອກ ຕາມແບບພິມທີ່ໄດ້ກໍານົດໄວ້ໃນເອກະສານຊ້ອນທ້າຍ 3 ຂອງຂໍ້ຕົກລົງສະບັບນີ້ ເພື່ອກວດກາ ແລະ ຢັ້ງຢືນຄວາມຖືກຕ້ອງຂອງຊຸດເອກະສານສົ່ງອອກ;
5. ກົມລ້ຽງສັດ ແລະ ການປະມົງ ດໍາເນີນການກວດກາ, ກັກກັນ ແລະ ອອກໃບຢັ້ງຢືນສຸຂະພາບສັດ ຫຼື ສຸຂານາໄມ ຕາມແບບພິມທີ່ກໍານົດໄວ້ໃນເອກະສານຊ້ອນທ້າຍ 5 ແລະ ໃບອະນຸຍາດສົ່ງອອກໃຫ້ແກ່ຜູ້ຂໍສົ່ງອອກ.

**ມາດຕາ 14 ການປະຕິບັດຢູ່ດ່ານໃນເວລາສົ່ງອອກ**

ໃນເວລາສົ່ງອອກ ສັດ ແລະ ຜະລິດຕະພັນສັດ ຢູ່ດ່ານ ໃຫ້ປະຕິບັດ ດັ່ງນີ້:

1. ຜູ້ສົ່ງອອກ ຕ້ອງແຈ້ງເອກະສານ ແລະ ບອກວັນ, ເວລາ ທີ່ແນ່ນອນສໍາລັບການສົ່ງອອກ ຕໍ່ດ່ານກວດກາສັດຕະວະແພດສາກົນບ່ອນທີ່ຈະສົ່ງອອກ ຢ່າງໜ້ອຍ ໜຶ່ງວັນ ກ່ອນມື້ສົ່ງອອກ ເພື່ອກວດກາ ແລະ ຢັ້ງຢືນຄວາມຖືກຕ້ອງຂອງເອກະສານ. ຖ້າເອກະສານບໍ່ຖືກຕ້ອງ ຫຼື ບໍ່ຄົບຖ້ວນ ເຈົ້າໜ້າທີ່ກວດກາປະຈໍາດ່ານ ຕ້ອງແນະນໍາໃຫ້ຜູ້ຂໍອະນຸຍາດນໍາໄປປະກອບໃຫ້ຖືກຕ້ອງ;
2. ໃນມື້ສົ່ງອອກ ຜູ້ສົ່ງອອກ ຕ້ອງແຈ້ງໃບຢັ້ງຢືນການກວດກາເອກະສານ ແລະ ລາຍການສັດ ແລະ ຜະລິດຕະພັນສັດ ຕໍ່ເຈົ້າໜ້າທີ່ສັດຕະວະແພດປະຈໍາດ່ານ ເພື່ອບັນທຶກເຂົ້າໃນຖານຂໍ້ມູນ;
3. ເຈົ້າໜ້າທີ່ສັດຕະວະແພດປະຈໍາດ່ານ ກວດກາເອກະສານ ແລະ ສິນຄ້າຕົວຈິງ ແລະ ອອກໃບຢັ້ງ ຢືນການກວດກາຢູ່ດ່ານ ພ້ອມທັງ ແຈ້ງໃຫ້ຜູ້ສົ່ງອອກ ຈ່າຍຄ່າທໍານຽມ ແລະ ຄ່າບໍລິການຕາມລະ ບຽບການເສຍກ່ອນ ຈຶ່ງອະນຸຍາດໃຫ້ເຄື່ອນຍ້າຍສິນຄ້າໄປຫາພາກສ່ວນພາສີ ຫຼື ພາກສ່ວນອື່ນທີ່ກ່ຽວຂ້ອງ.

**ມາດຕາ 15 ການປະຕິເສດການສົ່ງອອກ**

ກົມລ້ຽງສັດ ແລະ ການປະມົງ ສາມາດປະຕິເສດການສົ່ງອອກ ພ້ອມທັງແຈ້ງໃຫ້ເຈົ້າຂອງສິນຄ້າ ແລະ ອົງການທີ່ກ່ຽວຂ້ອງຂອງປະເທດປາຍທາງຊາບ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ໃນກໍລະນີພົບ ເອກະສານມີການດັດແກ້ເນື້ອໃນ, ປອມລາຍເຊັນ ຫຼື ຕາປະທັບ ເຈົ້າໜ້າທີ່ສັດຕະວະແພດປະຈໍາດ່ານ;
2. ມີລາຍງານ ການພົບເຊື້ອພະຍາດສັດທີ່ຈໍາເປັນຕ້ອງແຈ້ງ ຫຼື ພະຍາດສັດອື່ນ ຫຼື ສິ່ງທີ່ເປັນອັນຕະລາຍ ທີ່ປະເທດນໍາເຂົ້າຫ້າມນໍາເຂົ້າ ຢູ່ສະຖານທີ່ ທີ່ເປັນແຫຼ່ງກໍາເນີດສິນຄ້າ;
3. ກວດພົບວ່າ ມີການຂົນສົ່ງສັດ ຜ່ານເຂດ ທີ່ ສປປ ລາວ ກໍາລັງດໍາເນີນການຄວບຄຸມພະຍາດລະບາດ ທີ່ກ່ຽວຂ້ອງກັບພະຍາດທີ່ປະເທດນໍາເຂົ້າ ຫ້າມນໍາເຂົ້າ.

## ໝວດທີ 4
## ການຂົນສົ່ງຜ່ານສັດ ແລະ ຜະລິດຕະພັນສັດ

**ມາດຕາ 16 ການຂໍອະນຸຍາດສົ່ງຜ່ານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງ ສົ່ງສັດ ແລະ ຜະລິດຕະພັນສັດ ຜ່ານ ສປປ ລາວ ຕ້ອງຍື່ນໃບຄໍາຮ້ອງຂໍອະນຸຍາດສົ່ງຜ່ານ ຫາກົມລ້ຽງສັດ ແລະ ການປະມົງ ຕາມແບບພິມທີ່ໄດ້ກໍານົດ ໄວ້ໃນເອກະສານຊ້ອນທ້າຍ 3 ຂອງຂໍ້ຕົກລົງສະບັບນີ້ ຢ່າງໜ້ອຍ ສິບຫ້າວັນ ກ່ອນການຂົນສົ່ງສິນຄ້າມາເຖິງດ່ານຂາເຂົ້າ. ໃນການສົ່ງຜ່ານ ໃຫ້ປະກອບເອກະສານ ຂໍໃບອະນຸຍາດສົ່ງຜ່ານ ມີດັ່ງນີ້:

1. ສໍາເນົາ ບັດປະຈໍາຕົວ ຫຼື ສໍາມະໂນຄົວ;

2. ສຳເນົາ ໜັງສືເດີນທາງ (ຖ້າເປັນຄົນຕ່າງປະເທດ);
3. ໃບມອບສິດ (ຖ້າໃຫ້ຜູ້ອື່ນມາແລ່ນເອກະສານແທນ);
4. ສຳເນົາໃບທະບຽນວິສາຫະກິດ.

**ເອກະສານເພີ່ມເຕີມອື່ນ ໃນມື້ນຳສິນຄ້າເຂົ້າຕົວຈິງ ມີ ດັ່ງນີ້:**

1. ໃບຢັ້ງຢືນສຸຂະພາບສັດ ຫຼື ສຸຂານາໄມຈາກອົງການຄຸ້ມຄອງວຽກງານສັດຕະວະແພດຂອງປະເທດຕົ້ນທາງ;
2. ສຳເນົາ ໃບຂົນສົ່ງສິນຄ້າ ຫຼື Bill of Lading/Airway Bill ກໍລະນີຂົນສົ່ງທາງທ່າເຮືອ ຫຼື ເຮືອບິນ;
3. ເອກະສານ ຫຼັກຖານຂອງປະເທດຕົ້ນທາງ ແລະ ປະເທດປາຍທາງ.

ຜູ້ຂົນສົ່ງຜ່ານຕ້ອງປະຕິບັດມາດຕະການ ຕາມທີ່ກຳນົດໄວ້ໃນ ມາດຕາ 17, ມາດຕາ 18 ແລະ ມາດຕາ 19 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 17 ການປະຕິບັດຢູ່ດ່ານໃນເວລານຳເຂົ້າເພື່ອສົ່ງຜ່ານຢູ່ດ່ານ**

ກ່ອນສິນຄ້າມາເຖິງດ່ານຂາເຂົ້າຢ່າງໜ້ອຍໜຶ່ງວັນ, ຜູ້ຂົນສົ່ງສິນຄ້າ ຕ້ອງແຈ້ງເອກະສານກ່ຽວກັບສິນຄ້າ ຕໍ່ເຈົ້າໜ້າທີ່ກວດກາສັດຕະວະແພດປະຈຳດ່ານທີ່ກ່ຽວຂ້ອງ.

ສຳລັບຂັ້ນຕອນການກວດກາ ແລະ ຢັ້ງຢືນ ສຳລັບດ່ານຂາເຂົ້າ ໃຫ້ປະຕິບັດຕາມຂັ້ນຕອນການປະຕິບັດຢູ່ດ່ານໃນເວລານຳເຂົ້າ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 9 ຂອງຂໍ້ຕົກລົງສະບັບນີ້.

ສຳລັບຂັ້ນຕອນ ຢູ່ດ່ານຂາອອກ ໃຫ້ປະຕິບັດ ຕາມມາດຕາ 14 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 18 ມາດຕະການຄວບຄຸມການສົ່ງຜ່ານ**

ການຂົນສົ່ງຜ່ານສັດ ແລະ ຜະລິດຕະພັນສັດ ຕ້ອງປະຕິບັດຕາມມາດຕະການ ດັ່ງນີ້:

1. ຕ້ອງໄປຕາມເສັ້ນທາງ ທີ່ກຳນົດໄວ້ໃນໃບອະນຸຍາດ, ໃນກໍລະນີທີ່ມີຄວາມຈຳເປັນຕ້ອງໄດ້ນຳສິນ ຄ້າຂົນສົ່ງໄປເສັ້ນທາງອື່ນ ຍ້ອນເກີດເຫດການຈຳເປັນໃດໜຶ່ງ ຜູ້ຂົນສົ່ງຜ່ານ ຕ້ອງແຈ້ງໃຫ້ເຈົ້າໜ້າທີ່ກວດກາປະຈຳດ່ານທີ່ນຳສິນຄ້າເຂົ້າຮັບຮູ້ໂດຍດ່ວນ ເພື່ອໃຫ້ປະສານໄປຫາພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງ ຫຼື ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ບ່ອນທີ່ເກີດເຫດສຸກເສີນ ລົງໄປແກ້ໄຂຊ່ວຍໃຫ້ທັນການ;
2. ດຳເນີນການບຳບັດສິນຄ້າທີ່ຂົນສົ່ງຜ່ານ ໃນກໍລະນີທີ່ພົບການສົງໄສ;
3. ມີລະບົບການຕິດຕາມ ໃນເວລາຂົນສົ່ງ;
4. ຮັບປະກັນການບັນຈຸ ເຊັ່ນ: ພາຫານະ, ຕູ້ແຊ່ເຢັນ, ພາຊະນະບັນຈຸ ແລະ ການຫຸ້ມຫໍ່ຕ້ອງບໍ່ໃຫ້ຮົ່ວໄຫຼ ໃຫ້ຂົນສົ່ງຜ່ານ ຕາມໄລຍະເວລາທີ່ກຳນົດ;
5. ດຳເນີນການກຳຈັດສິ່ງເສດເຫຼືອ ຢ່າງມີປະສິດທິພາບ;
6. ໃນກໍລະນີສຸກເສີນ ທີ່ມີການຖ່າຍຖ່າຍສິນຄ້າ ຕ້ອງມີການກວດກາຕິດຕາມ ໂດຍເຈົ້າໜ້າທີ່ ທີ່ໄດ້ຮັບມອບໝາຍ;
7. ມີລະບົບຮອງຮັບ ເພື່ອກັນ ແລະ ຄວບຄຸມ ພະຍາດສັດທີ່ຈຳເປັນຕ້ອງແຈ້ງ;
8. ປະກອບເອກະສານ ໃຫ້ຖືກຕ້ອງ ແລະ ຄົບຖ້ວນ ຕາມທີ່ປະເທດປາຍທາງຮຽກຮ້ອງ.

**ມາດຕາ 19 ການປະຕິເສດການຂົນສົ່ງຜ່ານ**

ອົງການຄຸ້ມຄອງວຽກງານລ້ຽງສັດ ແລະ ສັດຕະວະແພດ ສາມາດປະຕິເສດການຂົນສົ່ງຜ່ານໃນກໍລະນີ ດັ່ງນີ້:

1. ກວດພົບ ປະເພດ ຫຼື ປະລິມານສິນຄ້າ ບໍ່ຖືກຕ້ອງກັບຂໍ້ມູນທີ່ໄດ້ກໍານົດໄວ້ ໃນໃບອະນຸຍາດສົ່ງຜ່ານ;
2. ນໍາສິນຄ້າເຂົ້າດ່ານ ທີ່ບໍ່ຖືກຕາມການກໍານົດໃນໃບອະນຸຍາດນໍາເຂົ້າ;
3. ນໍາໃຊ້ໃບອະນຸຍາດສົ່ງຜ່ານທີ່ໝົດອາຍຸການນໍາໃຊ້;
4. ສົງໄສ ມີ ຫຼື ປົນເປື້ອນເຊື້ອພະຍາດ ທີ່ກໍານົດຢູ່ໃນບັນຊີລາຍຊື່ພະຍາດສັດທີ່ຈໍາເປັນຕ້ອງແຈ້ງ;
5. ມີການລາຍງານການເກີດພະຍາດລະບາດສັດຢູ່ປະເທດສົ່ງອອກ ຫຼື ໃນເຂດທີ່ສິນຄ້າ ທີ່ຈະຂົນສົ່ງຜ່ານ;
6. ເສັ້ນທາງຂອງການຂົນສົ່ງຜ່ານນັ້ນ ຈະຜ່ານເຂດທີ່ ສປປ ລາວ ກໍາລັງດໍາເນີນການຄວບຄຸມ ແລະ ກໍາຈັດພະຍາດສັດນັ້ນ.

ຫາກເກີດກໍລະນີຕ້ອງໄດ້ປະຕິເສດ, ສົ່ງກັບ ຫຼື ການທໍາລາຍ ໂດຍ ກົມລ້ຽງສັດ ແລະ ການປະມົງ ຕ້ອງແຈ້ງໃຫ້ອົງການທີ່ກ່ຽວຂ້ອງ ຂອງປະເທດຕົ້ນທາງຊາບ.

## ໝວດທີ 5
## ຂໍ້ຫ້າມ

**ມາດຕາ 20 ຂໍ້ຫ້າມທົ່ວໄປ**

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກໍາ ດັ່ງນີ້:

1. ນໍາເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ ສັດ ປະເພດເກືອດຫ້າມ ຕາມທີ່ກົມລ້ຽງສັດ ແລະ ການປະມົງກໍານົດ;
2. ນໍາເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ ຜະລິດຕະພັນສິນຄ້າກ່ຽວກັບສັດ ທີ່ປົນເປື້ອນສານເຄມີ ທີ່ເປັນອັນຕະລາຍຕໍ່ຜູ້ບໍລິໂພກ;
3. ນໍາເຂົ້າ ສັດ ແລະ ຜະລິດຕະພັນສັດ ຈາກປະເທດ ຫຼື ເຂດໃດໜຶ່ງ ຂອງປະເທດສົ່ງອອກທີ່ເກີດການລະບາດຂອງພະຍາດສັດທີ່ຈໍາເປັນຕ້ອງແຈ້ງ;
4. ນໍາເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ ຜະລິດຕະພັນສັດ ທີ່ບໍ່ເໝາະສົມສໍາລັບການບໍລິໂພກ ຫຼື ບໍ່ສາມາດໃຊ້ເປັນປະໂຫຍດໄດ້;
5. ນໍາເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ ສັດ ແລະ ຜະລິດຕະພັນສັດ ປະເພດຄຸ້ມຄອງ ແລະ ຫວງຫ້າມພາຍໃຕ້ຂໍ້ກົດລະບຽບຂອງສົນທິສັນຍາສາກົນ ວ່າດ້ວຍການຄ້າຂາຍຊະນິດພັນສັດປ່າ ແລະ ພືດປ່າທີ່ໃກ້ຈະສູນພັນລະຫວ່າງຊາດ. (Convention on International Trade in Endangered Species of Wild Fauna and Flora, CITES) ໂດຍບໍ່ໄດ້ຮັບການອະນຸຍາດ;
6. ນໍາເຂົ້າ ແລະ ສົ່ງຜ່ານ ສັດ ແລະ ຜະລິດຕະພັນສັດ ເຂົ້າດ່ານທີ່ບໍ່ໄດ້ກໍານົດຢູ່ໃນໃບອະນຸຍາດ.

**ມາດຕາ 21 ຂໍ້ຫ້າມສໍາລັບພະນັກງານ ແລະ ເຈົ້າໜ້າທີ່**

ຫ້າມ ພະນັກງານລັດຖະກອນ ແລະ ເຈົ້າໜ້າທີ່ສັດຕະວະແພດ ມີພຶດຕິກໍາ ດັ່ງນີ້:

1. ສວຍໃຊ້ ສິດ, ໜ້າທີ່ ແລະ ຕໍາແໜ່ງ ເພື່ອບັງຄັບ, ນາບຂູ່, ກົດໜ່ວງ, ຖ່ວງດຶງ ຫຼື ຮຽກເອົາສິນບົນ ຊຶ່ງກໍ່ໃຫ້ເກີດຄວາມເສຍຫາຍ ແກ່ຜົນປະໂຫຍດຂອງ ລັດ, ລວມໝູ່ ແລະ ບຸກຄົນ;
2. ເປີດເຜີຍຄວາມລັບ ຂອງ ລັດ ຫຼື ທາງລັດຖະການ, ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ;
3. ປອມແປງເອກະສານ ຫຼື ອອກເອກະສານ ບໍ່ຖືກຕ້ອງ;
4. ປະຕິບັດໜ້າທີ່ ດ້ວຍຄວາມປະໝາດ, ເມີນເສີຍ, ຂາດຄວາມຮັບຜິດຊອບ ແລະ ຈັບຍາບັນ ທີ່ກໍ່ໃຫ້ເກີດຄວາມເສຍຫາຍ ຕໍ່ ລັດ, ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ;
5. ຮຽກເອົາ ຄ່າທໍານຽມ, ຄ່າບໍລິການ ແລະ ນໍາໃຊ້ລາຍຮັບວິຊາການ ທີ່ບໍ່ຖືກຕ້ອງຕາມລະບຽບການ;
6. ມີພຶດຕິກໍາອື່ນ ທີ່ເປັນການລະເມີດ ກົດໝາຍ ແລະ ລະບຽບການ.

## ໝວດທີ 6
## ການຄຸ້ມຄອງ ແລະ ກວດກາ ວຽກງານນໍາເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ ສັດ ແລະ ຜະລິດຕະພັນສັດ

**ມາດຕາ 22 ການຄຸ້ມຄອງ ແລະ ກວດກາ ວຽກງານນໍາເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ ສັດ ແລະ ຜະລິດຕະພັນສັດ**

ອົງການຄຸ້ມຄອງ ແລະ ກວດກາວຽກງານນໍາເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ ສັດ ແລະ ຜະລິດຕະພັນສັດ ປະກອບດ້ວຍ:

1. ກະຊວງກະສິກໍາ ແລະ ປ່າໄມ້ ໂດຍແມ່ນ ກົມລ້ຽງສັດ ແລະ ການປະມົງ ເປັນເສນາທິການ;
2. ພະແນກກະສິກໍາ ແລະ ປ່າໄມ້ແຂວງ, ນະຄອນຫຼວງ ໂດຍແມ່ນ ຂະແໜງລ້ຽງສັດ ແລະ ການປະມົງເປັນເສນາທິການ;
3. ຫ້ອງການກະສິກໍາ ແລະ ປ່າໄມ້ເມືອງ, ເທດສະບານ, ນະຄອນ.

**ມາດຕາ 23 ສິດ ແລະ ໜ້າທີ່ ຂອງ ກົມລ້ຽງສັດ ແລະ ການປະມົງ**

ໃນການຄຸ້ມຄອງການນໍາເຂົ້າ, ສົ່ງອອກ ແລະ ສົ່ງຜ່ານສັດ ແລະ ຜະລິດຕະພັນສັດ, ກົມລ້ຽງສັດ ແລະ ການປະມົງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ສ້າງລະບົບການຄວບຄຸມ ແລະ ຕິດຕາມກວດກາ ການນໍາເຂົ້າ, ສົ່ງອອກ ແລະ ຂົນສົ່ງຜ່ານສັດ ແລະ ຜະລິດຕະພັນສັດ ຂອງ ສປປ ລາວ ໃຫ້ມີຄວາມເປັນເອກະພາບໃນຂອບເຂດທົ່ວປະເທດ;
2. ຮ່າງມາດຕະຖານເຕັກນິກ ແລະ ລະບຽບການສະເພາະ ກ່ຽວກັບການນໍາເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ ສັດ ແລະ ຜະລິດຕະພັນສັດ ເພື່ອຂໍອະນຸມັດຈາກ ກະຊວງກະສິກໍາ ແລະ ປ່າໄມ້ ຮັບຮອງປະກາດໃຊ້;
3. ພັດທະນາ ຄູ່ມື ແລະ ຄໍາແນະນໍາດ້ານວິຊາການ, ຄູ່ມືກ່ຽວກັບການກວດກາການນໍາເຂົ້າ, ສົ່ງອອກ ແລະ ສົ່ງຜ່ານໃຫ້ສອດຄ່ອງ ແລະ ຮັດກຸມ ເພື່ອເປັນບ່ອນອີງໃຫ້ແກ່ເຈົ້າໜ້າທີ່ ຫຼື ການຈັດ ຕັ້ງ ທີ່ໄດ້ຮັບມອບໝາຍໄດ້ນໍາໃຊ້ຢ່າງເປັນເອກະພາບ;
4. ດໍາເນີນການປະເມີນຄວາມສ່ຽງ, ກວດກາ ແລະ ຢັ້ງຢືນ ດ້ານສຸຂານາໄມ ສັດ ແລະ ຜະລິດຕະພັນສັດ;
5. ປຶກສາຫາລື ກັບປະເທດຄູ່ຄ້າ ກ່ຽວກັບການກໍານົດຄວາມເທົ່າທຽມກັນ, ຮັບຮູ້ມາດຕະການໃນການຄວບຄຸມການນໍາເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ ລະຫວ່າງ ສປປ ລາວ ກັບ ຕ່າງປະເທດ;

6. ອອກໃບອະນຸຍາດ ຫຼື ສັ່ງໂຈະ ຫຼື ຖອນໃບອະນຸຍາດນໍາເຂົ້າ, ສົ່ງອອກ ແລະ ຂົນສົ່ງຜ່ານ;
7. ຊີ້ນໍາດ່ານກວດກາສັດຕະວະແພດ ແລະ ຄຸ້ມຄອງການນໍາເຂົ້າ, ສົ່ງອອກ ແລະ ຂົນສົ່ງຜ່ານ ສັດ ແລະ ຜະລິດຕະພັນສັດ;
8. ເຝົ້າລະວັງ, ກັນ ແລະ ນໍາໃຊ້ມາດຕະການຄວບຄຸມພະຍາດສັດ ຢູ່ໃນຂະບວນການນໍາເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ;
9. ສ້າງສິ່ງອໍານວຍຄວາມສະດວກ ໃຫ້ແກ່ການກັກກັນກ່ອນສົ່ງອອກ ແລະ ຫຼັງການນໍາເຂົ້າ;
10. ນໍາໃຊ້ມາດຕະການຕໍ່ຜູ້ທີ່ລະເມີດ ລະບຽບການນໍາເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ ສັດ ແລະ ຜະລິດຕະພັນສັດ ເປັນຕົ້ນ ບໍ່ຕໍ່ໃບອະນຸຍາດ, ການໂຈະ-ຍົກເລີກ, ການສັ່ງໃຫ້ສົ່ງກັບ ຫຼື ທໍາລາຍ;
11. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 24 ສິດ ແລະ ໜ້າທີ່ ຂອງຂະແໜງລ້ຽງສັດ ແລະ ການປະມົງ ແຂວງ ແລະ ນະຄອນຫຼວງ**

ໃນການຄຸ້ມຄອງການນໍາເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ ສັດ ແລະ ຜະລິດຕະພັນສັດ ຂະແໜງລ້ຽງສັດ ແລະ ການປະມົງ ແຂວງ, ນະຄອນຫຼວງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຈັດຕັ້ງປະຕິບັດແຜນການຄວບຄຸມ ແລະ ຕິດຕາມກວດກາ ການນໍາເຂົ້າ, ສົ່ງອອກ ແລະ ຂົນສົ່ງຜ່ານສັດ ແລະ ຜະລິດຕະພັນສັດ ຂອງອົງການຄຸ້ມຄອງວຽກງານລ້ຽງສັດ ແລະ ສັດຕະວະແພດຂັ້ນສູນກາງ;
2. ກວດກາ, ຕິດຕາມ ແລະ ລາຍງານ ການປະຕິບັດມາດຕະຖານເຕັກນິກ ແລະ ລະບຽບການກ່ຽວກັບການນໍາເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ ສັດ ແລະ ຜະລິດຕະພັນສັດ;
3. ເຂົ້າຮ່ວມການປະເມີນຄວາມສ່ຽງ ແລະ ກວດກາການນໍາເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ ສັດ ແລະ ຜະລິດຕະພັນສັດ ໃນຂອບເຂດ ແຂວງ ແລະ ນະຄອນຫຼວງຂອງຕົນ;
4. ຄຸ້ມຄອງການນໍາເຂົ້າ, ສົ່ງອອກ ແລະ ຂົນສົ່ງຜ່ານ ສັດ ແລະ ຜະລິດຕະພັນສັດ ພາຍໃນແຂວງ ແລະ ນະຄອນຫຼວງ;
5. ນໍາໃຊ້ມາດຕະການດ້ານວິຊາການເປັນຕົ້ນ ການເຝົ້າລະວັງ, ກັນ, ຄວບຄຸມ ແລະ ກໍາຈັດພະຍາດສັດ ຫຼື ທໍາລາຍສິ່ງທີ່ເປັນອັນຕະລາຍ ຢູ່ໃນຂະບວນການນໍາເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ;
6. ນໍາໃຊ້ມາດຕະການຕໍ່ຜູ້ທີ່ລະເມີດ ລະບຽບການນໍາເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ ສັດ ແລະ ຜະລິດຕະພັນສັດ, ເປັນຕົ້ນ ການບໍ່ຕໍ່ໃບອະນຸຍາດ, ການໂຈະ-ຍົກເລີກ, ການສັ່ງໃຫ້ສົ່ງກັບ ຫຼື ທໍາລາຍ;
7. ຈັດຕັ້ງປະຕິບັດຄໍາແນະນໍາດ້ານວິຊາການ ກ່ຽວກັບການກວດກາການນໍາເຂົ້າ, ສົ່ງອອກ ແລະ ສົ່ງຜ່ານຜະລິດຕະພັນສັດ ທີ່ອົງການຄຸ້ມຄອງວຽກງານລ້ຽງສັດ ແລະ ສັດຕະວະແພດຂັ້ນສູນກາງກໍານົດ;
8. ສະເໜີການອະນຸຍາດ ຫຼື ສັ່ງໂຈະ ຫຼື ຖອນໃບອະນຸຍາດນໍາເຂົ້າ, ສົ່ງອອກ ແລະ ຂົນສົ່ງຜ່ານ;
9. ອໍານວຍຄວາມສະດວກ ແລະ ກວດກາ ໃນການກັກກັນກ່ອນການສົ່ງອອກ, ຫຼັງການນໍາເຂົ້າ ແລະ ລະຫວ່າງການຂົນສົ່ງຜ່ານ;
10. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 25 ສິດ ແລະ ໜ້າທີ່ ຂອງ ຫ້ອງການກະສິກໍາ ແລະ ປ່າໄມ້ ເມືອງ, ເທດສະບານ, ນະຄອນ**

ໃນການຄຸ້ມຄອງການນໍາເຂົ້າ, ສົ່ງອອກ ແລະ ສົ່ງຜ່ານສັດ ແລະ ຜະລິດຕະພັນສັດ ຫ້ອງການກະສິກໍາ ແລະ ປ່າໄມ້ເມືອງ, ເທດສະບານ, ນະຄອນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຊ່ວຍອົງການຄຸ້ມຄອງວຽກງານລ້ຽງສັດ ແລະ ສັດຕະວະແພດຂັ້ນແຂວງ ໃນການຈັດຕັ້ງປະຕິບັດ ແຜນການຄວບຄຸມ ແລະ ຕິດຕາມກວດກາ ການນຳເຂົ້າ, ສົ່ງອອກ ແລະ ຂົນສົ່ງຜ່ານສັດ ແລະ ຜະລິດຕະພັນສັດ;
2. ເຂົ້າຮ່ວມການປະເມີນຄວາມສ່ຽງ ແລະ ກວດກາການນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ ສັດ ແລະ ຜະລິດຕະພັນສັດ ໃນຂອບເຂດເມືອງ ແລະ ເຫດສະບານຂອງຕົນ;
3. ນຳໃຊ້ມາດຕະການດ້ານວິຊາການ ເປັນຕົ້ນ ການເຝົ້າລະວັງ, ກັນ, ຄວບຄຸມ ແລະ ກຳຈັດພະຍາດສັດ ຫຼື ທຳລາຍສິ່ງທີ່ເປັນອັນຕະລາຍ ຢູ່ໃນຂະບວນການນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ ຕາມການຊີ້ນຳຂອງຂັ້ນແຂວງ ແລະ ນະຄອນຫຼວງ;
4. ສະເໜີຫາ ຂັ້ນແຂວງ, ນະຄອນຫຼວງ ເພື່ອນຳໃຊ້ມາດຕະການຕໍ່ຜູ້ທີ່ບໍ່ໃຫ້ຄວາມຮ່ວມມືໃນການປະຕິບັດເງື່ອນໄຂການນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ ສັດ ແລະ ຜະລິດຕະພັນສັດ ຂອງ ສປປ ລາວ ເປັນຕົ້ນ ການບໍ່ຕໍ່ໃບອະນຸຍາດ, ການໂຈະ-ຍົກເລີກ, ການສັ່ງໃຫ້ສົ່ງກັບ ຫຼື ທຳລາຍ;
5. ຈັດຕັ້ງປະຕິບັດຄຳແນະນຳດ້ານວິຊາການ ກ່ຽວກັບການກວດກາການນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານສັດ ແລະ ຜະລິດຕະພັນສັດ ທີ່ອົງການຄຸ້ມຄອງວຽກງານ ລ້ຽງສັດ ແລະ ສັດຕະວະແພດຂັ້ນສູນກາງກຳນົດ;
6. ອຳນວຍຄວາມສະດວກ ແລະ ກວດກາ ໃນການກັກກັນກ່ອນສົ່ງອອກ, ຫຼັງການນຳເຂົ້າ ແລະ ລະຫວ່າງການຂົນສົ່ງຜ່ານ;
7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 26 ສິດ ແລະ ໜ້າທີ່ ຂອງ ດ່ານກວດກາສັດຕະວະແພດ**

ໃນການຄຸ້ມຄອງວຽກງານການນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ ສັດ ແລະ ຜະລິດຕະພັນສັດ ດ່ານກວດກາສັດຕະວະແພດ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ສະກັດກັ້ນ ການລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບການລ້ຽງສັດ ແລະ ສັດຕະວະແພດ;
2. ກວດກາ, ອຳນວຍຄວາມສະດວກ ໃຫ້ແກ່ການນຳເຂົ້າ, ສົ່ງອອກ ແລະ ຂົນສົ່ງຜ່ານສັດ, ຜະລິດ ຕະພັນສັດ ຕາມກົດໝາຍ ແລະ ລະບຽບການ;
3. ກວດກາ, ພິຈາລະນາ ແລະ ຢັ້ງຢືນຄວາມຖືກຕ້ອງ ຂອງຜະລິດຕະພັນສິນຄ້າກ່ຽວກັບສັດ ແລະ ເອກະສານທີ່ກ່ຽວຂ້ອງໃນການນຳເຂົ້າ, ສົ່ງອອກ ແລະ ຂົນສົ່ງຜ່ານ ສັດ ແລະ ຜະລິດຕະພັນສັດ;
4. ນຳໃຊ້ມາດຕະການສຸຂານາໄມ ເປັນຕົ້ນ ກັກ, ແຍກປ່ຽວ, ສົ່ງຕົວຢ່າງໄປວິໄຈ, ບຳບັດ, ປະຕິເສດການນຳເຂົ້າ, ສົ່ງກັບຄືນ, ທຳລາຍສັດ, ຜະລິດຕະພັນສັດ ຫຼື ວັດຖຸ ທີ່ປົນເປື້ອນ ດ້ວຍເຊື້ອພະຍາດສັດທີ່ຈຳເປັນຕ້ອງແຈ້ງ;
5. ເກັບກຳຂໍ້ມູນເບື້ອງຕົ້ນ ກ່ຽວກັບການກະທຳຜິດ ແລະ ລາຍງານໃຫ້ການຈັດຕັ້ງ ແລະ ເຈົ້າໜ້າທີ່ທີ່ກ່ຽວຂ້ອງ ເພື່ອແກ້ໄຂຕາມກົດໝາຍ ແລະ ລະບຽບການ;
6. ເກັບ ຄ່າທຳນຽມ ແລະ ຄ່າບໍລິການດ້ານວິຊາການ ຕາມລະບຽບການ;
7. ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດໜ້າທີ່ຂອງຕົນ;
8. ສະຫຼຸບ, ສັງລວມ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານຂອງຕົນໃຫ້ ອົງການຄຸ້ມຄອງວຽກງານລ້ຽງສັດ ແລະ ສັດຕະວະແພດ ຕາມການແບ່ງຂັ້ນຄຸ້ມຄອງ ຢ່າງເປັນປົກກະຕິ;
9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 27 ສິດ ແລະ ໜ້າທີ່ ຂອງ ເຈົ້າໜ້າທີ່ສັດຕະວະແພດ**

ເຈົ້າໜ້າທີ່ສັດຕະວະແພດ ແມ່ນພະນັກງານຈາກກົມລ້ຽງສັດ ແລະ ການປະມົງ, ພະແນກກະສິກໍາ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ, ຫ້ອງການກະສິກໍາ ແລະ ປ່າໄມ້ເມືອງ, ເທດສະບານ, ນະຄອນ ແລະ ດ່ານກວດກາສັດຕະວະແພດ ທີ່ໄດ້ຮັບມອບໝາຍໃຫ້ເປັນເຈົ້າໜ້າທີ່ກວດກາ ຊຶ່ງມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເຂົ້າກວດກາໃນສະຖານທີ່ນໍາເຂົ້າ, ສົ່ງອອກ, ສົ່ງຜ່ານ, ສະຖານທີ່ກັກກັນ, ສະຖານທີ່ເຕົ້າໂຮມສັດ ແລະ ສະຖານທີ່ກ່ຽວຂ້ອງອື່ນ ລວມທັງສະຖານທີ່ເກັບຮັກສາຜະລິດຕະພັນສັດ, ຍານພາຫະນະບັນທຸກ ໃນໂມງລັດຖະການ ຫຼື ຕາມການມອບໝາຍ ໃນກໍລະນີທີ່ມີເຫດການສົງໄສວ່າມີການກະທໍາຜິດ ຫຼື ລະເມີດກົດໝາຍ ຫຼື ລະບຽບການ;
2. ກວດກາເອກະສານຕ່າງໆທີ່ກ່ຽວຂ້ອງກັບສັດ ແລະ ຜະລິດຕະພັນສັດ ລວມທັງ ວິທີການລ້ຽງ ຫຼື ວິທີການເກັບຮັກສາຜະລິດຕະພັນສັດ;
3. ເກັບຕົວຢ່າງເພື່ອການກວດກາວິໄຈຊອກຫາພະຍາດ ແລະ ສິ່ງທີ່ເປັນອັນຕະລາຍ ພ້ອມທັງສືບສວນ-ສອບສວນ ຫາຂໍ້ມູນທີ່ແທ້ຈິງ;
4. ກວດຄົ້ນ, ຢຶດສັດ ຫຼື ຜະລິດຕະພັນສັດ ທີ່ບໍ່ໄດ້ຮັບອະນຸຍາດ, ຕິດ ຫຼື ປົນເປື້ອນດ້ວຍເຊື້ອພະຍາດ ແລະ ສິ່ງທີ່ເປັນອັນຕະລາຍ ລວມທັງເຄື່ອງມື, ເຄື່ອງໃຊ້, ພາຊະນະບັນຈຸ, ຫີບຫໍ່, ສະຫຼາກ ແລະ ເອກະສານ ຫຼື ວັດຖຸອື່ນ ທີ່ກ່ຽວຂ້ອງກັບການກະທໍາຄວາມຜິດ ຫຼື ລະເມີດຂໍ້ຕົກລົງສະບັບນີ້;
5. ສະເໜີໃຫ້ບຸກຄົນ ມາໃຫ້ປາກຄໍາ ຫຼື ຮຽກເອົາເອກະສານ ຫຼື ຫຼັກຖານ ເພື່ອປະກອບການພິຈາລະນາຂອງພະນັກງານ ແລະ ເຈົ້າໜ້າທີ່;
6. ປະສານຫາຜູ້ໄດ້ຮັບອະນຸຍາດ ແລະ ຜູ້ມີໜ້າທີ່ກ່ຽວຂ້ອງ ກັບການຜະລິດ, ຈໍາໜ່າຍ, ນໍາເຂົ້າ ຫຼື ສົ່ງອອກ ແລະ ໃຫ້ອໍານວຍຄວາມສະດວກ ໃຫ້ແກ່ການປະຕິບັດໜ້າທີ່ຂອງພະນັກງານເຈົ້າໜ້າທີ່;
7. ສະແດງບັດສະເພາະເຈົ້າໜ້າທີ່ກວດກາ ໃນເວລາປະຕິບັດງານ ຕໍ່ບຸກຄົນທີ່ກ່ຽວຂ້ອງ;
8. ລາຍງານຕໍ່ການຈັດຕັ້ງຂັ້ນເທິງຖັດຕົນ ຢ່າງເປັນປົກກະຕິ ແລະ ໃນກໍລະນີພົບການລະເມີດ ຫຼື ບໍ່ໃຫ້ຄວາມຮ່ວມມືຂອງຜູ້ປະກອບການ;
9. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 28 ການກວດກາ**

ເນື້ອໃນການກວດກາວຽກງານ ການນໍາເຂົ້າ, ສົ່ງອອກ ແລະ ສົ່ງຜ່ານສັດ ແລະ ຜະລິດຕະພັນສັດ ມີດັ່ງນີ້:

1. ການອອກໃບອະນຸຍາດນໍາເຂົ້າ, ສົ່ງອອກ, ສົ່ງຜ່ານ ແລະ ຈໍາໜ່າຍ ສັດ ແລະ ຜະລິດຕະພັນສັດ;
2. ການຈັດຕັ້ງປະຕິບັດລະບຽບກົດໝາຍ ກ່ຽວກັບການນໍາເຂົ້າ, ສົ່ງອອກ ແລະ ສົ່ງຜ່ານສັດ ແລະ ຜະລິດຕະພັນສັດຂອງອົງການລັດ ແລະ ອົງການຈັດຕັ້ງຕ່າງໆ;
3. ການຕິດຕາມ, ກວດກາການເຄື່ອນໄຫວ ກ່ຽວກັບການນໍາເຂົ້າ, ສົ່ງອອກ, ສົ່ງຜ່ານ, ຈໍາໜ່າຍ, ການກັກກັນ, ການເກັບຮັກສາ, ການຂົນສົ່ງ ສັດ ແລະ ຜະລິດຕະພັນສັດ ທັງພາກລັດ ແລະ ເອກະຊົນ;
4. ການກວດກາ ມີຈຸດປະສົງ ເພື່ອເຮັດໃຫ້ວຽກງານການນໍາເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ ສັດ ແລະ ຜະລິດຕະພັນສັດ ຖືກຕ້ອງຕາມລະບຽບ, ກົດໝາຍ ແລະ ເຮັດໃຫ້ຜູ້ປະກອບການມີຈັນຍາບັນ,

ທ່ຽງທຳ, ບໍ່ເອົາລັດເອົາປຽບຜູ້ຊົມໃຊ້ ແນໃສ່ເຮັດໃຫ້ສັດ ແລະ ຜະລິດຕະພັນສັດ ມີຄຸນນະພາບ ແລະ ປອດໄພ.

ຮູບການກວດກາວຽກງານການນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານສັດ ແລະ ຜະລິດຕະພັນສັດ ມີດັ່ງນີ້:

1) **ການກວດກາຕາມປົກກະຕິ** ແມ່ນການກວດກາຕາມແຜນການຢ່າງເປັນປະຈຳ ແລະ ມີກຳນົດເວລາທີ່ແນ່ນອນ;
2) **ການກວດກາໂດຍແຈ້ງໃຫ້ຮູ້ລ່ວງໜ້າ** ແມ່ນການກວດການອກແຜນການ ໂດຍມີການແຈ້ງໃຫ້ຜູ້ຖືກກວດກາ ຮູ້ກ່ອນລ່ວງໜ້າ;
3) **ການກວດກາແບບກະທັນຫັນ** ແມ່ນການກວດກາຢ່າງຮີບດ່ວນ ໂດຍບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດກາຮູ້ລ່ວງໜ້າ.

ໃນການກວດກາວຽກງານການນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານສັດ ແລະ ຜະລິດຕະພັນສັດ ໃຫ້ປະຕິບັດຖືກຕ້ອງຕາມລະບຽບກົດໝາຍ ແລະ ອີງຕາມຫຼັກການປະເມີນຄວາມສ່ຽງ ທີ່ໄດ້ກຳນົດໄວ້ໃນລະບຽບການສະເພາະ.

## ໝວດທີ 7
## ບົດບັນຍັດສຸດທ້າຍ

**ມາດຕາ 29 ການຈັດຕັ້ງປະຕິບັດ**

ມອບໃຫ້ ກົມລ້ຽງສັດ ແລະ ການປະມົງ ເປັນໃຈກາງສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ທັງສູນກາງ ແລະ ທ້ອງຖິ່ນ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ໃຫ້ໄດ້ຮັບຜົນດີ.

**ມາດຕາ 30 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ແລະ ພາຍຫຼັງໄດ້ລົງເຜີຍແຜ່ໃນຈົດໝາຍເຫດ ທາງລັດຖະການ ສິບຫ້າວັນ.

ຂໍ້ກຳນົດ ຫຼື ບົດບັນຍັດໃດທີ່ຂັດກັບຂໍ້ຕົກລົງສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ລັດຖະມົນຕີ

ບຸນຂວາງ ຄຳບຸນເຮືອງ

## ເອກະສານຊ້ອນທ້າຍ 1: ລາຍການປະເພດ ສັດ ແລະ ຜະລິດຕະພັນສັດທີ່ຕ້ອງຂໍອະນຸຍາດ

ລາຍການປະເພດ ສັດ ແລະ ຜະລິດຕະພັນສັດທີ່ຕ້ອງຂໍອະນຸຍາດນໍາເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ ໃນຂໍ້ຕົກລົງສະບັບນີ້ ມີ ດັ່ງນີ້:

1. ປະເພດ ງົວ, ຄວາຍ ມີຊີວິດ;
2. ປະເພດ ໝູມີຊີວິດ;
3. ປະເພດ ແກະ, ແບ້ມີຊີວິດ;
4. ປະເພດ ມ້າ, ລໍ, ລາມີຊີວິດ;
5. ປະເພດ ສັດປີກມີຊີວິດ;
6. ປະເພດ ໝາ ແລະ ແມວ;
7. ປະເພດ ສັດປ່າມີຊີວິດ;
8. ປະເພດ ກວາງລັ່ງມີຊີວິດ;
9. ປະເພດ ນົກກະຈອກເທດ ແລະ ນົກອີມູມີຊີວິດ;
10. ນໍ້າເຊື້ອຂອງໝູ;
11. ນໍ້າເຊື້ອຂອງງົວ, ຄວາຍ;
12. ນໍ້າເຊື້ອຂອງ ແກະ, ແບ້;
13. ຕົວອ່ອນຂອງ ງົວ, ຄວາຍ;
14. ໄຂ່ເຊື້ອ ແລະ ລູກສັດປີກອາຍຸ 1 ວັນ;
15. ຊີ້ນໝູ ແລະ ຜະລິດຕະພັນໝູທີ່ບໍລິໂພກໄດ້;
16. ຊີ້ນງົວ ແລະ ຜະລິດຕະພັນ ທີ່ກິນໄດ້ ຂອງງົວ, ຄວາຍ, ແກະ, ແບ້;
17. ຊີ້ນກວາງ ແລະ ຜະລິດຕະພັນກວາງລັ່ງ ທີ່ກິນໄດ້;
18. ຊີ້ນນົກກະຈອກເທດ ແລະ ຊີ້ນນົກອີມູ;
19. ຜະລິດຕະພັນຂອງ ງົວ, ຄວາຍ, ໝູ, ແກະ, ແບ້, ມ້າ, ສັດປີກ ແລະ ສັດປ່າ ກິນບໍ່ໄດ້;
20. ປະເພດ ສັດ ຫຼື ຜະລິດຕະພັນສັດອື່ນ ຕາມທີ່ກະຊວງກະສິກໍາ ແລະ ປ່າໄມ້ ກໍານົດ ໃນແຕ່ລະໄລຍະ.

## ເອກະສານຊ້ອນທ້າຍ 2: ເງື່ອນໄຂໃນການນຳເຂົ້າ ສັດ ແລະ ຜະລິດຕະພັນສັດ

1. <u>ເງື່ອນໄຂລວມ</u>

ການນຳເອົາສັດ ແລະ ຜະລິດຕະພັນສັດເຂົ້າ ສປປ ລາວ ຕ້ອງມີໃບຢັ້ງຢືນສຸຂະພາບສັດ ຫຼື ໃບຢັ້ງຢືນສຸຂານາໄມ ເປັນພາສາອັງກິດ ຫຼື ເປັນສອງພາສາ ພາສາລາວ ແລະ ຕ່າງປະເທດ ທີ່ອອກໂດຍ ສັດຕະວະແພດຢ່າງເປັນທາງການຂອງປະເທດສົ່ງອອກ ທີ່ມີຂໍ້ມູນທົ່ວໄປທີ່ກ່ຽວຂ້ອງກັບສິນຄ້າ ດັ່ງນີ້:

1. ຊື່ປະເທດທີ່ອອກໃບຢັ້ງຢືນ;
2. ຊື່ ແລະ ທີ່ຢູ່ ຂອງອົງການສັດຕະວະແພດ ຫຼື ອົງການທີ່ມີສິດອຳນາດໃນການອອກໃບຢັ້ງຢືນໃຫ້ແກ່ຜູ້ສົ່ງອອກ;
3. ເລກທີໃບອະນຸຍາດສົ່ງອອກ ຫຼື ໃບທະບຽນວິສາຫະກິດ;
4. ຊື່ ແລະ ທີ່ຢູ່ ຂອງຜູ້ສົ່ງອອກ;
5. ຊື່ປະເທດທີ່ເປັນແຫຼ່ງກຳເນີດສິນຄ້າ;
6. ຊື່ ເຂດ, ຊື່ສະຖານທີ່ ແລະ ທີ່ຢູ່ ທີ່ເປັນແຫຼ່ງກຳເນີດສິນຄ້າ;
7. ຊື່ ແລະ ທີ່ຢູ່ຂອງສະຖານທີ່ປາຍທາງຂອງສິນຄ້າ ຖ້າເປັນການສົ່ງຜ່ານ;
8. ຊື່ ແລະ ທີ່ຢູ່ຂອງຜູ້ຮັບສິນຄ້າຢູ່ ສປປ ລາວ;
9. ຊື່ ເຂດ ຫຼື ສະຖານທີ່ຕັ້ງຂອງຟາມປາຍທາງຢູ່ ສປປ ລາວ;
10. ຊື່ ແລະ ທີ່ຢູ່, ຂອງສະຖານທີ່ ທ້ອນໂຮມສັດກ່ອນສົ່ງອອກ;
11. ຊື່ ສະຖານທີ່ດ່ານຊາຍແດນສົ່ງອອກ/ທ່າເຮືອ/ສະໜາມບິນ ພ້ອມລະຫັດສາກົນຂອງດ່ານກວດກາທີ່ຈະສົ່ງອອກ ຖ້າມີ;
12. ວັນ, ເດືອນ, ປີ ມື້ຂາອອກ;
13. ຮູບແບບຂອງການຂົນສົ່ງ;
14. ເລກທີ, ວັນ, ເດືອນ, ປີ, ວັນໝົດອາຍຸໃບອະນຸຍາດ(CITES) ຖ້າເປັນສັດປ່າທີ່ຢູ່ໃນບັນຊີໃກ້ຈະສູນພັນ;
15. ລາຍລະອຽດຂອງລາຍການສິນຄ້າຕາມລະບົບເອກະພາບຂອງອົງການພາສີສາກົນ;
16. ເລກລະຫັດ ສິນຄ້າ ຕາມລະບົບເອກະພາບຂອງອົງການພາສີສາກົນ;
17. ອຸນຫະພູມສຳລັບການຂົນສົ່ງຜະລິດຕະພັນສັດ;
18. ຈຳນວນ ຕູ້ ຫຼື ກ່ອງບັນທຸກ/ບັນຈຸສິນຄ້າທີ່ທຳການຂົນສົ່ງ;
19. ເລກນ້ຳເບີຕູ້ບັນຈຸ/ເລກລະຫັດໜີບກົ່ວ;
20. ປະເພດການຫຸ້ມຫໍ່ ຫຼື ການຫຸ້ມຫໍ່ຕາມການກຳນົດຂອງອົງການສະຫະປະຊາຊາດເພື່ອການອຳນວຍຄວາມສະດວກດ້ານການຄ້າ;
21. ຈຸດປະສົງຂອງການນຳເຂົ້າ;
22. ການເຮັດກາໝາຍໃສ່ສິນຄ້າ;
23. ລັກສະນະສະເພາະຂອງສິນຄ້າ ຕ້ອງໃຫ້ມີ ຂໍ້ມູນ ດັ່ງນີ້:
    - ຊື່ສິນຄ້າ ຫຼື ຊື່ສາມັນ ແລະ ຊື່ທາງວິທະຍາສາດກ່ຽວກັບຊະນິດສັດ ຖ້າເປັນສັດມີຊີວິດ;
    - ປະເພດທະບຽນພິມສັດ ຖ້າເປັນສັດມີຊີວິດ;
    - ເລກປະຈຳຕົວສັດ/ນ້ຳເບີເອເລັກໂຕຣນິກ;
    - ຈຳນວນສັດ ແລະ ນ້ຳໜັກ ຫຼື ຈຳນວນ ແລະ ນ້ຳໜັກຜະລິດຕະພັນສັດ;
    - ສາຍພັນ;

- ອາຍຸ;
- ເພດ.

24. ໃບປະຫວັດດ້ານກຳມະພັນສັດ ສະເພາະສັດມີຊີວິດທີ່ນຳເຂົ້າມາເປັນແນວພັນ.

2. **ເງື່ອນໄຂສະເພາະ**

**2.1. ປະເພດ ງົວ ແລະ ຄວາຍ ມີຊີວິດ:**

1. ສັດ ຕ້ອງມາຈາກປະເທດທີ່ປອດພະຍາດ Rinderpest, Contagious Bovine Pleuropneumonia (CBPP), East Coast Fever, Rift Valley Fever, Bovine Spongiform Encephalopathy (BSE) ແລະ Q Fever;
2. ຕ້ອງ ມາຈາກປະເທດ ຫຼື ເຂດ ທີ່ບໍ່ມີການລາຍງານການເກີດພະຍາດ Foot and Mouth Disease (FMD) ຢ່າງໜ້ອຍ 12 ເດືອນ ກ່ອນການສົ່ງອອກ ໂດຍມີ ຫຼື ບໍ່ມີ ການສັກຢາກັນພະຍາດ FMD;
3. ແຫຼ່ງທີ່ມາຂອງສັດຕ້ອງມາຈາກ ເຂດທີ່ບໍ່ພົບການເກີດພະຍາດ Bovine Malignant Catarrhal Fever, Johne's Diseases, Bovine Ephemeral Fever, Vesicular Stomatitis, Bluetongue (BT), Anaplasmosis, Babesiosis, Theileriosis ແລະ Trypanosomiasis ພາຍໃນ 12 ເດືອນ ກ່ອນການສົ່ງອອກ;
4. ພາຍໃນ 12 ເດືອນ ກ່ອນການສົ່ງອອກ ສັດທີ່ຢູ່ໃນຟາມທີ່ເປັນແຫຼ່ງກຳເນີດສິນຄ້າ ຕ້ອງບໍ່ມີອາການຂອງພະຍາດ Anthrax, Tuberculosis, Brucellosis, Leptospirosis, Johne's Disease, Infectious Bovine Rhinotracheitis/Infectious Pustular Vulvovaginitis (IBR/IPV), Bovine Viral Diarrhoea/Mucosal Disease (BVD/MD), Mycoplasmosis, Vesicular Stomatitis, Bluetongue, Enzootic Bovine Leukosis, Campylobacteriosis ແລະ Trichomonosis;
5. ສັດທຸກໂຕ ທີ່ຈະນຳເຂົ້າ ສປປ ລາວ ຕ້ອງໄດ້ກັກກັນ ເພື່ອຕິດຕາມສຸຂະພາບຢູ່ໃນສະຖານທີ່ ທີ່ອົງການສັດຕະວະແພດຂອງປະເທດສົ່ງອອກຮັບຮອງ ແລະ ຢູ່ພາຍໃຕ້ການຕິດຕາມຂອງພະນັກງານສັດຕະວະແພດ ຂອງປະເທດສົ່ງອອກ ພາຍໃນ 30 ວັນ ແລະ ຕ້ອງໄດ້ເກັບຕົວຢ່າງເພື່ອນຳໄປວິໄຈຕາມວິທີການທີ່ອົງການສຸຂະພາບສັດສາກົນແນະນຳ ແລະ ຕ້ອງມີຜົນເປັນລົບ ສຳລັບພະຍາດ Tuberculosis, Brucellosis, Bluetongue, Enzootic Bovine Leukosis, Infectious Bovine Rhinotracheitis/Infectious Pustular Vulvovaginitis, Johne's Disease, Leptospirosis, Campylobacteriosis, Trichomonosis infection, Babesiosis, Trypanosomiasis, Anaplasmosis ແລະ Theileriasis.
6. ສັດຕ້ອງຮັບການຢັ້ງຢືນວ່າໄດ້ຂ້າແມ່ກາຝາກດ້ວຍຢາທີ່ມີປະສິດທິພາບກ່ອນການສົ່ງອອກ.

**2.2. ປະເພດ ໝູມີຊີວິດ:**

1. ຕ້ອງມາຈາກປະເທດທີ່ປອດພະຍາດ African Swine Fever, Enterovirus encephalomyelitis ແລະ Rinderpest;
2. ຕ້ອງມາຈາກປະເທດ ຫຼື ຂົງເຂດ ທີ່ບໍ່ມີລາຍງານເກີດພະຍາດປາກເປື່ອຍລີ້ນເລັບ (Foot and Mouth Disease) ຢ່າງໜ້ອຍ 12 ເດືອນ ກ່ອນການສົ່ງອອກ ໂດຍມີ ຫຼື ບໍ່ມີ ການສັກຢາກັນພະຍາດ FMD;

3. ຕ້ອງມາຈາກເຂດທີ່ບໍ່ມີການລາຍງານພົບອາການຂອງພະຍາດອະຫິວາໝູ (Classical Swine Fever), Aujeszky's Disease ແລະ ຫູກໍ່າໝູ (Porcine Respiratory and Reproductive Syndrome (PRRS)) ພາຍໃນ 12 ເດືອນກ່ອນການສົ່ງອອກ;
4. ຕ້ອງມາຈາກຟາມທີ່ ບໍ່ພົບໝູມີອາການຂອງພະຍາດຫູກໍ່າໝູ, ອະຫິວາໝູ ແລະ Aujeszky's Disease ພາຍໃນ 2 ປີ ກ່ອນການສົ່ງອອກ;
5. ພາຍໃນ 12 ເດືອນກ່ອນການສົ່ງອອກ ຢູ່ໃນຟາມທີ່ເປັນແຫຼ່ງຂອງສິນຄ້າ ຕ້ອງບໍ່ມີໝູໂຕໃດ ມີອາການຂອງພະຍາດ Tuberculosis, Brucellosis, Leptospirosis, Swine Vesicular Disease, Vesicular Exanthema, Swine Influenza, Porcine Parvovirus Infection, Enterovirus Encephalomyelitis, Transmissible Gastroenteritis, Atrophic Rhinitis, Toxoplasmosis, Trichinosis ແລະ Streptococcus suis type 2;
6. ໝູ ທຸກໂຕ ທີ່ຈະນຳເຂົ້າ ສປປ ລາວ ຕ້ອງໄດ້ກັກກັນ ຕິດຕາມ ຢູ່ໃນສະຖານທີ່ ທີ່ອົງການສັດຕະວະແພດຂອງປະເທດສົ່ງອອກຮັບຮອງ 30 ວັນ;
7. ພາຍໃນ 21 ວັນ ກ່ອນສົ່ງໝູ ມາຍັງ ສປປ ລາວ ໝູແຕ່ລະໂຕ ຕ້ອງໄດ້ເກັບຕົວຢ່າງນຳໄປວິໄຈ ຕາມວິທີການທີ່ອົງການສຸຂະພາບສັດສາກົນແນະນຳ ແລະ ຕ້ອງມີຜົນເປັນລົບສຳລັບພະຍາດ Brucellosis, Aujeszky's Disease, Transmissible Gastroenteritis, Atrophic Rhinitis, Leptospirosis ແລະ ພະຍາດ ຫູກໍ່າໝູ Porcine Respiratory Reproductive Syndrome (PRRS);
8. ສັດຍັງຕ້ອງໄດ້ຮັບການຢັ້ງຢືນວ່າໄດ້ຂ້າແມ່ກາຝາກດ້ວຍຢາທີ່ມີປະສິດທິພາບກ່ອນການສົ່ງອອກ.

### 2.3. ປະເພດແກະ, ແບ້ມີຊີວິດ

1. ສັດຕ້ອງມາຈາກປະເທດທີ່ປອດພະຍາດ Scrapie, Rinderpest, Contagious Caprine Pleuropneumonia, Maedi-Visna, Pulmonary Adenomatosis (Jaggsiekte), Peste des Petits Ruminant, Sheep Pox ແລະ Goat Pox;
2. ສັດຕ້ອງມາຈາກປະເທດ ຫຼື ເຂດ ທີ່ບໍ່ມີການລະບາດຂອງພະຍາດປາກເປື່ອຍລົງເລັບ (Foot and Mouth Disease (FMD)) ຢ່າງໜ້ອຍ ພາຍໃນ 12 ເດືອນ ກ່ອນການສົ່ງອອກ ໂດຍ ມີ ຫຼື ບໍ່ມີການສັກຢາກັນພະຍາດ FMD;
3. ສັດຕ້ອງມາຈາກເຂດທີ່ບໍ່ພົບອາການຂອງພະຍາດ Caprine Arthritis/Encephalitis ພາຍໃນ 12 ເດືອນ ກ່ອນການສົ່ງອອກ;
4. ສັດຕ້ອງມາຈາກຟາມທີ່ ບໍ່ພົບອາການຂອງພະຍາດ Bluetongue, Epizootic Hemorrhagic Disease, Vesicular Stomatitis and Contagious Agalactia ພາຍໃນ 12 ເດືອນ ກ່ອນການສົ່ງອອກ;
5. ພາຍໃນ 2 ປີ ກ່ອນການສົ່ງອອກ ຕ້ອງບໍ່ມີອາການຂອງພະຍາດ Contagious Pustular Dermatitis, Chlamydiosis, Toxoplasmosis, Tuberculosis, Brucellosis, Leptospirosis, Listeriosis, Campylobacteriosis, Melioidosis, Johne's Disease ແລະ Corynebacteriosis;

6. ສັດທຸກໂຕ ທີ່ຈະນຳເຂົ້າ ສປປ ລາວ ຕ້ອງໄດ້ຮັບການກັກກັນ ຕິດຕາມ ຢູ່ໃນສະຖານທີ່ ທີ່ອົງການສັດຕະວະແພດຂອງປະເທດສົ່ງອອກ ຮັບຮອງ ແລະ ຢູ່ພາຍໃຕ້ການຕິດຕາມຂອງພະນັກງານ ຂອງປະເທດສົ່ງອອກ ພາຍໃນ 30 ວັນກ່ອນການສົ່ງອອກ;
7. ໃນລະຫວ່າງການກັກກັນ, ສັດທຸກໂຕ ຕ້ອງໄດ້ເກັບຕົວຢ່າງໄປວິໄຈ ຕາມວິທີການທີ່ອົງການສຸຂະພາບສັດສາກົນແນະນຳ ແລະ ຕ້ອງມີຜົນເປັນລົບ ສຳລັບພະຍາດ Tuberculosis, Brucellosis, Bluetongue, Leptospirosis ແລະ Johne's Disease;
8. ສັດຕ້ອງໄດ້ຢັ້ງຢືນວ່າໄດ້ຮັບການຂ້າແມ່ກາຝາກດ້ວຍຢາທີ່ມີປະສິດທິພາບກ່ອນການສົ່ງອອກ.

### 2.4. ປະເພດ ມ້າ, ລໍ, ລາມີຊີວິດ

1. ຕ້ອງມາຈາກປະເທດ ຫຼື ເຂດ ທີ່ປອດພະຍາດ African Horse Sickness, Equine Encephalomyelitis, Vesicular Stomatitis, Dourine ແລະ Epizootic Lymphangitis;
2. ຕ້ອງມາຈາກເຂດ ຫຼື ຟາມ ທີ່ບໍ່ມີການພົບອາການຂອງພະຍາດໄຂ້ເລືອດດຳ (Anthrax), Equine Infectious Anemia, Equine Viral Arteritis, Equine Viral Rhinopneumonitis, Rabies, Equine Influenza, Equine Herpes Virus, Trypanosomiasis (T.Evansi) ແລະ ພະຍາດ Horse Pox ພາຍໃນ 12 ເດືອນ ກ່ອນການສົ່ງອອກ;
3. ພາຍໃນ 12 ເດືອນ ກ່ອນການສົ່ງອອກສັດ ຕ້ອງບໍ່ມີອາການຂອງພະຍາດ Glanders, Strangle, Equine Paratyphoid (S.abortus equi infection), Equine Coital Exanthema, Equine Piroplasmosis, Surra, Contagious Equine Metritis (CEM), Epizootic Lymphangitis ແລະ ຂີ້ເຮື້ອນມ້າ (Mange) ຢູ່ໃນຟາມທີ່ເປັນແຫຼ່ງຂອງສັດອາໄສຢູ່;
4. ສັດທຸກໂຕ ທີ່ຈະນຳເຂົ້າ ສປປ ລາວ ຕ້ອງໄດ້ຮັບການກັກກັນ ຕິດຕາມ ຢູ່ໃນສະຖານທີ່ ທີ່ອົງການສັດຕະວະແພດຂອງປະເທດສົ່ງອອກ ຮັບຮອງ ແລະ ຢູ່ພາຍໃຕ້ການຕິດຕາມຂອງພະນັກງານສັດຕະວະແພດຂອງປະເທດສົ່ງອອກ ພາຍໃນ 30 ວັນກ່ອນການສົ່ງອອກ;
5. ໃນລະຫວ່າງທີ່ມີການກັກກັນນັ້ນ, ສັດທຸກໂຕ ຕ້ອງ ໄດ້ເກັບຕົວຢ່າງໄປວິໄຈ ຕາມວິທີການທີ່ອົງການສຸຂະພາບສັດສາກົນແນະນຳ ແລະ ຕ້ອງມີຜົນເປັນລົບ ສຳລັບພະຍາດ Equine Infectious Anemia, Equine Viral Arteritis, Contagious Equine Metritis, Glanders, Equine Piroplasmosis, Dourine ແລະ Equine Trypanosomiasis (T.evansi);
6. ສັດຕ້ອງຮັບການຢັ້ງຢືນວ່າໄດ້ຂ້າແມ່ກາຝາກດ້ວຍຢາທີ່ມີປະສິດທິພາບກ່ອນການສົ່ງອອກ.

### 2.5. ປະເພດສັດປີກມີຊີວິດ

1. ສັດປີກທີ່ນຳເຂົ້າ ຕ້ອງມາຈາກປະເທດປອດພະຍາດໄຂ້ຫວັດສັດປີກ;
2. ຕ້ອງດຳເນີນການແຍກ ຫຼື ກັກກັນ ຕິດຕາມ ຢູ່ໃນສະຖານທີ່ ທີ່ອົງການສັດຕະວະແພດຂອງ ປະເທດສົ່ງອອກ ຮັບຮອງ ແລະ ຢູ່ພາຍໃຕ້ການຕິດຕາມຂອງພະນັກງານສັດຕະວະແພດຂອງປະເທດສົ່ງອອກ ພາຍໃນ ຢ່າງໜ້ອຍ 21 ວັນກ່ອນການສົ່ງອອກ;
3. ສັດປີກຕ້ອງບໍ່ໄດ້ຮັບການສັກຢາກັນພະຍາດ ໄຂ້ຫວັດສັດປີກ ຫຼື ຕ້ອງສັກຢາກັນພະຍາດອື່ນ ຕາມທີ່ ສປປ ລາວ ກຳນົດ;
4. ກ່ອນສົ່ງສັດປີກເຂົ້າ ສປປ ລາວ ບໍ່ເກີນ 10 ວັນ ຕ້ອງ ໄດ້ເກັບຕົວຢ່າງເລືອດໄປວິໄຈ ດ້ວຍເຕັກນິກຊີໂຣໂລຊີວິທະຍາ ຕາມວິທີການທີ່ອົງການສຸຂະພາບສັດສາກົນແນະນຳ ໂດຍຕ້ອງເປັນຜົນລົບ ຫຼື ບໍ່

ພົບພູມຕ້ານທານຕໍ່ ພະຍາດ Salmonella pullorum, Salmonella gallinarum ແລະ Samonella typhimurium;

5. ສັດປີກຕ້ອງບໍ່ພົບອາການຂອງພະຍາດ Newcastle Disease, Fowl Cholera, Duck Virus Enteritis, Duck Virus Hepatitis, Marek's Disease, Avian Infectious Laryngotracheitis, Mycoplasma gallisepticum, Psittacosis/Ornithosis, Infectious Bursal Disease, Avian Infectious Bronchitis, Avian Tuberculosis, ລວມທັງ ບໍ່ກວດພົບພະຍາດ Salmonellosis ເປັນຕົ້ນ Salmonella enteritidis, Salmonella typhimurium, Salmonella pullorum, Salmonella gallinarum ດ້ວຍວິທີການປູກເຊື້ອ ຢູ່ໃນຟາມສັດປີກເພື່ອສົ່ງອອກ ພາຍໃນ ໙໐ ວັນກ່ອນການສົ່ງອອກ;
6. ກ່ອງ ຫຼື ກົງຂັງ ສັດປີກ ຕ້ອງປະຕິບັດຕາມມາດຕະຖານ ຂອງສະມາຄົມທາງອາກາດສາກົນ (International Air Transport Association (IATA))ໂດຍສະເພາະແມ່ນ ຂະໜາດ ລວງສູງ, ຄວາມກວ້າງ, ການລະບາຍອາກາດ, ການໃຫ້ອາຫານ ແລະ ນໍ້າ.

### 2.6. ປະເພດ ໝາ ແລະ ແມວ

1. ສັດຕ້ອງມາຈາກປະເທດທີ່ປອດພະຍາດວໍ້ ຫຼື ປະເທດທີ່ບໍ່ມີ ລາຍງານເກີດການລະບາດຂອງພະຍາດວໍ້ ພາຍໃນ 12 ເດືອນ;
2. ໝາຕ້ອງໄດ້ຮັບການສັກຢາກັນພະຍາດວໍ້, Distemper, Hepatitis, Parvovirus, Leptospirosis ມາແລ້ວ ພາຍໃນ 21 ວັນກ່ອນການເດີນທາງ ຫຼື ໄດ້ຮັບຜົນການກວດກາທາງຫ້ອງວິໄຈວ່າ ບໍ່ພົບເຊື້ອ Leptospirosis ພາຍໃນບໍ່ເກີນ 21 ວັນກ່ອນການເດີນທາງ;
3. ສັດຕ້ອງສວມອຸປະກອນຄອບສົບເພື່ອປ້ອງກັນ ການກັດ ຫຼື ທຳຮ້າຍຄົນ ແລະ ສັດ;
4. ພາຍຫຼັງທີ່ອອກເດີນທາງແລ້ວ ແມ່ນບໍ່ອະນຸຍາດໃຫ້ສັດສຳພັດກັບສັດອື່ນ. ໃນກໍລະນີທີ່ມີການສົ່ງຜ່ານ, ປ່ຽນຖ່າຍເຄື່ອງບິນ ກໍບໍ່ອະນຸຍາດໃຫ້ອອກຈາກເຂດສະໜາມບິນ ນອກຈາກຈະມີການອະນຸຍາດ ໃຫ້ສົ່ງໄປສະຖານກັກກັນສັດທີ່ມີການຮັບຮອງແລ້ວເທົ່ານັ້ນ;
5. ພັນໝາທີ່ຕ້ອງຄວບຄຸມການນຳເຂົ້າ ສປປ ລາວ ມີດັ່ງນີ້:
   - Pit Bull Terrier or American Pitbull
   - American Staffordshire Terrier
   - Staffordshire Terrier
   - American Bulldog
   - Japanese Tosa (Tosa-Inu, Tosa-Uen)
   - Akita (Japanese Akita, Great Japanese Dog)
   - Neapolitan Mstiff
   - Fila Brazileiro
   - Dogo Argentino

### 2.7. ປະເພດສັດປ່າມີຊີວິດ

1. ສັດປ່າປະເພດສັດຄ້ຽວເອື້ອງ ຕ້ອງມາຈາກ ປະເທດ, ຂົງເຂດ ຫຼື ເຂດ ທີ່ປອດພະຍາດປາກເປື່ອຍລົງເລັບ (Foot and Mouth Disease), ອະຫິວາງົວ-ຄວາຍ (Rinderpest), ອະຫິວາສັດຄ້ຽວເອື້ອງນ້ອຍ (Peste des Petits Ruminants), Contagious Bovine

Pleuropneumonia, Contagious Caprine Pleuropneumonia, Bluetongue, Malignant Catarrhal Fever, Transmissible Spongiform Encephalopathy;

2. ສັດປ່າປະເພດໝູປ່າ ຕ້ອງມາຈາກ ປະເທດ, ຂົງເຂດ ຫຼື ເຂດ ທີ່ປອດພະຍາດ African Swine Fever, Foot and Mouth Disease, Classical Swine Fever, Swine Vesicular Disease, Rinderpest, Trichinellosis, Enterovirus Encephalomyelitis ແລະ Nipah virus;
3. ສັດປ່າປະເພດມ້າ ຕ້ອງມາຈາກ ປະເທດ, ຂົງເຂດ ຫຼື ເຂດ ທີ່ປອດພະຍາດ Glanders, African Horse Sickness, Equine Encephalomyelitis, Vesicular Stomatitis, Dourine ແລະ Hendra virus;
4. ສັດປ່າປະເພດລີງ ຕ້ອງມາຈາກ ປະເທດ ຫຼື ຂົງເຂດ ຫຼື ເຂດ ທີ່ປອດພະຍາດ Yellow Fever, Ebola ແລະ ພະຍາດວໍ້ (Rabies);
5. ສັດປ່າຈຳພວກ ໝາ, ແມວ ຕ້ອງມາຈາກ ປະເທດ ຫຼື ຂົງເຂດ ຫຼື ເຂດ ທີ່ປອດພະຍາດວໍ້ (Rabies);
6. ສັດທຸກໂຕ ທີ່ຈະນຳເຂົ້າ ສປປ ລາວ ຕ້ອງໄດ້ຮັບການກັກກັນ ຕິດຕາມ ຢູ່ໃນສະຖານທີ່ ທີ່ອົງການສັດຕະວະແພດ ຂອງປະເທດສົ່ງອອກ ຮັບຮອງ ແລະ ຢູ່ພາຍໃຕ້ການຕິດຕາມຂອງພະນັກງານສັດຕະວະແພດຂອງປະເທດສົ່ງອອກ ພາຍໃນ 3 ເດືອນກ່ອນການສົ່ງອອກ ແລະ ໃນຊ່ວງໄລຍະເວລາດັ່ງກ່າວຕ້ອງບໍ່ເກີດການລະບາດຂອງພະຍາດ ດັ່ງນີ້:
   - ປະເພດກີບເຄິ່ງຄູ່ ຕ້ອງບໍ່ເກີດພະຍາດ Foot and Mouth Disease, Theileriasis, Tuberculosis, Bovine Spongiform Encephalopathy (BSE), Johne's disease, Brucellosis, Yersiniosis, Anaplasmosis, Liver flukes ແລະ Elaphostrongylines;
   - ສັດປ່າປະເພດໝູປ່າ ຕ້ອງບໍ່ເກີດພະຍາດ Aujeszky's Disease, Trypanosomiasis, Swine Influenza, Brucellosis, Tuberculosis, Transmissible Gastroenteritis ແລະ Vesicular Exanthema;
   - ສັດປ່າປະເພດມ້າ ຕ້ອງບໍ່ເກີດພະຍາດ Equine Infectious Anemia, Trypanosomiasis ແລະ Epizootic Lymphangitis;
   - ສັດປ່າຈຳພວກລີງ ຕ້ອງບໍ່ເກີດພະຍາດ Viral Hepatitis ແລະ Tuberculosis;
   - ສັດປ່າຈຳໝາ, ແມວ ຕ້ອງບໍ່ເກີດ ພະຍາດ ວໍ້ (Rabies), Distemper, Leptospirosis, Parvovirus infection, Babesiosis ແລະ Calicivirus;
   - ສັດທຸກໂຕ ຕ້ອງໄດ້ເກັບຕົວຢ່າງໄປວິໄຈ ຊອກຫາເຊື້ອໃດໜຶ່ງຂຶ້ນກັບຊະນິດສັດ ແລະ ສະພາບດ້ານສຸຂະພາບສັດຂອງ ປະເທດສົ່ງອອກ ແລະ ຕ້ອງມີຜົນການວິໄຈເປັນລົບ. ການວິໄຈຕ້ອງດຳເນີນການຢູ່ໃນໄລຍະການກັກກັນ ກ່ອນສົ່ງອອກ 30 ວັນ;
   - ສັດຕ້ອງຮັບການຂ້າແມ່ກາຝາກດ້ວຍຢາທີ່ມີປະສິດທິພາບກ່ອນການສົ່ງອອກ.

### 2.8. ປະເພດກວາງລ້ຽງມີຊີວິດ

1. ສັດຕ້ອງມາຈາກປະເທດທີ່ປອດພະຍາດ Rinderpest, Contagious Bovine Pleuropneumonia ແລະ Transmissible Spongiform Encephalopathy;
2. ສັດຕ້ອງມາຈາກປະເທດ ຫຼື ຂົງເຂດ ຫຼື ເຂດ ທີ່ບໍ່ມີການລາຍງານເກີດພະຍາດ Foot and Mouth Disease ຢ່າງໜ້ອຍ 12 ເດືອນ ກ່ອນການສົ່ງອອກ;

3. ສັດຕ້ອງມາຈາກ ຟາມທີ່ບໍ່ພົບອາການຂອງພະຍາດ Clostridial Disease, Yersiniosis, Mucosal Disease, Johne's Disease, Bluetongue, Epizootic Haemorrhagic Disease, Vesicular Stomatitis, Leptospirosis, Malignant Catarrhal Fever, Brucellosis ແລະ Tuberculosis ພາຍໃນ 12 ເດືອນກ່ອນສົ່ງອອກ;
4. ສັດທຸກໂຕ ທີ່ຈະນໍາເຂົ້າ ສປປ ລາວ ຕ້ອງໄດ້ຮັບການກັກກັນ ຕິດຕາມ ຢູ່ໃນສະຖານທີ່ທີ່ອົງການສັດຕະວະແພດຂອງປະເທດສົ່ງອອກ ຮັບຮອງ ແລະ ຢູ່ພາຍໃຕ້ການຕິດຕາມຂອງພະນັກງານສັດຕະວະແພດຂອງປະເທດສົ່ງອອກ ພາຍໃນ 30 ວັນກ່ອນການສົ່ງອອກ;
5. ໃນລະຫວ່າງການກັກກັນ ສັດທຸກໂຕ ຕ້ອງໄດ້ເກັບຕົວຢ່າງໄປວິໃຈ ຕາມວິທີການທີ່ອົງການສຸຂະພາບສັດສາກົນແນະນໍາ ແລະ ຕ້ອງມີຜົນເປັນລົບ ສໍາລັບພະຍາດ Tuberculosis, Brucellosis, Leptospirosis ແລະ Johne's Disease;
6. ສັດຕ້ອງມີການຢັ້ງຢືນວ່າໄດ້ຮັບການຂ້າແມ່ກາຝາກດ້ວຍຢາທີ່ມີປະສິດທິພາບກ່ອນການສົ່ງອອກ.

### 2.9. ປະເພດນົກກະຈອກເທດ ແລະ ນົກອື່ນໆມີຊີວິດ

1. ສັດຕ້ອງມາຈາກ ຟາມ ທີ່ບໍ່ພົບອາການຂອງພະຍາດ Avian Encephalitis (Arbovirus infection), Avian Influenza, Newcastle Disease, Crimean-Congo Haemorrhagic Fever, Infectious Bursal Disease, Fowl Pox, Borna Disease Virus, Viral Enteritis, Adenovirus Infection, Zygomycosis, Aspergillosis, Salmonellosis, Mycoplasmosis, Tuberculosis, Erysipelas, Colibacillosis, Pasteurellosis, Clostridial Enteritis, Infectious Coryza, Chlamydiosis ແລະ ພະຍາດ Anthrax ພາຍໃນ 12 ເດືອນ ກ່ອນສົ່ງອອກ;
2. ສັດ ທີ່ຈະນໍາເຂົ້າ ສປປ ລາວ ຕ້ອງໄດ້ກັກກັນ ຢູ່ໃນສະຖານທີ່ ຫຼື ຟາມທີ່ໄດ້ຮັບການຮັບຮອງ ໂດຍອົງການສັດຕະວະແພດຂອງປະເທດສົ່ງອອກ ແລະ ຢູ່ພາຍໃຕ້ການຕິດຕາມຂອງພະນັກງານສັດຕະ ວະແພດຂອງປະເທດສົ່ງອອກ ພາຍໃນໄລຍະ 30 ວັນກ່ອນການສົ່ງອອກ;
3. ໃນໄລຍະກັກກັນນັ້ນ ສັດແຕ່ລະໂຕຕ້ອງໄດ້ເກັບຕົວຢ່າງໄປວິໃຈ ຕາມວິທີການທີ່ອົງການສຸຂະພາບສັດສາກົນແນະນໍາ ແລະ ຕ້ອງມີຜົນເປັນລົບ ສໍາລັບພະຍາດ Newcastle Disease, Avian Influenza Subtypes H5 ແລະ H7, Tuberculosis ແລະ Salmonellosis;
4. ສັດຕ້ອງຢັ້ງຢືນວ່າໄດ້ຮັບການຂ້າແມ່ກາຝາກດ້ວຍຢາທີ່ມີປະສິດທິພາບກ່ອນການສົ່ງອອກ.

### 2.10. ນໍ້າເຊື້ອຂອງໝູ

1. ຕ້ອງລະບຸຂໍ້ມູນ ກ່ຽວກັບ: ຊື່ ແລະ ທີ່ຢູ່ ຂອງສະຖານທີ່ຜະລິດ, ຈໍານວນ, ຊະນິດ ແລະ ພັນໝູ, ເລກລະຫັດ ຫຼື ທະບຽນພິມສັດຂອງພໍ່ພັນ, ວັນເດືອນປີ ເກັບນໍ້າເຊື້ອ, ເລກລະຫັດຫຼອດນໍ້າເຊື້ອ;
2. ຕ້ອງມີການຢັ້ງຢືນ ສະຖານະພາບດ້ານສຸຂານາໄມນໍ້າເຊື້ອຂອງໝູຕື່ມອີກ ດັ່ງນີ້:
   - ນໍ້າເຊື້ອ ຕ້ອງມາຈາກປະເທດ ທີ່ປອດພະຍາດ African Swine Fever;
   - ນໍ້າເຊື້ອ ຕ້ອງມາຈາກປະເທດ ຫຼື ຂົງເຂດ ຫຼື ເຂດ ບໍ່ມີລາຍງານເກີດພະຍາດ Foot and Mouth Disease ພາຍໃນ 12 ເດືອນກ່ອນການສົ່ງອອກ;
   - ນໍ້າເຊື້ອ ຕ້ອງຜະລິດມາຈາກສູນ ຫຼື ສະຖານີ ຜະລິດນໍ້າເຊື້ອ ທີ່ໄດ້ຮັບການຮັບຮອງຈາກອົງການຄຸ້ມຄອງຂອງລັດ ຂອງປະເທດສົ່ງອອກ ແລະ ຢູ່ພາຍໃຕ້ການກວດກາຕິດຕາມດ້ານສຸຂານາໄມຂອງພະນັກງານສັດຕະວະແພດ.

3. ພໍ່ພັນພ້ອມທັງໝູທີ່ເປັນໂຕລໍ້ ຕ້ອງບໍ່ສະແດງອາການຂອງພະຍາດ Tuberculosis, Brucellosis, Leptospirosis, Vesicular Exanthema, Vesicular Stomatitis, Swine Vesicular Disease, Swine Influenza, Classical swine fever, Aujeszky's Disease, Porcine Parvovirus Infection, Porcine Respiratory and Reproductive Syndrome (PRRS), Atrophic Rhinitis, Transmissible Gastroenteritis ແລະ Teschen Disease ກ່ອນ ຈົນຮອດມື້ເກັບນໍ້າເຊື້ອເພື່ອສົ່ງອອກ 12 ເດືອນ;
4. ສັດ ຕ້ອງມີຄວາມປົກກະຕິທາງຮ່າງກາຍ, ສະລິລະສາດ ແລະ ພາຍໃນ 30 ມື້ກ່ອນການນຳມາແຍກກັກຂັງເພື່ອເກັບນໍ້າເຊື້ອ ຕ້ອງໄດ້ກວດກາວິໄຈ ຕາມວິທີການທີ່ອົງການສຸຂະພາບສັດສາກົນແນະນຳ ແລະ ຕ້ອງເປັນຜົນລົບສຳລັບ ພະຍາດ Brucellosis;
5. ພໍ່ພັນ ພ້ອມທັງໝູທີ່ເປັນໂຕລໍ້ທີ່ຖືກເກັບນໍ້າເຊື້ອແລ້ວ ຕ້ອງແຍກກັກຂັງໄວ້ໃນສະຖານີຜະລິດນໍ້າເຊື້ອຢ່າງໜ້ອຍ 30 ວັນ ແລະ ໃນໄລຍະນີ້ ຕ້ອງທຳການວິໄຈຊອກຫາເຊື້ອພະຍາດ Tuberculosis, Brucellosis, Aujeszky's Diseases, Transmissible Gastroenteritis, Teschen Disease, Swine Vesicular Disease, Porcine Respiratory and Reproductive Syndrome (PRRS), Leptospirosis ແລະ ຕ້ອງມີການວິໄຈຊອກຫາເຊື້ອພະຍາດ Tuberculosis, Brucellosis ໃນທຸກ 12 ເດືອນ;
6. ຕ້ອງມີການບັນທຶກປະຫວັດການປະສົມພັນຕິດຂອງພໍ່ພັນ, ຄວາມສົມບູນຂອງລູກ, ຫຼານ ແລະ ຕ້ອງບໍ່ພົບຄວາມບົກຜ່ອງທາງພັນທຸກຳ;
7. ຕ້ອງລະບຸຊະນິດ ຂອງນໍ້າຢາເກັບຮັກສານໍ້າເຊື້ອ, ຢາຕ້ານເຊື້ອ ຫຼື ສານອື່ນທີ່ປະສົມລົງໃນນໍ້າເຊື້ອ;
8. ຕ້ອງມີການຢັ້ງຢືນວ່າ ນໍ້າເຊື້ອ ໄດ້ຜະລິດ, ປຸງແຕ່ງ ແລະ ເກັບຮັກສາ ຕາມວິທີການທີ່ອົງການສຸຂະພາບສັດສາກົນກຳນົດ.

**2.11. ນໍ້າເຊື້ອຂອງງົວ, ຄວາຍ**

1. ຕ້ອງມີການລະບຸຂໍ້ມູນ ກ່ຽວກັບ: ຊື່ ແລະ ທີ່ຢູ່ ຂອງສະຖານທີ່ຜະລິດນໍ້າເຊື້ອ, ຈຳນວນ, ຊະນິດ ແລະ ພັນ, ເລກລະຫັດທະບຽນພົມສັດຂອງພໍ່ພັນ, ວັນເດືອນປີ ເກັບນໍ້າເຊື້ອ, ເລກລະຫັດຫຼອດນໍ້າເຊື້ອ;
2. ນໍ້າເຊື້ອ ຕ້ອງມາຈາກປະເທດປອດພະຍາດ Rinderpest ແລະ ພະຍາດ Contagious Bovine Pleuropneumonia ພາຍໃນ 24 ເດືອນ ກ່ອນການເກັບນໍ້າເຊື້ອເພື່ອສົ່ງອອກ;
3. ນໍ້າເຊື້ອ ຕ້ອງມາຈາກປະເທດ ຫຼື ຂົງເຂດ ຫຼື ເຂດປອດພະຍາດ Foot-and-Mouth Disease (FMD) ແລະ Bovine Spongiform Encephalpathy (BSE);
4. ນໍ້າເຊື້ອ ຕ້ອງຜະລິດມາຈາກ ສູນ ຫຼື ສະຖານີ ຜະລິດນໍ້າເຊື້ອທີ່ໄດ້ຮັບການຮັບຮອງຈາກອົງການຄຸ້ມຄອງຂອງລັດຂອງປະເທດສົ່ງອອກ ແລະ ຢູ່ພາຍໃຕ້ການກວດກາຕິດຕາມດ້ານສຸຂານາໄມ ຂອງພະນັກງານສັດຕະວະແພດ;
5. ສູນຜະລິດນໍ້າເຊື້ອຕ້ອງຕັ້ງຢູ່ໃນເຂດ ທີ່ບໍ່ພົບອາການຂອງພະຍາດ Bluetongue ພາຍໃນ 12 ເດືອນ ກ່ອນ ຈົນເຖິງມື້ເກັບນໍ້າເຊື້ອສົ່ງອອກມາຍັງ ສປປ ລາວ;
6. ພໍ່ພັນ ແລະ ສັດລໍ້ ຕ້ອງບໍ່ມີອາການຂອງພະຍາດ Tuberculosis, Brucellosis, Leptospirosis, Johne's Disease, Enzootic Bovine Leukosis, Infectious Bovine Rhinotracheitis, Infectious Pustular Vulvovaginitis, Bovine Viral Diarrhoea/Mucosal Disease, Mycoplasmosis, Vesicular Stomatitis,

Campylobacter fetus ແລະ Trichomonas fetus infection ພາຍໃນ 12 ເດືອນ ກ່ອນຈົນຮອດມື້ເກັບນ້ຳເຊື້ອເພື່ອສົ່ງມາຍັງ ສປປ ລາວ;

7. ສັດ ຕ້ອງມີສຸຂະພາບສົມບູນແຂງແຮງ ແລະ ມີຄວາມປົກກະຕິທາງຮ່າງກາຍ, ສະລີລະສາດ ແລະ ຜ່ານກວດກວດກາ ວິໄຈເປັນຜົນລົບ ສຳລັບພະຍາດ Bovine tuberculosis, Bovine brucellosis, Campylobacter fetus var. venerealis ແລະ Trichomoniasis ກ່ອນນຳມາແຍກກັກຂັງເພື່ອເກັບນ້ຳເຊື້ອ 30 ວັນ;

8. ສັດປະເພດ ງົວ, ຄວາຍ ທຸກໂຕທີ່ມີອາຍຸ 6 ເດືອນຂຶ້ນໄປ ທີ່ມີການສຳພັດກັບພໍ່ພັນທີ່ເກັບນ້ຳເຊື້ອ ທີ່ຢູ່ໃນສູນຜະລິດນ້ຳເຊື້ອດຽວກັນ ຕ້ອງໄດ້ເກັບຕົວຢ່າງກວດຫາພະຍາດ Viral Diarrhoea ແລະ ຕ້ອງມີຜົນເປັນລົບ;

9. ພໍ່ພັນ ແລະ ສັດລໍ້ ທີ່ຖືກເກັບນ້ຳເຊື້ອແລ້ວ ຕ້ອງຖືກກັກຂັງແຍກຢູ່ສູນເກັບນ້ຳເຊື້ອ 30 ວັນ ແລະ ຕ້ອງໄດ້ມີການວິໄຈຊ້ຳຄືນ ເປັນແຕ່ລະກໍລະນີ ດັ່ງນີ້:
   - ກວດຊ້ຳຄືນ ແລະ ມີຜົນເປັນລົບ ສຳລັບພະຍາດ Tuberculosis, Brucellosis ແລະ ໃນທຸກໆ 12 ເດືອນ ຕ້ອງມີການກວດຊ້ຳ;
   - ກວດຊ້ຳຄືນ ແລະ ມີຜົນເປັນລົບ ສຳລັບພະຍາດ Campylobacter fetus var. venerealis ແລະ Trichomonas foetus infection ທຸກຄັ້ງຫຼັງຈາກທີ່ມີການນຳໃຊ້ຖົງຢາຕ້ານເຊື້ອເພື່ອປິ່ນປົວພະຍາດ Campylobacter;
   - ກວດຊ້ຳຄືນ ແລະ ມີຜົນເປັນລົບ ສຳລັບພະຍາດ Bluetongue ໃນມື້ເກັບນ້ຳເຊື້ອ ແລະ ກວດຊ້ຳອີກ ຫຼັງຈາກເກັບນ້ຳເຊື້ອ 40 ວັນ;
   - ກວດຊ້ຳຄືນ ແລະ ມີຜົນເປັນລົບ ສຳລັບພະຍາດ Enzootic Bovine Leukosis, Infectious Bovine Rhinotracheitis/Infectious Pustular Vulvovaginitis, Leptospirosis, Bovine Viral Diarrhoea/Mucosal Disease ແລະ Johne's disease ໂດຍຕ້ອງນຳໃຊ້ວິທີການວິໄຈທີ່ອົງການສຸຂະພາບສັດສາກົນແນະນຳ.

10. ນ້ຳເຊື້ອ ຕ້ອງເກັບຈາກພໍ່ພັນທີ່ສົມບູນ ທີ່ປະຫວັດການປະສົມພັນດີດີ, ຄວາມສົມບູນຂອງລູກ, ຫຼານດີ ແລະ ບໍ່ພົບຄວາມບົກຜ່ອງທາງພັນທຸກຳ;

11. ຕ້ອງລະບຸຊະນິດ ຂອງນ້ຳຢາເກັບຮັກສານ້ຳເຊື້ອ, ຢາຕ້ານເຊື້ອ ຫຼື ສານອື່ນທີ່ປະສົມລົງໃນນ້ຳເຊື້ອ;

12. ນ້ຳເຊື້ອຕ້ອງຜະລິດ, ປຸງແຕ່ງ ແລະ ເກັບຮັກສາ ຕາມຄຳແນະນຳຂອງອົງການສຸຂະພາບສັດສາກົນກຳນົດ.

**2.12. ນ້ຳເຊື້ອຂອງ ແກະ, ແບ້**

1. ຕ້ອງມີການລະບຸຂໍ້ມູນ ກ່ຽວກັບ: ຊື່ ແລະ ທີ່ຢູ່ ຂອງສະຖານທີ່ຜະລິດນ້ຳເຊື້ອ, ຈຳນວນ, ຊະນິດ ແລະ ພັນ, ເລກລະຫັດທະບຽນພິມສັດຂອງພໍ່ພັນ, ວັນເດືອນປີ ເກັບນ້ຳເຊື້ອ, ເລກລະຫັດຫຼອດນ້ຳເຊື້ອ;
2. ນ້ຳເຊື້ອ ຕ້ອງມາຈາກປະເທດ ປອດພະຍາດ Rinderpest, Peste des Petits Ruminants, Contagious Caprine Pleuropneumonia, Scrapie, Maedi-Visna, Caprine Arthritis/ Encephalitis, Pulmonary Adenomatosis (Jaggsiekte), Sheep Pox ແລະ Goat Pox ພາຍໃນ 24 ເດືອນ ກ່ອນການເກັບນ້ຳເຊື້ອເພື່ອສົ່ງອອກ;
3. ນ້ຳເຊື້ອ ຕ້ອງມາຈາກປະເທດ ຫຼື ຂົງເຂດ ຫຼື ເຂດ ທີ່ປອດພະຍາດ Foot-and-Mouth Disease;

4. ນ້ຳເຊື້ອ ຕ້ອງຜະລິດມາຈາກສູນ ຫຼື ສະຖານີຜະລິດນ້ຳເຊື້ອ ທີ່ໄດ້ຮັບການຮັບຮອງ ຈາກອົງການຄຸ້ມຄອງຂອງລັດຂອງປະເທດສົ່ງອອກ ແລະ ຕ້ອງຢູ່ພາຍໃຕ້ການກວດກາຕິດຕາມດ້ານສຸຂານາໄມຂອງພະນັກງານສັດຕະວະແພດ;
5. ສູນ ຫຼື ສະຖານີຜະລິດນ້ຳເຊື້ອ ຕ້ອງຕັ້ງຢູ່ໃນເຂດທີ່ບໍ່ພົບອາການຂອງພະຍາດ Bluetongue ພາຍໃນ 12 ເດືອນກ່ອນ ຈົນເຖິງມື້ຮີດນ້ຳເຊື້ອ ແລະ ສົ່ງອອກນ້ຳເຊື້ອມາຍັງ ສປປ ລາວ;
6. ພໍ່ພັນ ແລະ ສັດລໍ້ ຕ້ອງບໍ່ມີອາການຂອງພະຍາດ Caprine ແລະ Ovine Brucellosis, Contagious agalactia (Mycoplasma agalactia) ພາຍໃນ 6 ເດືອນ, ບໍ່ມີອາການຂອງພະຍາດ Peste des Petits Ruminants, Contagious Caprine;
7. Pleuropneumonia, Caseous Lymphadenitis ແລະ Brucella ovis infection ພາຍໃນ 12 ເດືອນ ແລະ ພະຍາດ Scrapie, Pulmonany Adenomatosis, Maedi-Visna ແລະ Caprine Arthritis/Encephalitis (CAE) ພາຍໃນ 3 ປີ ກ່ອນ ຈົນຮອດມື້ເກັບ ແລະ ສົ່ງນ້ຳເຊື້ອມາຍັງ ສປປ ລາວ;
8. ສັດ ຕ້ອງໄດ້ແຍກກັກຂັງ ຢ່າງໜ້ອຍ 30 ວັນ ຢູ່ໃນສະຖານທີ່ຕ່າງຫາກ. ໃນລະຫວ່າງທີ່ກັກກັນ ຕ້ອງໄດ້ເກັບຕົວຢ່າງເພື່ອວິໄຈ ກວດຫາເຊື້ອພະຍາດ Caprine ແລະ Ovine Brucellosis. ກວດຫາພະຍາດ Contagious Caprine Pleuropneumonia ແລະ ພະຍາດ Tuberculosis (ສຳລັບແບ້), ກວດຫາ ພະຍາດ Maedi - Visna, Caprine Arthritis/Encephalitis, Border Disease ແລະ ພະຍາດ Bluetongue ໂດຍ ຜົນການ ວິໄຈຕ້ອງເປັນລົບ;
9. ພໍ່ພັນ ແລະ ສັດລໍ້ ທີ່ຖືກເກັບນ້ຳເຊື້ອແລ້ວ ຕ້ອງຖືກກັກຂັງແຍກຢູ່ສູນເກັບນ້ຳເຊື້ອ 30 ວັນ ແລະ ຕ້ອງໄດ້ມີການວິໄຈຊ້ຳຄືນ ເປັນແຕ່ລະກໍລະນີດັ່ງນີ້:
   - ກວດຊ້ຳຄືນ ແລະ ມີຜົນເປັນລົບສຳລັບພະຍາດ Tuberculosis, Caprine ແລະ Ovine Brucellosis ແລະ ໃນທຸກໆ 12 ເດືອນ ຕ້ອງມີການກວດຊ້ຳ;
   - ກວດຊ້ຳຄືນ ແລະ ມີຜົນເປັນລົບ ສຳລັບພະຍາດ Bluetongue, Maedi-Visna and Caprine Arthritis/ Encephalitis, Leptospirosis ແລະ Johne's Disease ໂດຍຕ້ອງນຳໃຊ້ວິທີການວິໄຈ ທີ່ອົງການສຸຂະພາບສັດສາກົນແນະນຳ;
10. ນ້ຳເຊື້ອຕ້ອງເກັບຈາກພໍ່ພັນທີ່ສົມບູນ, ມີປະຫວັດການປະສົມພັນຕິດ ແລະ ຄວາມສົມບູນຂອງລູກຫຼານ ດີ ແລະ ບໍ່ພົບຄວາມບົກຜ່ອງທາງພັນທຸກຳ;
11. ຕ້ອງລະບຸຊະນິດ ຂອງນ້ຳຢາເກັບຮັກສານ້ຳເຊື້ອ, ຢາຕ້ານເຊື້ອ ຫຼື ສານອື່ນທີ່ປະສົມລົງໃນນ້ຳເຊື້ອ;
12. ນ້ຳເຊື້ອຕ້ອງຜະລິດ, ປຸງແຕ່ງ ແລະ ເກັບຮັກສາ ຕາມຄຳແນະນຳຂອງອົງການສຸຂະພາບສັດສາກົນກຳນົດ.

**2.13. ຕົວອ່ອນຂອງ ງົວ, ຄວາຍ**

1. ຕ້ອງມີການລະບຸຂໍ້ມູນ ກ່ຽວກັບ: ຊື່ ແລະ ທີ່ຢູ່ ຂອງສະຖານທີ່ຜະລິດຕົວອ່ອນ, ຈຳນວນ, ຊະນິດ ແລະ ພັນ, ເລກລະຫັດທະບຽນພົມສັດຂອງພໍ່ພັນ, ວັນເດືອນປີ ເກັບຕົວອ່ອນ, ເລກລະຫັດຖັງເກັບຕົວອ່ອນ;
2. ຕົວອ່ອນ ຕ້ອງມາຈາກປະເທດປອດພະຍາດ Rinderpest, Contagious Bovine Pleuropneumonia ແລະ Bovine Spongiform Encephalopathy (BSE);
3. ນ້ຳເຊື້ອ ຕ້ອງມາຈາກປະເທດ ຫຼື ຂົງເຂດ ຫຼື ເຂດ ປອດພະຍາດ Foot and Mouth Disease;

4. ສູນ ຫຼື ສະຖານີ ທີ່ເປັນບ່ອນເກັບຕົວອ່ອນ ຕ້ອງບໍ່ມີລາຍງານເກີດພະຍາດ Foot and Mouth Disease ຕິດຕໍ່ກັນ 3 ປີ ແລະ ປອດພະຍາດ Brucellosis, Tuberculosis ແລະ Vesicular Stomatitis ກ່ອນໜ້າເກັບຕົວອ່ອນ 12 ເດືອນ;
5. ຟາມ ຫຼື ສູນ ຫຼື ສະຖານີເກັບຕົວອ່ອນ ຕ້ອງບໍ່ພົບອາການຂອງພະຍາດ Tuberculosis, Brucellosis, Leptospirosis, Johne's Disease, Enzootic Bovine Leukosis, Infectious Bovine Rhinotracheitis, Infectious Pustular Vulvovaginitis, Bovine Viral Diarrhoea / Mucosal Disease (BVD/MD), Mycoplasmosis, Vesicular Stomatitis, Campylobacter fetus ແລະ Trichomonas fetus infection ພາຍໃນ 12 ເດືອນ ຕິດຕໍ່ກັນຈົນເຖິງມື້ເກັບ ແລະ ສົ່ງອອກຕົວອ່ອນມາຍັງ ສປປ ລາວ;
6. ກ່ອນການເກັບຕົວອ່ອນ ສັດທີ່ເປັນໂຕໃຫ້ ຕ້ອງໄດ້ກວດກາວິໄຈຕາມວິທີການທີ່ອົງການສຸຂະພາບສັດສາກົນແນະນໍາ ໂດຍຕ້ອງໃຫ້ມີຜົນລົບ ຂອງເຊື້ອພະຍາດ Bluetongue, Bovine Viral Diarrhoea, Brucellosis, Campylobacteriosis, Trichomoniasis, Enzootic Bovine Leukosis, Infectious Bovine Rhinotracheitis, Infectious Vulvovaginitis ແລະ Leptospirosis;
7. ແມ່ພັນ ທີ່ເປັນໂຕຕ້ອງລ້ຽງຢູ່ໃນສູນ ຫຼື ຟາມ ພາຍໃນໄລຍະທີ່ເໝາະສົມ ກ່ອນການເກັບຕົວອ່ອນ, ການເກັບ, ກະກຽມ, ບໍາບັດ ແລະ ເກັບຮັກສາຕົວອ່ອນ ຕ້ອງຢູ່ພາຍໃຕ້ການຄວບຄຸມດູແລຂອງເຈົ້າໜ້າທີ່ສັດຕະວະແພດ ແລະ ດໍາເນີນໄປຕາມຂັ້ນຕອນ ທີ່ອົງການສຸຂະພາບສັດສາກົນ ແລະ ອົງການຝາກຕົວອ່ອນສາກົນກໍານົດ;
8. ຕົວອ່ອນ ຕ້ອງຜ່ານການກວດສອບໄຂ່ທີ່ປະສົມຕິດ ຫຼື ປະສົມບໍ່ຕິດ ແລະ ກວດກາການວິວັດທະນາການຂອງໝໍ່ລູກ ພ້ອມທັງມີການລ້າງ, ກວດສອບ ແລະ ບໍາບັດ ຕາມວິທີການທີ່ອົງການຝາກຕົວອ່ອນສາກົນກໍານົດ;
9. ພາຍຫຼັງທີ່ມີການກະກຽມຕົວອ່ອນ ຈົນຮອດໄລຍະສົ່ງຕົວອ່ອນມາຍັງ ສປປ ລາວ ຕົວອ່ອນດັ່ງກ່າວຕ້ອງເກັບຮັກສາໄວ້ ພາຍໃນເງື່ອນໄຂດ້ານສຸຂະນາໄມທີ່ດີທີ່ສຸດ ແລະ ຕ້ອງຢູ່ໃນບ່ອນກັກກັນທີ່ມີເຈົ້າໜ້າທີ່ສັດຕະວະແພດຂອງລັດປະເທດສົ່ງອອກ ຄວບຄຸມດູແລ.

**2.14. ໄຂ່ເຊື້ອ ແລະ ລູກສັດປີກ ອາຍຸ 1 ວັນ**

1. ຕ້ອງມີການລະບຸຂໍ້ມູນ ກ່ຽວກັບ: ຊື່ ແລະ ທີ່ຢູ່ ຂອງສະຖານທີ່ຜະລິດ, ຈໍານວນ, ຊະນິດ, ເພດ ແລະ ພັນ;
2. ຕ້ອງມາຈາກປະເທດທີ່ປອດພະຍາດໄຂ້ຫວັດສັດປີກ;
3. ຕ້ອງມາຈາກປະເທດ ຫຼື ຂົງເຂດ ຫຼື ເຂດ ທີ່ປອດພະຍາດ Newcastle Disease, Parvovirus Infection, Avian Encephalitis, Duck Plaque, Salmonellosis (Salmonella typhimurium ແລະ S. enteritidis);
4. ໄຂ່ເຊື້ອ ແລະ ລູກສັດປີກອ່ອນ ຕ້ອງມາຈາກຟາມຜະລິດລູກສັດປີກ ທີ່ມີການຄຸ້ມຄອງດ້ານສຸຂະນາໄມ ແລະ ມີມາດຕະການປ້ອງກັນພະຍາດ ທີ່ຮັບຮອງໂດຍອົງການຄຸ້ມຄອງທີ່ກ່ຽວຂ້ອງຂອງປະເທດສົ່ງອອກ ແລະ ຕ້ອງປະຕິບັດຕາມມາດຕະຖານທີ່ອົງການສຸຂະພາບສັດສາກົນກໍານົດ;
5. ໄຂ່ເຊື້ອ ຫຼື ລູກສັດປີກ ຕ້ອງມາຈາກ ຝູງສັດປີກທີ່ມີການຢັ້ງຢືນຢ່າງເປັນທາງການປອດຈາກພະຍາດ pullorum (accredited pullorum-free flock). ໂດຍການຢັ້ງຢືນດັ່ງກ່າວ ຕ້ອງຜ່ານການວິໄຈເປັນຜົນລົບຈາກການກວດເລືອດ 2 ຄັ້ງ ຕິດຕໍ່ກັນ; ຄັ້ງທໍາອິດ ແມ່ນກວດຝູງສັດປີກທັງໝົດທີ່ມີອາຍຸ

4 ເດືອນ ແລະ ຄັ້ງທີ່ສອງ ແມ່ນການສຸ່ມກວດຝູງສັດປີກທີ່ມີຜົນລົບຄັ້ງທຳອິດ ໃຫ້ຫ່າງກັນ 21 ວັນ ໂດຍຂັ້ນຕອນ ແລະ ວິທີການວິໃຈ ຕ້ອງປະຕິບັດຕາມວິທີການທີ່ຂອງອົງການສຸຂະພາບສັດສາກົນແນະນຳ;

6. ຕູ້ຟັກໄຂ່ ຕ້ອງມີການອະນາໄມ ແລະ ຂ້າເຊື້ອ ແລະ ຕ້ອງນຳເອົາໄຂ່ຈາກຝູງສັດປີກທີ່ປອດຈາກພະຍາດ Pullorum ເທົ່ານັ້ນເຂົ້າມາຟັກ;
7. ລູກສັດປີກອ່ອນ ທີ່ຈະນຳເຂົ້າ ສປປ ລາວ ຕ້ອງມາຈາກພໍ່ ແລະ ແມ່ພັນ ທີ່ຖືກລ້ຽງຢ່າງຕໍ່ເນື່ອງຢູ່ໃນຟາມລ້ຽງສັດປີກ ທີ່ຖືກຮັບຮອງໃຫ້ເປັນຟາມຜະລິດສັດປີກ ເພື່ອການສົ່ງອອກເທົ່ານັ້ນ;
8. ກ່ອງບັນຈຸໄຂ່ເຊື້ອ ແລະ ລູກສັດປີກອ່ອນ ຕ້ອງໃໝ່ ແລະ ເອົາຈາກສະຖານທີ່ຟັກໄຂ່ເພື່ອການສົ່ງອອກເປັນການສະເພາະ ແລະ ຕ້ອງບໍ່ໃຫ້ສຳພັດກັບໄຂ່ ແລະ ສັດປີກອື່ນທີ່ບໍ່ມີສະຖານະພາບດ້ານສຸຂະພາບສັດຄືກັນ.

### 2.15. ຊີ້ນໝູ ແລະ ຜະລິດຕະພັນໝູ ທີ່ບໍລິໂພກໄດ້

1. ຕ້ອງມີການລະບຸຂໍ້ມູນ ກ່ຽວກັບ: ຊື່ປະເພດຂອງສິ້ນສ່ວນຊາກ ແລະ ການບັນຈຸ ຫຼື ຫຸ້ມຫໍ່, ຈຳນວນຫີບຫໍ່ ແລະ ນ້ຳໜັກ, ເລກລະຫັດທະບຽນໂຮງຂ້າສັດ ຫຼື ສະຖານທີ່ປະກອບການຜະລິດ, ວັນເດືອນປີ ຂ້າ/ຄືວ, ຫຸ້ມຫໍ່ ແລະ ວັນເດືອນປີສົ່ງອອກ;
2. ຕ້ອງມາຈາກປະເທດ ປອດພະຍາດ African Swine Fever;
3. ຕ້ອງມາຈາກປະເທດ ຫຼື ຂົງເຂດ ຫຼື ເຂດ ບໍ່ມີລາຍງານການເກີດພະຍາດ Foot and Mouth Disease ແລະ ພະຍາດຕິດຕໍ່ທີ່ຈຳເປັນຕ້ອງແຈ້ງອື່ນ ຕາມການກຳນົດຂອງອົງການສຸຂະພາບສັດສາກົນ ພາຍໃນຢ່າງໜ້ອຍ 12 ເດືອນ ກ່ອນການດຳເນີນການຂ້າເພື່ອສົ່ງອອກ.
4. ໝູທີ່ຈະສົ່ງອອກຕ້ອງລ້ຽງ ໃນປະເທດສົ່ງອອກ ບໍ່ຕ່ຳກວ່າ 3 ເດືອນ ກ່ອນສົ່ງເຂົ້າຂ້າ ແລະ ຕ້ອງມາຈາກຟາມທີ່ອົງການຄຸ້ມຄອງຂອງປະເທດສົ່ງອອກຮັບຮອງ;
5. ຊີ້ນ ຫຼື ຜະລິດຕະພັນສັດ ຕ້ອງມາຈາກໂຮງທີ່ຖືກຮັບຮອງສຳລັບການສົ່ງອອກ ໂດຍມີການກວດກາດູແລດ້ານມາດຖານສຸຂານາໄມ ຈາກສັດຕະວະແພດຂອງອົງການຄຸ້ມຄອງຂອງປະເທດສົ່ງອອກ ແລະ ຕ້ອງມີມາດຕະການປ້ອງກັນການປົນເປື້ອນ ໃນທຸກຂັ້ນຕອນ ເປັນຕົ້ນຕັ້ງແຕ່ຂອດການຜະລິດ, ຫຸ້ມຫໍ່, ເກັບຮັກສາ ຈົນເຖິງການຂົນສົ່ງໃນເວລາສົ່ງອອກ;
6. ສັດທີ່ນຳເຂົ້າຂ້າ ຕ້ອງຜ່ານການກວດກາກ່ອນຂ້າ ແລະ ກວດກາອະນາໄມຊີ້ນຫຼັງຂ້າ ແລະ ຕ້ອງຢັ້ງຢືນບໍ່ພົບຮ່ອງຮອຍຜິດປົກກະຕິຂອງພະຍາດຮ້າຍແຮງ ເປັນຕົ້ນແມ່ນພະຍາດ ລໍຊໍ;
7. ຊີ້ນ ແລະ ຜະລິດຕະພັນ ຕ້ອງບໍ່ມີສານເລັ່ງຊີ້ນແດງ, ສານກັນການເນົ່າເສຍ, ສານເພີ່ມ ຫຼື ສານອື່ນທີ່ເປັນພິດ ທີ່ຈະເກີດອັນຕະລາຍຕໍ່ສຸຂະພາບຂອງຜູ້ບໍລິໂພກ;
8. ຊີ້ນ ແລະ ຜະລິດຕະພັນ ຕ້ອງໄດ້ເກັບຕົວຢ່າງໄປວິໃຈ ເພື່ອຊອກຫາເຊື້ອຈຸລິນຊີ ແລະ ສານຕົກຄ້າງເປັນຕົ້ນຮໍໂມນ, ສານເລັ່ງຊີ້ນແດງ ແລະ ສານອື່ນທີ່ເປັນອາດເປັນພິດ ແລະ ຕ້ອງບໍ່ໃຫ້ມີປະລິມານເກີນກວ່າເກນມາດຕະຖານທີ່ ສປປ ລາວ ຍອມຮັບ ຫຼື ເກີນມາດຕະຖານສາກົນ ທີ່ອົງການ Codex Alimentarius ກຳນົດ;
9. ຊີ້ນ ຫຼື ຜະລິດຕະພັນສັດຕ້ອງໄດ້ຮັບ ກາໝາຍຮັບຮອງຄວາມປອດໄພທາງດ້ານອາຫານ ຫຼື ສັນຍາລັກທາງການທີ່ບົ່ງບອກເຖິງຜະລິດຕະພັນໄດ້ຮັບຮູ້ວ່າ ໄດ້ຜ່ານຂະບວນການຜະລິດທີ່ໄດ້ມາດຕະຖານທີ່ຍອມຮັບໂດຍປະເທດສົ່ງອອກ ແລະ ສປປ ລາວ.

**2.16. ຊີ້ນງົວ ແລະ ຜະລິດຕະພັນ ທີ່ກິນໄດ້ ຂອງງົວ, ຄວາຍ, ແກະ, ແບ້**

1. ຕ້ອງມີການລະບຸຂໍ້ມູນ ກ່ຽວກັບ: ຊື່ປະເພດຂອງສິ້ນສ່ວນຊາກ ແລະ ການບັນຈຸ ຫຼື ຫຸ້ມຫໍ່, ຈຳນວນ ຊິກ ຫຼື ຫີບຫໍ່ ແລະ ນ້ຳໜັກ, ຊື່, ທີ່ຢູ່ ແລະ ເລກລະຫັດທະບຽນສະຖານປະກອບການຜະລິດ; ວັນເດືອນປີ ຂ້າ/ຄົວ, ຫຸ້ມຫໍ່ ແລະ ວັນເດືອນປີສົ່ງອອກ;
2. ຊີ້ນ ແລະ ຜະລິດຕະພັນສັດທີ່ກິນໄດ້ຕ້ອງມາຈາກປະເທດປອດພະຍາດ Rinderpest ແລະ Bovine Spongiform Encephalopathy;
3. ຊີ້ນ ແລະ ຜະລິດຕະພັນສັດທີ່ກິນໄດ້ ຕ້ອງມາຈາກປະເທດ ຫຼື ຂົງເຂດ ຫຼື ເຂດ ທີ່ບໍ່ມີລາຍງານການເກີດພະຍາດ Foot and Mouth Disease ແລະ ພະຍາດຕິດຕໍ່ທີ່ຈຳເປັນຕ້ອງແຈ້ງອື່ນ ຕາມການກຳນົດຂອງອົງການສຸຂະພາບສັດສາກົນ ພາຍໃນຢ່າງໜ້ອຍ 12 ເດືອນ ກ່ອນການດຳເນີນການຂ້າເພື່ອສົ່ງອອກ;
4. ສັດທີ່ນຳເຂົ້າຂ້າຕ້ອງມາຈາກຟາມ ທີ່ອົງການຄຸ້ມຄອງຂອງປະເທດສົ່ງອອກຮັບຮອງ ແລະ ຕ້ອງບໍ່ມີລາຍງານການເກີດພະຍາດທີ່ຈຳເປັນຕ້ອງແຈ້ງ ຂອງສັດຄ້ຽວເອື້ອງ ພາຍໃນ 12 ເດືອນ ກ່ອນການດຳເນີນການຂ້າເພື່ອສົ່ງອອກ;
5. ຊີ້ນ ແລະ ຜະລິດຕະພັນສັດທີ່ກິນໄດ້ ຕ້ອງມາຈາກໂຮງທີ່ໄດ້ຮັບການຮັບຮອງສຳລັບການສົ່ງອອກ ທີ່ມີການຕິດຕາມກວດກາດູແລດ້ານ ມາດຖານສຸຂານາໄມ ຈາກສັດຕະວະແພດ ຂອງອົງການຄຸ້ມຄອງຂອງປະເທດສົ່ງອອກ. ໂດຍມີມາດຕະການປ້ອງກັນການປົນເປື້ອນ ໃນທຸກຂັ້ນຕອນຂອງການຜະລິດ, ຫຸ້ມຫໍ່, ເກັບຮັກສາ ຈົນເຖິງການຂົນສົ່ງໃນເວລາສົ່ງອອກ;
6. ສັດທີ່ນຳເຂົ້າຂ້າ ຕ້ອງຜ່ານການກວດກາສັດກ່ອນຂ້າ ແລະ ຜະລິດຕະພັນຕ້ອງຜ່ານການກວດກາອະນາໄມຊີ້ນຫຼັງຂ້າ ໂດຍຕ້ອງບໍ່ພົບຮ່ອງຮອຍຜິດປົກກະຕິຂອງພະຍາດສັດຮ້າຍແຮງ;
7. ຊີ້ນ ແລະ ຜະລິດຕະພັນສັດຕ້ອງບໍ່ມີສານກັນການເນົ່າເສັຍ, ສານເພີ່ມ ຫຼື ສານອື່ນທີ່ມີພິດ ທີ່ເປັນອັນຕະລາຍຕໍ່ສຸຂະພາບຂອງຜູ້ບໍລິໂພກ;
8. ຊີ້ນ ແລະ ຜະລິດຕະພັນສັດທີ່ກິນໄດ້ ຕ້ອງໄດ້ເກັບຕົວຢ່າງໄປວິໄຈ ຊອກຫາເຊື້ອຈຸລິນຊີ ແລະ ສານຕົກຄ້າງ ເປັນຕົ້ນແມ່ນ ຮໍໂມນ, ສານເລັ່ງຊີ້ນແດງ, ສານທີ່ເປັນພິດ ແລະ ຕ້ອງບໍ່ໃຫ້ມີປະລິມານເກີນກວ່າເກນມາດຕະຖານທີ່ ສປປ ລາວ ຍອມຮັບ ຫຼື ມາດຕະຖານສາກົນ ທີ່ອົງການ Codex Alimentarius ກຳນົດ;
9. ຊີ້ນ ແລະ ຜະລິດຕະພັນສັດ ຕ້ອງໄດ້ຮັບ ກາໝາຍຮັບຮອງຄວາມປອດໄພທາງດ້ານອາຫານ ຫຼື ສັນ ຍາລັກທາງການ ທີ່ບົ່ງບອກເຖິງຜະລິດຕະພັນໄດ້ຮັບຮູ້ວ່າໄດ້ຜ່ານຂະບວນການຜະລິດທີ່ໄດ້ມາດຕະ ຖານທີ່ຍອມຮັບໂດຍ ສປປ ລາວ.

**2.17. ຊີ້ນກວາງ ແລະ ຜະລິດຕະພັນກວາງລ້ຽງ ທີ່ກິນໄດ້**

1. ຕ້ອງມີການລະບຸຂໍ້ມູນ ກ່ຽວກັບ: ຊື່ປະເພດຂອງສິ້ນສ່ວນຊາກ ແລະ ການບັນຈຸ ຫຼື ຫຸ້ມຫໍ່, ຈຳນວນ ຊິກ ຫຼື ຫີບຫໍ່ ແລະ ນ້ຳໜັກ, ທີ່ຢູ່ ແລະ ເລກລະຫັດທະບຽນສະຖານປະກອບການຜະລິດ; ວັນເດືອນປີ ຂ້າ/ຄົວ, ຫຸ້ມຫໍ່ ແລະ ວັນເດືອນປີສົ່ງອອກ;
2. ຊີ້ນ ແລະ ຜະລິດຕະພັນນັ້ນ ຕ້ອງມາຈາກປະເທດ ປອດພະຍາດ Rinderpest ແລະ Contagious Bovine Pleuropneumonia;
3. ຊີ້ນ ແລະ ຜະລິດຕະພັນ ຕ້ອງມາຈາກປະເທດ ຫຼື ຂົງເຂດ ຫຼື ເຂດ ປອດພະຍາດ Foot and Mouth Disease ແລະ ພະຍາດຕິດຕໍ່ທີ່ຈຳເປັນຕ້ອງແຈ້ງອື່ນ ຕາມການກຳນົດຂອງອົງການສຸຂະພາບສັດສາກົນ ພາຍໃນຢ່າງໜ້ອຍ 12 ເດືອນ ກ່ອນການດຳເນີນການຂ້າເພື່ອສົ່ງອອກ;

4. ກວາງທີ່ນໍາເຂົ້າຂ້າໃນໂຮງຂ້າສັດ ຕ້ອງມາຈາກຟາມ ທີ່ບໍ່ພົບອາການຂອງພະຍາດ Clostridial disease, Yersiniosis, Mucosal Disease, Johne's Disease, Bluetongue, Vesicular Stomatitis, Leptospirosis, Malignant Catarrhal Fever, Brucellosis ແລະ Tuberculosis ພາຍໃນ 12 ເດືອນກ່ອນນໍາເຂົ້າຂ້າ;
5. ຊີ້ນ ແລະ ຜະລິດຕະພັນ ຕ້ອງບໍ່ມີສານກັນການເນົ່າເສຍ, ສານເພີ່ມ ຫຼື ສານອື່ນທີ່ມີພິດ ທີ່ຈະເປັນອັນຕະລາຍຕໍ່ສຸຂະພາບຂອງຜູ້ບໍລິໂພກ;
6. ຊີ້ນ ແລະ ຜະລິດຕະພັນ ຕ້ອງໄດ້ເກັບຕົວຢ່າງໄປວິໃຈ ຊອກຫາເຊື້ອຈຸລິນຊີ ແລະ ສານຕົກຄ້າງ ເປັນຕົ້ນແມ່ນ ຮໍໂມນ, ສານເລັ່ງຊີ້ນແດງ, ສານທີ່ເປັນພິດ ແລະ ຕ້ອງບໍ່ໃຫ້ມີປະລິມານເກີນກວ່າເກນມາດຕະຖານທີ່ ສປປ ລາວຍອມຮັບ ຫຼື ມາດຕະຖານສາກົນ ທີ່ອີງການ Codex Alimentarius ກໍານົດ.

**2.18. ຊີ້ນນົກກະຈອກເທດ ແລະ ຊີ້ນນົກອີມູ**

1. ຕ້ອງລະບຸຂໍ້ມູນ ກ່ຽວກັບ: ປະເພດຂອງສິ້ນສ່ວນຊາກ ແລະ ການບັນຈຸ ຫຼື ຫຸ້ມຫໍ່, ຈໍານວນ ແລະ ນໍ້າໜັກ, ເລກລະຫັດທະບຽນຟາມ ຫຼື ສະຖານປະກອບການຜະລິດ, ວັນເດືອນປີ ຂ້າ/ຄົວ, ຫຸ້ມຫໍ່, ວັນເດືອນປີ ທີ່ຈະສົ່ງອອກ ແລະ ນໍາເຂົ້າ ສປປ ລາວ;
2. ນົກກະຈອກເທດ ແລະ ນົກອີມູ ຕ້ອງມາຈາກສັດຂອງຟາມທີ່ປອດພະຍາດ Newcastle Disease, Avian Influenza, Tuberculosis, Aspergillosis, Colibacillosis, Salmonellosis ເປັນຕົ້ນ S. enteritidis ແລະ S. typhimurium ພາຍໃນ 12 ເດືອນ ກ່ອນການດໍາເນີນການຂ້າເພື່ອສົ່ງອອກ;
3. ສັດທີ່ນໍາເຂົ້າຂ້າ ຕ້ອງຜ່ານການກວດກາສັດກ່ອນຂ້າ ແລະ ກວດກາອະນາໄມຊີ້ນຫຼັງຂ້າ ແລະ ຕ້ອງບໍ່ພົບຮ່ອງຮອຍຜິດປົກກະຕິຂອງພະຍາດຮ້າຍແຮງ;
4. ຊີ້ນ ແລະ ຜະລິດຕະພັນນັ້ນ ຕ້ອງມາຈາກໂຮງງານທີ່ຖືກຮັບຮອງສໍາລັບການສົ່ງອອກ ທີ່ມີການຕິດຕາມກວດກາດູແລດ້ານສຸຂານາໄມຈາກສັດຕະວະແພດ ຂອງອົງການຄຸ້ມຄອງຂອງປະເທດສົ່ງອອກ ແລະ ມີມາດຕະການປ້ອງກັນການປົນເປື້ອນ ໃນທຸກຂັ້ນຕອນ ເປັນຕົ້ນ ການຜະລິດ, ຫຸ້ມຫໍ່, ເກັບຮັກສາ ຈົນເຖິງການຂົນສົ່ງໃນເວລາສົ່ງອອກ;
5. ຊີ້ນ ແລະ ຜະລິດຕະພັນ ຕ້ອງບໍ່ປະສົມສານກັນການເນົ່າເສຍ, ສານເພີ່ມ ຫຼື ສານອື່ນທີ່ມີພິດອັນຕະລາຍຕໍ່ສຸຂະພາບຂອງຜູ້ບໍລິໂພກ;
6. ຊີ້ນ ແລະ ຜະລິດຕະພັນສັດ ຕ້ອງໄດ້ເກັບຕົວຢ່າງໄປວິໃຈ ຊອກຫາເຊື້ອຈຸລິນຊີ ແລະ ສານຕົກຄ້າງ ແລະ ຕ້ອງບໍ່ໃຫ້ມີປະລິມານເກີນກວ່າເກນມາດຕະຖານທີ່ ສປປ ລາວ ຮັບຮອງ ຫຼື ມາດຕະຖານສາກົນ ທີ່ອົງການກົດລະຫັດອາຫານສາກົນ (Codex Alimentarius) ກໍານົດ;
7. ຊີ້ນ ແລະ ຜະລິດຕະພັນ ຕ້ອງໄດ້ຮັບກາໝາຍຮັບຮອງຄວາມປອດໄພ ທາງດ້ານອາຫານ ຫຼື ສັນຍາລັກທາງການ ທີ່ບົ່ງບອກເຖິງຜະລິດຕະພັນໄດ້ຮັບຮູ້ວ່າໄດ້ຜ່ານຂະບວນການຜະລິດທີ່ໄດ້ມາດຕະຖານ ທີ່ຍອມຮັບໂດຍປະເທດສົ່ງອອກ ຫຼື ສປປ ລາວ.

**2.19. ຜະລິດຕະພັນຂອງ ງົວ, ຄວາຍ, ໝູ, ແກະ, ແບ້, ມ້າ, ສັດປີກ ແລະ ສັດປ່າ ກິນບໍ່ໄດ້**

1. ຕ້ອງມີການລະບຸຂໍ້ມູນ ກ່ຽວກັບ: ສິນຄ້າ, ປະເພດຂອງການບັນຈຸ ຫຼື ຫຸ້ມຫໍ່, ຈໍານວນ ແລະ ນໍ້າໜັກ, ທີ່ຢູ່ຂອງໂຮງຂ້າສັດ ຫຼື ສະຖານປະກອບການຜະລິດ. ວັນເດືອນປີ ທີ່ສົ່ງອອກ ແລະ ນໍາເຂົ້າ ສປປ ລາວ;

2. ຜະລິດຕະພັນ ຕ້ອງມາຈາກປະເທດປອດພະຍາດ Rinderpest, African Swine Fever, Transmissible Spongiform Encephalopathy (TSE) ແລະ Avian Influenza (fowl plague) ຫຼື ພະຍາດທີ່ກິນລ້ຽງສັດ ແລະ ການປະມົງ ກຳນົດ;
3. ຜະລິດຕະພັນ ຕ້ອງມາຈາກປະເທດ ຫຼື ຂົງເຂດ ຫຼື ເຂດ ປອດພະຍາດ Foot and Mouth Disease ຢ່າງໜ້ອຍ 12 ເດືອນ ກ່ອນການສົ່ງອອກ;
4. ຜະລິດຕະພັນຕ້ອງບໍ່ມາຈາກເຂດມີການເກີດການລະບາດຂອງພະຍາດທີ່ຈຳເປັນຕ້ອງແຈ້ງ;
5. ຖ້າເປັນຜະລິດຕະພັນ ທີ່ສາມາດໃຊ້ເປັນອາຫານສັດ ຫຼື ໃຊ້ເປັນວັດຖຸດິບເພື່ອອຸດສາຫະກຳປຸງແຕ່ງ ຕ້ອງປຸງແຕ່ງມາຈາກໂຮງງານທີ່ອົງການຄຸ້ມຄອງ ທີ່ກ່ຽວຂ້ອງຂອງລັດຂອງປະເທດສົ່ງອອກອະນຸຍາດ ແລະ ຕ້ອງຢູ່ພາຍໃຕ້ການຕິດຕາມກວດກາຂອງສັດຕະວະແພດຂອງລັດ. ວິທີການປຸງແຕ່ງ ກໍຕ້ອງປະຕິບັດຕາມຄຳແນະນຳຂອງອົງການສຸຂະພາບສັດສາກົນ;
6. ຜະລິດຕະພັນ ຕ້ອງຮັກສາຢູ່ໃນເງື່ອນໄຂ ທີ່ສະອາດ, ປອດໄພ ແລະ ມີມາດຕະການປ້ອງກັນ ການປົນເປື້ອນເປັນຢ່າງດີ. ການຂ້າເຊື້ອພະຍາດ ແລະ ແມງໄມ້ສັດຕູພືດ ກ່ອນການສົ່ງອອກ ກໍຕ້ອງປະຕິບັດຕາມຄຳແນະນຳ ຂອງອົງການສຸຂະພາບສັດສາກົນ.

## ເອກະສານຊ້ອນທ້າຍ 3: ແບບພິມຄໍາຮ້ອງຂໍອະນຸຍາດນໍາເຂົ້າ, ສົ່ງອອກ, ສົ່ງຜ່ານສັດ ແລະ ຜະລິດຕະພັນສັດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
Lao People's Democratic Republic
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
Peace Independence Democracy Unity Prosperity

### ແບບພິມ ຂອຜ 1/Form IET 1

ແຂວງ /Province..................................
ເມືອງ /District.....................................
ບ້ານ/Village.........................................
ຊື່ບໍລິສັດ/Company's Name:............... ເລກທີ/Ref. No:_______________/
ໂທຣ/Tel:....................................... ທີ່/At........................., ວັນທີ/Date: __________
ອີເມລ/email:.................................

### ໃບຄໍາຮ້ອງຂໍອະນຸຍາດນໍາເຂົ້າ/ສົ່ງອອກ/ສົ່ງຜ່ານ/ນໍາເຂົ້າເພື່ອສົ່ງອອກ
### ສັດ, ສັດນໍ້າ, ຜະລິດຕະພັນສິນຄ້າກ່ຽວກັບສັດ ແລະ ການປະມົງ

**APPLICATION FOR IMPORT/EXPORT/IN TRANSIT/ IMPORT FOR RE-EXPORT OF ANIMALS/ AQUATICS/ANIMAL-FISHERIES COMMODITY**

**ຮຽນທ່ານ/TO MR/MS:**................................................

ເລື່ອງ/Subject: ຄໍາຮ້ອງຂໍ ☐ ນໍາເຂົ້າ ☐ ສົ່ງອອກ ☐ ຂົນສົ່ງຜ່ານ ☐ ນາເຂົ້າເພື່ອສົ່ງອອກ
APPLICATION FOR ☐ IMPORT ☐ EXPORT ☐ IN TRANSIT ☐ IMPORT FOR RE-EXPORT

1. ຂ້າພະເຈົ້າ ຊື່/Mr./Ms................................................ສັນຊາດ/ Nationality.....................ອາຊີບ/Profession.................... ຕາງໜ້າໃຫ້ບໍລິສັດ/Name of Company:.................................................ທະບຽນວິສາສະຫະກິດເລກທີ /Business License No ........................ໃບອະນຸຍາດດໍາເນີນທຸລະກິດ ກ່ຽວກັບ ການລ້ຽງສັດ, ການສັດຕະແພດ ຫຼື ການປະມົງ ເລກທີ/ Livestock, Veterinary or Fisheries Operation Permit No..................................ທີ່ຢູ່ຂອງບໍລິສັດ/Address: ໜ່ວຍ/Unit......... ບ້ານ/ Village:.........................ເມືອງ/District: ........................................ແຂວງ /Province.............................. ປະເທດ/Country: ..........................................ໂທລະສັບ/Telephone .................................ອີເມລ/Email...................................ຖື ບັດປະຈໍາຕົວ/ໜັງສືເດີນທາງ/I.D. No./Passport No.............................. ອອກທີ່/ Issued by ....................................ໝົດ ອາຍຸ Expire date.......................................
2. ລາຍການສິນຄ້າທີ່ສະເໜີຂໍໃນຄັ້ງນີ້ມີດັ່ງນີ້ /List of requested Goods are as follow:

| ລ/ດ item | ລາຍການສິນຄ້າ Description of goods | ຫົວໜ່ວຍ Unit | ຈໍານວນ Quantity | ນໍ້າໜັກລວມ Gross Weight | ມູນຄ່າລວມ Amount |
|---|---|---|---|---|---|
| 1. | | | | | |
| 2. | | | | | |
| 3. | | | | | |
| 4. | | | | | |
| 5. | | | | | |
| 6. | | | | | |
| 7. | | | | | |
| 8. | | | | | |
| 9. | | | | | |

**ໝາຍເຫດ: ຖ້າຫາກ ເກີນກວ່າ 10 ລາຍການ ສະເໜີໃຫ້ສ້າງຕາຕະລາງເພີ້ມຄັດຕິດໃສ່ໃບຄຳຮ້ອງມາພ້ອມ/*Remark: If exceed more than 10 items Please provide more table in additional page.*

3. ຈຸດປະສົງ/Purpose for: ........................................................................................................

4. ສິນຄ້າມີແຫຼ່ງກຳເນີດມາຈາກ /Origin of Goods ...................................ໜ່ວຍ/Unit.............. ຖະໜົນ/Street ....................ບ້ານ/Village:...................... ເມືອງ/District :........... ແຂວງ/Province.......................... ປະເທດ/Country:......................

5. ຊື່ ແລະ ທີ່ຢູ່ຂອງເຈົ້າຂອງສິນຄ້າ/Owner of the Goods and Address Mr./Ms.................................... ຊື່ບໍລິສັດ/ Name of Company: ............................................................ ບ້ານ/Village:...................ເມືອງ/District: ..........................ແຂວງ/Province.......................... ປະເທດ/Country: ……………………ໂທລະສັບ/Contact No....................................ອີເມລ/Email:........................................................................................

6. ສະຖານທີ່ປາຍທາງບ່ອນສິນຄ້າລົງ/Final destination: ໜ່ວຍ/Unit......... ບ້ານ/Village:........................ເມືອງ/District: .................. ແຂວງ (Province).......................................ປະເທດ/Country:........................ ໂທລະສັບ/Tel No.................................ອີເມລ/Email ..........................................................................

7. ນຳເຂົ້າ ຜ່ານດ່ານຂາເຂົ້າ ທີ່/Port of Entry at:.................................................................................

8. ສົ່ງອອກຜ່ານດ່ານຂາອອກ ທີ່/Port of Exit at:...................................................................................

9. ຂົນສົ່ງຜ່ານ ຜ່ານດ່ານຂາເຂົ້າ/In transit consignment through Lao PDR at Port of Entry...............................

10. ຜ່ານດ່ານຂາອອກ/Port of Exit.........................................................................................................

11. ສະຖານທີ່ກັກກັນສຸດທ້າຍ ກ່ອນນຳເຂົ້າ/ສົ່ງອອກ ສປປ ລາວ/Name of Final Quarantine before Entering/Exporting at.......................................................................................................................

12. ການນຳເຂົ້າ, ສົ່ງອອກ ໃນວັນທີ ເດືອນ ປີ/Consignment to take place on (dd/mm/yyyy)…………………………

ຂ້າພະເຈົ້າ ຂໍຮັບປະກັນວ່າ ຈະປະຕິບັດ ຕາມກົດໝາຍ ແລະ ລະບຽບການຕ່າງໆທີ່ກ່ຽວຂ້ອງ ຂອງ ສປປ ລາວ ຢ່າງເຄັ່ງຄັດ/I hereby certify that I will strictly follow every set rules and requirements of the Lao PDR related to the movement of items specified above.

ລາຍເຊັນຜູ້ຮ້ອງຂໍ
Signature of Applicant

**ເອກະສານປະກອບ:** ໃຫ້ໝາຍ ☑ ໃສ່ຫ້ອງຕໍ່ໜ້າເອກະສານ ລຸ່ມນີ້ ທີ່ກ່ຽວຂ້ອງກັບເງື່ອນໄຂຂອງການສະເໜີ/

**Attached Documents: Please tick ☑ in front of each item below that required for Application:**

1) ☐ ສຳເນົາບັດປະຈຳຕົວປະຊາຊົນ ຫຼື ໜັງສືເດີນທາງ /Copy of ID or Passport;
2) ☐ ສຳເນົາ ໃບທະບຽນວິສາຫະກິດ/Copy of Business License;
3) ☐ ໃບຢັ້ງຢືນສຸຂະພາບສັດ (ໃນມື້ນຳສິນຄ້າເຂົ້າຕົວຈິງ)/Animal Health Certificate;
4) ☐ ໃບຢັ້ງຢືນການະພັນສັດ (ກໍລະນີທີ່ນຳມາເປັນແນວພັນ) / Pedigree Certificate in case for breeding
5) ☐ ໃບຢັ້ງຢືນສຸຂານາໄມ ຫຼື ໃບຢັ້ງຢືນຄຸນະພາບ (ໃນມື້ນຳສິນຄ້າເຂົ້າຕົວຈິງ)/ Sanitary Certificate or Quality Certificate;
6) ☐ ໃບຢັ້ງຢືນການກັກກັນ / Certificate of Quarantine station;
7) ☐ ໃບແຈ້ງລາຄາສິນຄ້າ ແລະ ໃບແຈ້ງລາຍການສິນຄ້າ/ Invoice and Packing list;
8) ☐ ໃບແຈ້ງອະນຸຍາດ ຂອງ ປະເທດນຳເຂົ້າ ໃນກໍລະນີ ຂົນສົ່ງຜ່ານ/ Import Notification in case of In Transit through Lao PDR;
9) ☐ ໃບຢັ້ງຢືນ CITES ຖ້າເປັນສັດນ້ຳ-ສັດປ່າຫວງຫ້າມ ຫຼື ຄວບຄຸມຂອງສາກົນ/CITES Certificate;
10) ☐ ໃບມອບສິດຈາກຜູ້ຂໍນຳເຂົ້າ (ຖ້າຫາກໃຫ້ຜູ້ອື່ນມາດຳເນີນການແທນ)/ Power of Attorney in case of submitting document by a representative;
11) ☐ ໃບຢັ້ງຢືນມາດຕະຖານດ້ານເຕັກນິກກ່ຽວກັບ ຟາມ/ໂຮງຂ້າສັດ/ສະຖານທີ່ເກັບຮັກສາ/ບ່ອນຈຳໜ່າຍ ຕາມແຕ່ລະກໍລະນີ/Certificate for GAHP/GMP
12) ☐ ບົດລາຍງານການກວດກາຕົວຈິງຈາກອົງການຄຸ້ມຄອງທີ່ກ່ຽວຂ້ອງ ຂັ້ນ ເມືອງ ຫຼື ແຂວງ ໃນກໍລະນີ ທີ່ມີການຮຽກຮ້ອງ/ Report on site Inspection of relevant local authority if required.

## ເອກະສານຊ້ອນທ້າຍ 4: ແບບພິມໃບອະນຸຍາດນຳເຂົ້າ, ສົ່ງອອກ, ສົ່ງຜ່ານ ສັດ ແລະ ຜະລິດຕະພັນສັດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
Lao People's Democratic Republic
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
Peace Independence Democracy Unity Prosperity

**ແບບພິມ ຂອຜ 5/Form IET 5**

ກະຊວງກະສິກຳ ແລະ ປ່າໄມ້
Ministry of Agriculture and Forestry
ກົມລ້ຽງສັດ ແລະ ການປະມົງ
Department of Livestock and Fisheries

ເລກທີ/Ref. No:___________/ກລປ/DLF
ນະຄອນຫຼວງວຽງຈັນ, ວັນທີ/ Vientiane Capital, Date: ________

### ໃບອະນຸຍາດ/NOTIFICATION LETTER

☐ນຳເຂົ້າ ☐ສົ່ງອອກ ☐ຂົນສົ່ງຜ່ານ ☐ນຳເຂົ້າເພື່ອສົ່ງອອກ ສັດ, ສັດນ້ຳ, ຜະລິດຕະພັນສິນຄ້າກ່ຽວກັບສັດ ແລະ ການປະມົງ
☐ IMPORT ☐ EXPORT ☐ IN TRANSIT ☐ IMPORT FOR RE-EXPORT OF ANIMALS/ AQUATICS/ANIMAL-FISHERIES COMMODITY

- ອີງຕາມກົດໝາຍວ່າດ້ວຍ ການລ້ຽງສັດ ແລະ ການສັດຕະວະແພດ ເລກທີ 08/ສພຊ, ລົງວັນທີ 11 ພະຈິກ 2016/ Pursuant to the Law on the Livestock Production and Veterinary Matters, Ref.No. 08/NA, Dated 11 November 2016;
- ອີງຕາມກົດໝາຍວ່າດ້ວຍການປະມົງ ເລກທີ 03/ສພຊ ລົງວັນທີ 09 ກໍລະກົດ 2009/Pursuant to the Law on Fisheries, Ref.No. 03/NA, Dated 09 July 2009;
- ອີງຕາມຂໍ້ຕົກລົງຂອງລັດຖະມົນຕີວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົມລ້ຽງສັດ ແລະ ການປະມົງ ເລກທີ 3824/ກປ ລົງວັນທີ 18 ສິງຫາ 2017/Pursuant to the Decision of Agriculture and Forestry Minister, Ref.No. 3824/MAF, Dated 18 August 2017;
- ອີງຕາມຄຳຮ້ອງສະບັບເລກທີ/ Refer to the request letter Ref. No.:............/.........ລົງວັນທີ/Date .................................

ກົມລ້ຽງສັດ ແລະ ການປະມົງ ໄດ້ອອກໃບອະນຸຍາດສະບັບນີ້ ໃຫ້ທ່ານ/The Department of Livestock and Fisheries has issued this Notification Letter to /Mr./Ms...............................................................ສັນຊາດ/ Nationality...........................ອາຊີບ/ Profession............................ ຕາງໜ້າໃຫ້ບໍລິສັດ/Name of Company:.....................................ທີ່ຢູ່ຂອງບໍລິສັດ/Address: ໜ່ວຍ/Unit........ ບ້ານ/Village :..................................ເມືອງ/District: ................................ແຂວງ /Province.................................. ປະເທດ/Country: ................................................ ໂທລະສັບ/Telephone ........................................................ອີເມລ/ Email............................................................. ດັ່ງມີລາຍການສິນຄ້າ ດັ່ງນີ້/ as Following Items:

| ລ/ດ Item | ລາຍການສິນຄ້າ Description of goods | ຫົວໜ່ວຍ Unit | ຈຳນວນ Quantity | ນ້ຳໜັກລວມ Gross Weight | ມູນຄ່າລວມ Amount |
|---|---|---|---|---|---|
| 1. | | | | | |
| 2. | | | | | |
| 3. | | | | | |
| 4. | | | | | |

– ຊື່ດ່ານ/Name of Checkpoint at...........................ສົ່ງທາງ/Means of Transportation ...........................ຕາມເສັ້ນທາງ/ Route Plan ..........................................................................................................................................
– ສະຖານທີ່ປາຍທາງຂອງສິນຄ້າ/Final destination: ຖະໜົນ/Street............................ບ້ານ/Village:...............................ເມືອງ/ District:...............................ແຂວງ/Province..................................ປະເທດ/Country...............................................
– ໂທລະສັບ/Tel No.......................................

– ໃບແຈ້ງອະນຸມັດສະບັບນີ້ ໃຊ້ໄດ້..............................ວັນ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ/This Notification Letter is valid within........................days from the date of signature.

ດັ່ງນັ້ນ, ກົມລ້ຽງສັດ ແລະ ການປະມົງ ຈຶ່ງອອກໃບອະນຸຍາດ ສະບັບນີ້ ເພື່ອນຳໃຊ້ເປັນທາງການ ແລະ ຜູ້ທີ່ໄດ້ຮັບອະນຸມັດ ຕ້ອງປະຕິບັດຕາມກົດໝາຍແລະ ລະບຽບການຂອງ ສປປ ລາວ ຢ່າງເຂັ້ມງວດ/Therefore, DLF has issued this notification letter for official use and the authorized person stated above must be strictly followed law and regulation of the Lao PDR.

**ອອກໂດຍ/Issued by:**

**ຫົວໜ້າກົມລ້ຽງສັດ ແລະ ການປະມົງ/DG of DLF**

## ເອກະສານຊ້ອນທ້າຍ 5:      ແບບພິມໃບຢັ້ງຢືນສຸຂະພາບສັດ ແລະ ສຸຂານາໄມ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

Lao People's Democratic Republic

Peace Independence Democracy Unity Prosperity

**ແບບພິມ ຂອຜ 11 /Form IET11**

ກະຊວງ ກະສິກຳ ແລະ ປ່າໄມ້

Ministry of Agriculture and Forestry

ກົມລ້ຽງສັດ ແລະ ການປະມົງ

Department of Livestock and Fisheries        ເລກທີ/Referencenumber:................./ກລປ/DLF

ນະຄອນຫຼວງວຽງຈັນ,ວັນທີ/VientianeCapital, Date:...............

# ໃບຢັ້ງຢືນສຸຂະພາບສັດ
# ANIMAL HEALTH CERTIFICATE

ສຳລັບສົ່ງອອກສັດປະເພດ/ForExportAnimal Species:........................................

ຈາກ ສປປ ລາວ ໄປຍັງປະເທດ/From Lao PDR to Country:..................................

ກົມລ້ຽງສັດ ແລະ ການປະມົງ ສປປ ລາວ ໄດ້ຢັ້ງຢືນດ້ານສຸຂະພາບສັດປະເພດ..........................ເພື່ອການສົ່ງອອກ ໃຫ້ແກ່ຜູ້ໄດ້ຮັບອະນຸຍາດສົ່ງອອກ ຊຶ່ງມີລາຍລະອຽດດັ່ງຕໍ່ໄປນີ້/Department of Livestock and Fisheries Lao PDR issues the Animal Health Certificate to the authorized exporter as following details:

**<u>ພາກທີ I. ລາຍລະອຽດກ່ຽວກັບສິນຄ້າທີ່ຖືກຂົນສົ່ງ/Part I. Details of dispatched consignment</u>**

1. ຊື່ປະເທດ /Country name: ສປປ ລາວ/Lao PDR.

1.1 ຊື່ ແລະ ທີ່ຢູ່ ຂອງອົງການສັດຕະວະແພດ ຫຼື ອົງການທີ່ ອອກໃບຢັ້ງຢືນ /Name and address of Competent Authority: **ກົມລ້ຽງສັດ ແລະ ການປະມົງ, ກະຊວງກະສິກຳ ແລະ ປ່າໄມ້ ສປປ ລາວ, ຖະໜົນ ສຸພານຸວົງ, ບ້ານຂຸນຕາ, ນະຄອນຫຼວງວຽງຈັນ / Department of Livestock and Fisheries, MAF, Khounta Village, Sikodtabong District, Lao PDR, ເບີໂທ/Tel: +85621215242-3, ເບີໂທລະສານ/Fax: + 85621215141, ອີ ແມລ/Email:** laodlf@gmail.com, **ຕປນ/P.O.Box: 6644.**

1.2 ເລກທີໃບອະນຸຍາດດຳເນີນທຸລະກິດ ແລະ ໃບທະບຽນວິສາຫະກິດ/Business Operation permit number and Business Licensing Number:..........................................................................................

1.3 ຊື່ ແລະ ທີ່ຢູ່ ຂອງຜູ້ສົ່ງອອກ/Name and address of consignor:.........................................................

1.4 ຊື່ ແລະ ທີ່ຢູ່ ຂອງຜູ້ຮັບສິນຄ້າ/Name and address of consignee:.......................................................

1.5 ຊື່ປະເທດທີ່ນຳເຂົ້າສັດ/Name of the importing country:...............................................................

1.6 ຊື່ ເຂດ ຫຼື ສະຖານທີ່ແຫຼ່ງກຳເນີດສິນຄ້າ/ Name of the zone or compartment of origin:..........................
..........................................................................................................................

1.7 ຊື່ ແລະ ທີ່ຢູ່ ຂອງສະຖານທີ່ ກັກກັນສັດທີ່ກຽມຈະສົ່ງອອກ/Name and address of quarantine that issue the official approval........................................................................................................

1.8 ຊື່ດ່ານ ທີ່ຈະສົ່ງສັດອອກ (ດ່ານຊາຍແດນ, ທ່າເຮືອ ຫຼື ສະໜາມບິນ)/ Name of the place from which the animals are being shipped (this will be a land, sea or airport) ........................................................

.......................... ..........................................................................................................

1.9 ວັນ, ເດືອນ, ປີ ສົ່ງອອກ/ Date of departure:..........................................................................................

1.10 ສົ່ງອອກໂດຍທາງ, ນໍ້າເບີຖ້ຽວບິນ/ນໍ້າເບີ້ພາຫານະ/ນໍ້າເບີ້ຕູ້ບັນຈຸ/ນໍ້າເບີ້ຕູ້ລົດໄຟ ຫຼືອື່ນໆ/Means of transportat thetime the certificate is issued; flight number/name of vessel/ number of the train and the wagon/registration number of vehicle/number of the trailer where used:......................................................................................................................................

1.11 ຊື່ ຫຼື ລະຫັດສາກົນຂອງດ່ານກວດກາທີ່ຈະສົ່ງອອກ/ Name of expected border post and, if available, its UN/LOCODE (refer to the United Nations Code for Trade and Transport Locations)..................................................................................................................

1.12 ເລກທີ, ວັນ, ເດືອນ, ປີ, ວັນໝົດອາຍຸຂອງໃບອະນຸຍາດໄຊເຕສ ຖ້າເປັນ ສັດປ່າທີ່ຢູ່ໃນບັນຊີທີ່ ອົງການສົນທິສັນຍາສາກົນວ່າດ້ວຍການຄ້າຂາຍສັດນໍ້າ ແລະ ສັດປ່າທີ່ໃກ້ຈະສູນພັນກໍານົດ (CITES) permitnumber(s) if the commodity concerns specieslisted in the Convention on InternationalTrade in Endangered Species of Wild Fauna and Flora: ..............................................................................................................

1.13 ລາຍລະອຽດຂອງລາຍການສິນຄ້າຕາມລະບົບເອກະພາບຂອງອົງການພາສີສາກົນ/Describe the commodity or use the titles as they appear in theHarmonised System of the World Customs Organization:

........................................................................................................................................

1.14 ເລກລະຫັດ ສິນຄ້າ ຕາມລະບົບເອກະພາບຂອງອົງການພາສີສາກົນ/Commodity code (HS code) Heading or HS Code of the Harmonized System set up by theWorld Customs rganization:

........................................................................................................................................

1.15 ຈໍານວນລວມຂອງສິນຄ້າ/Total quantityof animals:..........................................................ໂຕ/ total count, ນໍ້າໜັກລວມ/ross weight:......................................kg.

1.16 ອຸນຫະພູມຂອງຜະລິດຕະພັນສໍາລັການຂົນສົ່ງ/Temperatureof products for transport and storage.:...........................ຖ້າຈໍາເປັນຕ້ອງມີ/ where required.

1.17 ຈໍານວນ ຕູ້ ຫຼື ກ່ອງບັນທຸກ/ບັນຈຸສັດທີ່ທໍາການຂົນສົ່ງ/ Total number of boxes, cages or stalls in which the animals are being transported:........................................................................................................

1.18 ເລກນໍ້າເບີຕູ້ບັນຈຸ/ເລກລະຫັດໜີບກົ່ວ/Identification of container/seal numberIdentifythe containers/seal numbers where required:.............................................................................................................

1.19 ປະເພດການຫຸ້ມຫໍ່ຕາມການກໍານົດຂອງອົງການສະຫະປະຊາຊາດເພື່ອການອໍານວຍຄວາມສະດວກດ້ານການຄ້າ /Type of Packaging Identify the type of packaging of products as defined in Recommendation No. 21– Code of Passengers, Type of Cargo, Package and Packaging Materials of UN/CEFACT (UnitedNation Centre for Trade Facilitation and Electronic Business):............................................................................................................................

1.20 ຈຸດປະສົງຂອງການສົ່ງອອກເພື່ອ/Commodities intended for use:...................................................................

1.21 ການເຮັດກາໝາຍໃສ່ສິນຄ້າ ຖ້າມີ /Mark, if appropriate:....................................................................

1.22 ລັກສະນະສະເພາະຂອງສິນຄ້າທີ່ມີຂໍ້ມູນເຊັ່ນ:/The specification/dentification of the commodity with the bellowing data such as:

1. ຊື່ສາມັນ ແລະ ຊື່ທາງວິທະຍາສາດກ່ຽວກັບຊະນິດສັດ/Species (scientific name):......................................

ໂດຍມີລາຍລະອຽດຂອງສັດ ດັ່ງນີ້/Identification of animals

| ລ/ດ/ Items | ພັນ/Breed | ເພດ/Sex | ອາຍຸ/Age (ດ/ m) | ນໍ້າເບີທະບຽນພິມສັດ/Identification (ear tag, tattoo, micro-chip, RFID) |
|---|---|---|---|---|
| | | | | |
| | | | | |
| | | | | |

| | | | | |
|---|---|---|---|---|
| | | | | |
| | | | | |

* ຖ້າຫາກເກີນ 5 ລາຍການ ໃຫ້ເຮັດຕາລະລາງເພີ່ມ ຄັດຕິດ/If more than 5 animals are shipped, an additional chart may be attached and is made an integral part of this certificate.

## ພາກທີ II ການຢັ້ງຢືນດ້ານສຸຂະພາບສັດ/Part II. Animal Health Certifications:

ກົມລ້ຽງສັດ ແລະ ການປະມົງ ສປປ ລາວ ຢັ້ງຢືນ ສະຖານະພາບດ້ານ ສຸຂະພາບສັດ ທີ່ກ່ຽວຂ້ອງກັບສິນຄ້າ ທີ່ໃຫ້ຂໍ້ມູນຢູ່ຂ້າງເທິງນັ້ນ ດັ່ງນີ້/ Veterinary Competent Authority of Lao PDR certifies that the animal(s) described above as follows:

ກ. **ສະຖານະພາບຂອງປະເທດ/A. The Country Status:**

1. ສປປ ລາວ ເປັນປະເທດປອດພະຍາດ ........................ຕາມເງື່ອນໄຂທີ່ອົງການສຸຂະພາບສັດສາກົນກຳນົດ/Lao PDR free of ...................................accordance withthe requirement of the Terrestrial Animal Health Code of the World Organization for Animal Health (OIE).

ຂ. **ສະຖານະພາບຂອງຟາມທີ່ເປັນແຫຼ່ງທີ່ມາຂອງສັດ/B. Establishment of Animal Origin:**

1. ຟາມລ້ຽງສັດ ໄດ້ຮັບອະນຸຍາດດຳເນີນທຸລະກິດຢ່າງຖືກຕ້ອງ ແລະ ຢູ່ພາຍໃຕ້ການກວດກາຕິດຕາມ ດ້ານສຸຂະພາບສັດ ຂອງອົງການຄຸ້ມຄອງວຽກງານລ້ຽງສັດ ແລະ ສັດຕະວະແພດຂອງ ສປປ ລາວ/The establishment are registered in the official veterinary service of the Lao PDR that oversees the health status of animals;
2. ບໍ່ເປັນຟາມລ້ຽງສັດ ທີ່ມີການລາຍງານພົບສັດເປັນພະຍາດ...............................................................................................................................................................................;
3. ຟາມແມ່ນຕັ້ງຢູ່ໃນເຂດ ເຝົ້າລະວັງ ແລະ ຄວບຄຸມພະຍາດ...........................................ຕາມເງື່ອນໄຂທີ່ອົງການສຸຂະພາບສັດສາກົນກຳນົດ/ The establishment of origin of animals are located in ................................ disease control zones in accordance with the requirement of the World Organization for Animal Health (OIE);

ຄ. **ສະຖານະພາບຂອງສຸຂະພາບສັດ/C. Animal Health Status:**

1. ສັດດັ່ງກ່າວແມ່ນເກີດ ແລະ ລ້ຽງຢູ່ ສປປ ລາວ ຫຼື ນຳເຂົ້າມາລ້ຽງ ຈາກປະເທດທີ່ມີສະຖານະດ້ານສຸຂະພາບສັດຄືກັນກັບ ສປປ ລາວ/Animal were born in Lao PDR or in country with similar animal health status;
2. ກ່ອນການສົ່ງອອກສັດດັ່ງກ່າວໄດ້ຖືກແຍກກັກກັນ ຢ່າງໜ້ອຍ .................. ວັນ ແລະ ໄດ້ມີການກວດກາສຸຂະພາບທຸກວັນ ໂດຍ ພົບວ່າ ສັດບໍ່ພົບອາການຂອງພະຍາດຕິດຕໍ່ /The animals were isolated for at least .................days immediately prior to export and the animals were inspected daily prior to export and found to be free from clinical evidence of communicable diseases.

ງ. **ຜົນການວິໄຈ/D. Test Requirement:**

1. ພາຍໃນເວລາ ...................ວັນ ໃນເວລາກັກກັນ ກ່ອນການສົ່ງອອກ ສັດດັ່ງກ່າວ ໄດ້ຖືກເກັບຕົວຢ່າງກວດກາວິໄຈດ້ວຍວິທີ .......................ໂດຍມີຜົນເປັນລົບ ຂອງພະຍາດຕໍ່ໄປນີ້/During the period of ......... days prior to shipment the animal were subjected to diagnostic tests by............................method with negative results to the following disease:
   1) ..........................................ດ້ວຍວິທີ/by......................................technic
   2) ..........................................ດ້ວຍວິທີ/by......................................technic
   3) ..........................................ດ້ວຍວິທີ/by......................................technic
   4) ........................................................ແລະ ໃນກໍລະນີມີຜົນການວິໄຈເປັນບວກ ໄດ້ດຳເນີນ ຢືນຢັນຄືນດ້ວຍວິທີ/In case of positive samples were subjected to the test by: ................................method;

**ພາກທີ III ການດູແລ, ບຳບັດ ແລະ ໃຫ້ຢາກັນພະຍາດ/Part III. Other Veterinary Treatments:**

1. ກ່ອນການສົ່ງອອກ ..............................ວັນ ສັດດັ່ງກ່າວ ໄດ້ຮັບການສັກຢາກັນພະຍາດ.................................. .....................................................................................................................................ຕາມ ວິທີການ ແລະ ເງື່ອນໄຂທີ່ອີງການຄຸ້ມຄອງວຽກງານລ້ຽງສັດ ແລະ ສັດຕະວະແພດຂອງ ສປປ ລາວ ກຳນົດ/The animal were vaccinated against ..........................disease accordance with the requirement of the Veterinary Services of Lao PDR;
2. ກ່ອນການສົ່ງອອກ ........................ວັນ ສັດໄດ້ຖືກຂ້າແມ່ກາຝາກພາຍນອກ ແລະ ພາຍໃນ ຕາມວັນເວລາ ແລະ ລາຍຊື່ຢາ ດັ່ງນີ້/ Within ......................days prior to export, the animals were inspected and treated for internal and external parasites by the date and the name of products as follows :....................... .....................................................................................................................................;
3. ສັດດັ່ງກ່າວ ຈະໄດ້ ຜ່ານການກວດກາດ້ານສັດຕະວະແພດຢູ່ດ່ານສົ່ງອອກພາຍໃນ ............. ຊົ່ວໂມງຕື່ມອີກ/The animals will receive veterinary inspection at the port of embarkation, within .................. hours of export;
4. ພາຫານະຂົນສົ່ງສັດ ແມ່ນ ເໝາະສົມ ປອດໄພ, ສະອາດ ແລະ ໄດ້ຮັບການຂ້າເຊື້ອ ດ້ວຍຢາຂ້າເຊື້ອທີ່ ກົມລ້ຽງສັດ ແລະ ການປະມົງຮັບຮອງ ກ່ອນການຂົນສົ່ງ/The animal were transported in such a way as to avoid direct contact with animals of adverse health conditions in cleaned vehicles and were disinfected by disinfectant that recommended by Department of Livestock and FisheriesLao PDR.

**ຢັ້ງຢືນໂດຍ ສັດຕະວະພດຜູ້ດຳເນີນການກວດກາສຸຂະພາບສັດ/**
**Issued by Authorized Veterinarian**

..................................................................
**ລາຍເຊັນ ແລະ ຊື່ເຕັມ**

**ຢັ້ງຢືນໂດຍ ຫົວໜ້າກົມລ້ຽງສັດ ແລະ ການປະມົງ/**
**Certified by Director General of Department of Livestock and Fisheries Lao PDR**

..................................................................
**ລາຍເຊັນ ແລະ ປະທັບຕາ/Signature and Stamp**

## ເອກະສານຊ້ອນທ້າຍ 6: ແບບພິມໃບຢັ້ງຢືນການກວດກາຢູ່ດ່ານ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
Lao People's Democratic Republic
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
Peace Independence Democracy Unity Prosperity

**ແບບພິມ ຂອຜ 7/Form IET7**

ກົມລ້ຽງສັດ ແລະ ການປະມົງ
Department of Livestock and Fisheries
ຂະແໜງລ້ຽງສັດ ແລະ ການປະມົງ ນະຄອນຫຼວງ/ແຂວງ.......................
Provincial Livestock and Fisheries Section.........................
ດ່ານກວດກາສັດຕະວະແພດສາກົນ ເລກທີ/Ref no:............/.......
Veterinary International Check Point at .......................... ວັນທີ/Date:...................

## ໃບຢັ້ງຢືນການກວດກາຢູ່ດ່ານ/Veterinary Inspection Certification

☐ນຳເຂົ້າ (Import) ☐ສົ່ງອອກ (Export) ☐ນຳເຂົ້າເພື່ອສົ່ງອອກ (Import for Re-Export) ☐ຂົນສົ່ງຜ່ານ (In Transit)
ສັດ, ສັດນ້ຳ, ຜະລິດຕະພັນສິນຄ້າກ່ຽວກັບສັດ ແລະ ການປະມົງ
Of Animals, Aquatic animals/Animal products /Livestock and Fisheries related Commodity

ດ່ານກວດກາສັດຕະວະແພດສາກົນ/ International Animal Check Point (IAC).......................... ໄດ້ອອກ ໃບຢັ້ງຢືນການກວດກາໃຫ້ແກ່ບຸກຄົນ/ການຈັດຕັ້ງ/ຫຼື ບໍລິສັດ ຊື່/Issues this Certification to Mr /Mrs /Ms.: ..................................ເບີໂທລະສັບ/Tel:.................................. ເລກທີໜັງສືເດີນທາງ/ID or Passport No:...............ທີ່ຢູ່/Address, ບ້ານ/Village:......................... ເມືອງ/District:.................................... ນະຄອນຫຼວງ/ແຂວງ/Province:..............................................ດັ່ງລາຍລະອຽດລຸ່ມນີ້/as following items:

| ລ/ດ<br>Items | ລາຍການສິນຄ້າ<br>Description of Goods | ຫົວໜ່ວຍ<br>Unit | ຈຳນວນ<br>Quantity | ນ້ຳໜັກລວມ (kg)<br>Gross weight | ໝາຍເຫດ<br>Remarks |
|---|---|---|---|---|---|
| 1 | | | | | |
| 2 | | | | | |
| 3 | | | | | |
| 4 | | | | | |
| ....... | | | | | |
| ລວມ | | | | | |

**ຜົນຂອງການກວດກາທາງດ້ານສັດຕະວະແພດ/Veterinary inspection results:**

- ດ້ານເອກະສານ ☐ຖືກຕ້ອງ ☐ບໍ່ຖືກຕ້ອງ ☐ ບໍ່ຄົບໃຫ້ປະກອບເອກະສານເພີ່ມ
  ☐Correct ☐Not correct ☐ Reapply

- ການກວດກາດ້ານວັດຖຸ

☐ຜ່ານ ☐ບໍ່ຜ່ານ ສົ່ງກັບ ☐ ຜ່ານໄປຕິດຕາມຢູ່ສະຖານທີ່ກັກກັນ

☐ Passed ☐ Reject and return the goods ☐ Subject to quarantine

- ການກວດກາທາງຫ້ອງວິໄຈ

☐ ລົບ ☐ ບວກ ☐ ພົບຄ່າໃນເກນມາດຕະຖານ ☐ ພົບຄ່າເກີນມາດຕະຖານ

☐ Negative ☐ Positive ☐ Acceptable Level ☐ Exeed than acceptable Level

☐ ເກັບຕົວຢ່າງສົ່ງເຂົ້າຫ້ອງວິໄຈສູນກາງ/Collect sample for submission to Central Lab.

**ຄຳເຫັນ/Comments:**........................................................................................................

| ປະທັບກາ/Stamp | ລາຍເຊັນ ຫົວໜ້າດ່ານກວດກາສັດຕະວະແພດສາກົນ/ Name and Signature Chief of IAC<br><br>............................................... | ຊື່ ແລະ ລາຍເຊັນເຈົ້າໜ້າທີ່ສັດຕະວະແພດ ຜູ້ກວດກາ/Name and signature of Veterinary Inspector<br><br>............................................... |
|---|---|---|
| | | |

## ເອກະສານຊ້ອນທ້າຍ 7: ແບບພິມໃບຢັ້ງຢືນການກັກກັນສັດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

Lao People's Democratic Republic

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

Peace Independence Democracy Unity Prosperity

**ແບບພິມ ຂອຜ 8/Form IET8**

ກົມລ້ຽງສັດ ແລະ ການປະມົງ

Department of Livestock and Fisheries

ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ

District Agriculture and Forestry:.......................... ເລກທີ/Ref no:................/.......

ທີ່/At ................ວັນທີ/Date:......................

# ໃບຢັ້ງຢືນການກັກກັນສັດ/Veterinary Certificate of Quarantine

☐ນຳເຂົ້າ (Import) ☐ສົ່ງອອກ (Export) ☐ນຳເຂົ້າເພື່ອສົ່ງອອກ (Import for Re-Export) ☐ຂົນສົ່ງຜ່ານ (In Transit)

ສັດ, ສັດນ້ຳ, ຜະລິດຕະພັນສິນຄ້າກ່ຽວກັບສັດ ແລະ ການປະມົງ

Of Animals, Aquatic animals/Animal products /Livestock and Fisheries related Commodity

### 1. ຂໍ້ມູນຜູ້ກວດກາ ແລະ ເຈົ້າຂອງສິນຄ້າ/Inspector and Owner Information

| | ຊື່ ແລະ ນາມສະກຸນ | ທີ່ຢູ່ | ອີແມລ | ເບີໂທລະສັບ |
|---|---|---|---|---|
| ສັດຕະວະແພດຜູ້ກວດກາ | | | | |
| ເຈົ້າຂອງສິນຄ້າ | | | | |

### 2. ລາຍການສິນຄ້າທີ່ຖືກກັກກັນ/Description of goods to be Quarantined:

| ລ/ດ Items | ຊື່ລາຍການສິນຄ້າ Description of Goods | ວັນ ເດືອນ ປີ ເອົາເຂົ້າກັກກັນ/Entered quarantine date | ຈຳນວນ/ Quantity | ວັນ ເດືອນ ປີ ເອົາອອກຈາກສະຖານທີ່ກັກກັນ/ Proposed release date | ຈຳນວນ/ Quantity |
|---|---|---|---|---|---|
| 1 | | | | | |
| 2 | | | | | |
| 3 | | | | | |
| 4 | | | | | |
| 5 | | | | | |
| | | | | | |

3. ສະຫຼຸບຫຍໍ້ ຜົນຂອງການກວດກາ ລວມທັງ ການວິໄຈເພີ່ມເຕີມ, ການກວດສຸຂະພາບ, ການບັນທຶກການເຈັບ ແລະ ຕາຍຂອງສັດ/ Summary of other findings, including additional tests, physical examinations, illness/deaths:

..........................................................................................................................................

..........................................................................................................................................

..........................................................................................................................................

4. ຜົນຂອງການກວດກາວິໄຈ/Other Testing Results:

| ປະເພດສັດ | | | | |
|---|---|---|---|---|
| | ວິໄຈຄັ້ງທຳອິດ/First testing | | ວິໄຈຊ້ຳຄືນ/Retesting | |
| ວັນ ເດືອນ ປີ ວິໄຈ/date of testing | ............................................. | | ............................................. | |
| ວິທີການວິໄຈ/test method | ............................................. | | ............................................. | |
| ຊະນິດຂອງແອນຕິເຈນ/type of antigen | ............................................. | | ............................................. | |
| ຊື່ຜູ້ຜະລິດແອນຕິເຈນ/antigen manufucturer | ............................................. | | ............................................. | |
| ຊຸດການຜະລິດ/Production batch No | ............................................. | | ............................................. | |
| ຈຳນວນສັດທີ່ຖືກວິໄຈ/Number tested animal | ............................................. | | ............................................. | |
| ບ່ອນສັກແອນຕິເຈນ/mode of injection | ............................................. | | ............................................. | |
| ເວລາການຕອບສະໜອງ ຫຼື ເຫັນຜົນການວິໄຈ/duration of response | ຈຳນວນພົບເປັນບວກ/number of positive | ຈຳນວນພົບເປັນລົບ/number of negative | ຈຳນວນພົບເປັນບວກ/number of positive | ຈຳນວນພົບເປັນລົບ/number of negative |
| | | | | |

5. ການຢັ້ງຢືນ ການສັກຢາກັນພະຍາດ/Vaccination Certifications:

| ປະເພດສັດ/Species | ............................................................................ | | | | | |
|---|---|---|---|---|---|---|
| ຊື່ວັກຊິນ/Name of vaccine | ວັນເດືອນປີ ຮັບວັກຊິນເຂັມທຳອິດ/date of first dose | ຊຸດການຜະລິດ/production batch number | ຈຳນວນສັດ/number of animals were vaccinated | ວັນເດືອນປີ ຮັບວັກຊິນເຂັມທີສອງ/date of second dose | ຊຸດການຜະລິດ/production batch number | ຈຳນວນສັດ/number of animals were vaccinated |
| 1................. | | | | | | |

| | | | | | | |
|---|---|---|---|---|---|---|
| 2................ | | | | | | |
| 3.................. | | | | | | |

6. ການຢັ້ງຢືນ ການຂ້າແມ່ກາຝາກ/Deworming Certifications:

| ປະເພດ ສັດ/Species | .............................................................................................. | | | | | |
|---|---|---|---|---|---|---|
| Name of antiparasitic | ວັນເດືອນປີ ຮັບຢາ ຄັ້ງທຳ ອິດ/date of first dose | ຊຸດການ ຜະລິດ/production batch number | ຈຳນວນ ສັດ/number of animals were vaccinated | ວັນເດືອນ ປີ ຮັບຢາ ຄັ້ງທີ ສອງ/date of second dose | ຊຸດການ ຜະລິດ/production batch number | ຈຳນວນ ສັດ/number of animals were vaccinated |
| 1.................. | | | | | | |
| 2................ | | | | | | |
| 3.................. | | | | | | |

ພາຍໃຕ້ການກວດກາ ແລະ ຕິດຕາມ ຕາມຫຼັກວິຊາການ, ຂ້າພະເຈົ້າຂໍຢັ້ງຢືນວ່າ: ສັດທີ່ໄດ້ນຳເຂົ້າ ຕາມໃບອະນຸຍາດ ຂອງກົມລ້ຽງສັດ ແລະ ການປະມົງ ເລກທີ...................ລົງວັນທີ ........................ໄດ້ຖືກແຍກກັກກັນ, ກວດກາ ສຸຂະພາບຕາມຫຼັກວິຊາການ ໂດຍເຫັນວ່າ ສັດດັ່ງກ່າວແມ່ນບໍ່ມີອາການຂອງພະຍາດຕິດຕໍ່ຮ້າຍແຮງ ທີ່ຈະມີຜົນກະທົບຕໍ່ ສຸຂະພາບຂອງສັດ ແລະ ຄົນ ຈຶ່ງອະນຸມັດໃຫ້ນຳອອກຈາກ ສະຖານທີ່ກັກກັນໄດ້/ I hereby certify that the animals imported under Permit issued by the Department of Livestock and Fisheries ref no....................................dated on................................. have completed the quarantine, under my supervision. I have examined said animals and find that those to be released from quarantine are free from signs of contagious or infectious disease of public health concerns.

ທີ່/At.............................................ວັນທີ ເດືອນ ປີ/date month year.......................................

ລາຍເຊັນ ຂອງພະນັກງານສັດຕະວະແພດຜູ້ກວດກາ/Veterinary Inspector's Signature

..........................................................